ເອກະສານຊ້ອນທ້າຍ 5: ເອກະສານມາດຕະການການປ້ອງກັນຜົນກະທົບທາງສິ່ງແວດລ້ອມ ແລະ ສັງຄົມ, ລວມເຖິງການຈັດອັນດັບ (ຂອບການຄຸ້ມຄອງ ສິ່ງແວດລ້ອມ ແລະ ສັງຄົມ (ESMF) ຖ້າຫາກນຳໃຊ້ໄດ້, ການກວດຄັດກອງທາງດ້ານສິ່ງແວດລ້ອມ ແລະ ສັງຄົມ (ESS SCREEN), ແຜນງານການມີສ່ວນຮ່ວມຂອງພາກສ່ວນທີ່ກ່ຽວຂ້ອງ)

# ເຄື່ອງມືການກວດຄັດກອງມາດຕະການປ້ອງກັນຜົນກະທົບທາງດ້ານສິ່ງແວດລ້ອມ ແລະ ສັງຄົມຂອງອົງການ WWF ສຳລັບແຕ່ລະໂຄງການ

## ດັດປັບໃຫ້ແທດເໝາະກັບໂຄງການ GEF/GCF ທີ່ດຳເນີນການໂດຍ ອົງການ WWF

## ການຈັດອັນດັບ: ປະເພດ C

## ສ່ວນທີ I: ຂໍ້ມູນໂຄງການທົ່ວໄປ (ຕື່ມໂດຍໜ່ວຍງານ GEF/GCF ຂອງອົງການ WWF)

*ກະລຸນາຕື່ມຂໍ້ມູນທົ່ວໄປທີ່ກ່ຽວກັບໂຄງການໃນ ໃສ່ໃນຕາຕະລາງ ຂ້າງລຸ່ມນີ້. ຄຳແນະນຳຂອງການຕື່ມແມ່ນຂຽນເປັນໜັງສືສີຟ້າ.*

| | |
|---|---|
| ຊື່ໂຄງການ: | ການສົ່ງເສີມການແກ້ໄຂບັນຫາແບບໝູນວຽນຕໍ່ກັບການນຳໃຊ້ປລາສຕິກທີ່ນຳໃຊ້ເທື່ອດຽວໃນ ສປປ ລາວ |
| ທີ່ຕັ້ງຂອງໂຄງການ: | ສປປ ລາວ – ນະຄອນຫຼວງວຽງຈັນ, ເມືອງ ວັງວຽງ ແລະ ຫຼວງພະບາງ |
| ID ໂຄງການ GEF/GCF | GEF ID: 11190 |
| ID ໜ່ວຍງານໂຄງການ | G0042 |

| | |
|---|---|
| ອົງກອນ/ໜ່ວຍງານທີ່ດຳເນີນການ: | ອົງການ WWF ລາວ |
| ຄູ່ຮ່ວມງານໂຄງການ: | ກົມສິ່ງແວດລ້ອມ, ກຊສ; ອົງການ Swiss Contact; ອົງການ Plan International |
| ໄລຍະເວລາໂຄງການ: | 60 ເດືອນ |
| ງົບປະມານໂຄງການທັງໝົດ: | USD 4.5 ລ້ານ |
| ບຸກຄົນທີ່ມີສ່ວນຮ່ວມໃນການຕື່ມຂໍ້ມູນໃສ່ໃນເຄື່ອງມືການກວດຄັດກອງນີ້: | ກະລຸນາລະບຸຊື່ ແລະ ຫ້ອງການ<br>ໜ່ວຍງານ WWF-US GEF |

ຈຸດປະສົງ ແລະ ກິດຈະກຳຂອງໂຄງການ

ຈຸດປະສົງ - ຫຼຸດຜ່ອນການນຳໃຊ້ເຄື່ອງບັນຈຸພັນອາຫານ ແລະ ເຄື່ອງດື່ມປລາສຕິກທີ່ໃຊ້ເທື່ອດຽວອັນເປັນບັນຫາ ແລະ ເພີ່ມສ່ວນແບ່ງທາງການຕະຫຼາດຂອງທາງເລືອກທີ່ຍືນຍົງຫຼາຍຂຶ້ນ ຜ່ານວິທີການຄຸ້ມຄອງເລີ່ມຈາກຕົ້ນທາງ ແລະ ກາງທາງໂດຍຕັ້ງເປົ້າໝາຍໄປທີ່ຜູ້ສ້າງນະໂຍບາຍ, ພາກສ່ວນເອກະຊົນ ແລະ ຜູ້ມີສ່ວນຮ່ວມໃນທ້ອງຖິ່ນ, ແລະ ຜູ້ບໍລິໂພກ.

**1. ການກຳນົດລະບຽບການວ່າດ້ວຍການຫຼຸດຜ່ອນການນຳໃຊ້ປລາສຕິກທີ່ໃຊ້ເທື່ອດຽວ (SUPs) ແລະ ເພີ່ມສິ່ງທົດແທນທີ່ຍືນຍົງ ແລະ ສາມາດເຂົ້າເຖິງໄດ້.**

*1.1 ປັບປຸງສະພາບແວດລ້ອມທີ່ເອື້ອອຳນວຍ ແລະ ການຮ່ວມມືລະຫວ່າງຂະແໜງການເພື່ອຍຸດຕິ*ການນຳໃຊ້ປລາສຕິກທີ່ໃຊ້ເທື່ອດຽວ (SUPs), *ໂດຍສະເພາະ* ປລາສຕິກທີ່ເປັນ*ບັນຫາໃນຂະແໜງອາຫານ ແລະ ເຄື່ອງດື່ມ, ແລະ* ນຳສະເໜີສິ່ງ*ທົດແທນ*ອັນເປັນມິດຕໍ່*ສິ່ງແວດລ້ອມ ແລະ ສັງຄົມ* ທີ່*ສາມາດເຂົ້າເຖິງໄດ້, ຄຸ້ມຄ່າ*ຕົ້ນທຶນ *ແລະ* ສ້າງການໝູນວຽນໄດ້.

1.1.1 ພັດທະນານະໂຍບາຍແຫ່ງຊາດທີ່:

- ຫຼຸດ ແລະ ຍຸດຕິການນຳໃຊ້ ປລາສຕິກທີ່ໃຊ້ເທື່ອດຽວທີ່ເປັນບັນຫາ (ເຊັ່ນ: ການເກັບພາສີຜະລິດຕະພັນປລາສຕິກສູງຂຶ້ນ)

- ສົ່ງເສີມການຊົມໃຊ້ວັດສຸດ/ ຜະລິດຕະພັນທົດແທນ (ເຊັ່ນ: ການຫຼຸດຜ່ອນພາສີ, ການໃຫ້ເງິນອຸດຫນູນ)

1.1.2 ພັດທະນາແຜນການຈັດຕັ້ງປະຕິບັດຂັ້ນເມືອງ ເພື່ອແນໃສ່ຍຸດຕິການຊົມໃຊ້ ປລາສຕິກທີ່ໃຊ້ເທື່ອດຽວທີ່ເປັນບັນຫາ ໃນຂະແໜງອາຫານ ແລະ ເຄື່ອງດື່ມ ໃນ 3 ຕົວເມືອງເປົ້າໝາຍ (ນະຄອນຫຼວງ, ວັງວຽງ ແລະ ຫຼວງພະບາງ)

1.1.3 ພັດທະນາ ແລະ ສ້າງຄຸນຄ່າການຍັ້ງຢືນສີຂຽວ ລວມເຖິງການຮວມນະໂຍບາຍທີ່ກ່ຽວຂ້ອງໃຫ້ກວ້າງຂວາງດ້ານເນື້ອໃນເພີ້ມຂຶ້ນ (ຕົວຢ່າງ: ອົງການ ສປປ ລາວ ປາສະຈາກ ປລາສຕິກ - Plastic Free Laos, ອົງການ ລາວຍືນຍາວ - Lasting Laos):

- ສ້າງເງື່ອນໄຂທີ່ກ່ຽວຂ້ອງກັບປລາສຕິກ ຕໍ່ກັບ ປລາສຕິກທີ່ໃຊ້ເທື່ອດຽວ ໃນຂະແໜງອາຫານ ແລະ ເຄື່ອງດື່ມ

- ສ້າງປຶດແນະນຳທີ່ສອດຄ້ອງໃນການຈັດຕັ້ງປະຕິບັດ ແລະ ການປັບໃຊ້ໃນທຸລະກິດ

- ເສີມສ້າງຄວາມສາມາດຂອງຜູ້ຝຶກສອນ ແລະ ຜູ້ປະເມີນ ຈາກ ສະພາການຄ້າ ແລະ ອຸດສາຫະກຳແຫ່ງຊາດລາວ (ສຄອຊ)  ກ່ຽວກັບເງື່ອນໄຂຂອງ ປລາສຕິກທີ່ໃຊ້ເທື່ອດຽວ ໃນຂະແໜງອາຫານ ແລະ ເຄື່ອງດື່ມ ແລະ ວັດສະດຸທົດແທນ

**2. ການມີສ່ວນຮ່ວມຂອງວິສາຫະກິດ ແລະ ການພັດທະນາຜະລິດຕະພັນ/ການບໍລິການ/ທຸລະກິດ**

*2.1 ເຂົ້າໃຈເຖິງລະບົບຕ່ອງໂສ້ອຸປະທານ ແລະ ຕະຫຼາດ* ຕໍ່ກັບ*ທາງເລືອກ*ໃນການເຂົ້າເຖິງດ້ານ*ການເງິນ ແລະ ສັງຄົມ* ທີ່ກ່ຽວກັບ ປລາສຕິກທີ່ໃຊ້ເທື່ອດຽວໃນຂະແໜງການ*ອາຫານ ແລະ ເຄື່ອງດື່ມໃນລາວ.*

2.1.1 ການວິເຄາະການໄຫຼຂອງວັດສະດຸທົດແທນ ຕໍ່ກັບ ປລາສຕິກທີ່ໃຊ້ເທື່ອດຽວ

2.1.2 ດຳເນີນການວິໄຈຕະຫຼາດເພື່ອເຂົ້າໃຈເຖິງຂະໜາດຕະຫຼາດ ແລະ ພຶດຕິກຳການຊື້ຂອງຜູ້ບໍລິໂພກທີ່ຫຼາກຫຼາຍ

*2.2 ສົ່ງເສີມການພັດທະນາວິສາຫະກິດ* ທີ່ຜະລິດ ສິນຄ້າ ແລະ ການບໍລິການທົດແທນ*ຜະລິດຕະພັນ*ປລາສຕິກທີ່ໃຊ້ເທື່ອດຽວພາຍໃນປະເທດ ໃນ *ໃນຂະແໜງອາຫານ ແລະ ເຄື່ອງດື່ມຂອງລາວ.*

2.2.1 ໂຄງການບົ່ມເພາະທຸລະກິດສຳລັບທຸລະກິດແລະອົງການ ເພື່ອສະໜັບສະໜູນສິ້ນຄ້າ ແລະ ແຜນການທົດແທນຜະລິດຕະພັນປາສຕິກທີ່ໃຊ້ເທື່ອດຽວ, ກະຕຸ້ນການອອກແບບ ແລະການພັດທະນາຕົ້ນແບບແລະການບໍລິການ.

2.2.2 ຈັດການແຂ່ງຂັນ Eco-Challenge ເພື່ອຄົ້ນຫາແນວຄິດ ແລະ ແນວຄວາມຄິດທາງທຸລະກິດໃນ ສປປ ລາວ.

2.2.3 ໂຄງການສົ່ງເສີມທຸລະກິດເພື່ອເລັ່ງການເຕີບໂຕ: ສະໜັບສະໜູນດ້ານເຕັກນິກແລະໃຫ້ຄຳແນະນຳກັບຜູ້ຊະນະການແຂ່ງຂັນ (ຕົວຢ່າງ, ການທົດສອບສິນຄ້າ, ການຄັດເລືອກ ແລະ ປະເມີນຄວາມເໝາະສົມຂອງຜະລິດຕະພັນ , ການຕະຫຼາດ, ການວາງແຜນທຸລະກິດ) (ລວມເຖິງການຊ່ວຍເຫຼືອທາງດ້ານທຶນຮອນຈາກ FFEM)

2.2.4 ທົດລອງຜະລິດຕະພັນ / ການບໍລິການໃໝ່ໃນ ທຸລະກິດການທ່ອງທ່ຽວ ແລະ ການບໍລິການທີ່ນອນໃນໂຄງການທົດລອງ(ອົງປະກອບ 3 ໂຄງການທົດລອງ)

**3. ສົ່ງເສີມທຸລະກິດການທ່ອງທ່ຽວ ແລະ ການໂຮງແຮມ ລວມເຖິງການຕະຫຼາດ**

*3.1 ສະໜັບສະໜູນທຸລະກິດການທ່ອງທ່ຽວ ແລະ ການໂຮງແຮມຜ່ານການຊ່ວຍເຫຼືອດ້ານວິຊາການ ແລະ ການໃຫ້ຄຳປຶກສາ*

3.1.1 ໃຫ້ການສະໜັບສະໜູນ ແລະ ການໃຫ້ຄຳປຶກສາແກ່ທຸລະກິດການທ່ອງທ່ຽວ/ໂຮງແຮມ ເພື່ອຢຸດຕິການຊົມໃຊ້ປລາສຕິກທີ່ໃຊ້ເທື່ອດຽວອັນເປັນບັນຫາ ແລະ ສຳເລັດການຫັນປ່ຽນໄປສູ່ວິທີການທີ່ຍືນຍົງກວ່າ.

3.1.2 ສະໜັບສະໜູນການຍັ້ງຍືນ ຜ່ານການຝຶກອົບຮົມ, ການໃຫ້ຄໍາປຶກສາ, ການກວດສອບ ແລະ ການມອບລາງວັນ

3.1.3 ສົ່ງເສີມແນວທາງການປະຕິບັດສຸຂະອະນາໄມສໍາລັບທາງເລືອກຂອງຜະລິດຕະພັນອາຫານ ແລະ ເຄື່ອງດື່ມທີ່ນໍາໃຊ້ຄືນໃໝ່ໄດ້

*3.2 ບັນລຸການປ່ຽນແປງພຶດຕິກໍາ ໃນການຊື້ແລະການນໍາໃຊ້ ຜ່ານການຕະຫຼາດ*

3.2.1 ພັດທະນາຍຸດທະສາດການຕະຫຼາດເພື່ອສົ່ງເສີມຜະລິດຕະພັນແລະການບໍລິການໃໝ່, ແນວທາງການປະຕິບັດທີ່ດີທີ່ສຸດ, ແລະ ການຍັ້ງຢືນ

3.2.2. ເປີດຕົວແຄມເປນການຕະຫຼາດທີ່ແນໃສ່ຫຼາກຫຼາຍຊຸມຊົນ ເພື່ອສົ່ງເສີມໃຫ້ມີການຫັນປ່ຽນຈາກ ການຊົມໃຊ້ປາລຕິກທີ່ໃຊ້ເທື່ອດຽວ ໄປສູ່ ຜະລິດຕະພັນ ແລະ ການບໍລິການທາງເລືອກທີ່ສາມາດເຂົ້າເຖິງໄດ້.

**4. ການຈັດການຄວາມຮູ້, ການສື່ສານ ແລະ ການປະສານງານ**

*4.1. ບົດຮຽນ, ຄວາມຮູ້ ແລະ* ແນວທາງ*ການປະຕິບັດທີ່ດີທີ່ສຸດຈາກໂຄງການແມ່ນໄດ້ຖືກແບ່ງປັນໃນທົ່ວປະເທດລາວ, ພາກພື້ນ ແລະ ທົ່ວໂລກ ເພື່ອກໍ່ ໃຫ້ເກີດມີປະສົບການການຮຽນຮູ້ຮ່ວມກັນ ແລະ ຍົກລະດັບການລິເລີ່ມ* ດັ່ງກ່າວ.

4.1.1. ຍຸດທະສາດການສື່ສານໂຄງການທີ່ຖືກພັດທະນາໂດຍຜ່ານການປຶກສາຫາລືກັບຄູ່ຮ່ວມງານ ແລະຜູ້ມີສ່ວນຮ່ວມທີ່ກ່ຽວຂ້ອງ ແລະ ໄດ້ຮັບການຈັດຕັ້ງປະຕິບັດ.

4.1.2. ພັດທະນາ ແລະ ເຜີຍແຜ່ຄວາມຮູ້ດ້ານຜະລິດຕະພັນ ໃນຫຼາຍພາສາ ແລະ ຮູບແບບ ທີ່ສາມາດເຂົ້າເຖິງໄດ້ໂດຍອີງໃສ່ບົດຮຽນຂອງໂຄງການ, ລວມທັງງານວາງສະແດງການຄ້າ

*4.2. ການປະສານງານກັບໂຄງການລະດັບ ໂລກ*

4.2.1 ປະສານງານກັບໂຄງການ GEF ລະດັບພາກພື້ນ ແລະລະດັບຊາດ ແລະໂຄງການລະດັບໂລກ (ໂຄງການສົ່ງເສີມການແກ້ໄຂບັນຫາແບບໝູນວຽນຕໍ່ກັບມົນລະພິດຈາກປລາສຕິກທີ່ໃຊ້ເທື່ອດຽວໃນລາວ), ລວມທັງການເຂົ້າຮ່ວມກອງປະຊຸມສໍາມະນາປະຈໍາປີ, ການສໍາມະນາຜ່ານ webinars, ແລະກອງປະຊຸມອອນໄລນ໌ ອື່ນໆ.

ການຕິດຕາມ ແລະ ການປະເມີນຜົນ **(M&E)**

M&E a. ການຕິດຕາມແລະປະເມີນຜົນທີ່ມີປະສິດທິພາບຢ່າງຕໍ່ເນື່ອງ

M&E a.1.1. ລາຍງານຄວາມຄືບໜ້າຂອງໂຄງການຢ່າງທັນການ ແລະ ຕິດຕາມຜົນຕາມ (a) ແຜນວຽກປະຈໍາປີ ແລະ (b) ກອບຜົນໄດ້ຮັບ

M&E a.1.2 ການປະເມີນຜົນຊ່ວງກາງ ແລະ ທ້າຍໄລຍະຂອງໂຄງການຢ່າງເປັນເອກະລາດ, ລວມທັງການປະເມີນຜົນກະທົບທາງບົດບາດຍິງຊາຍ.

## ພາກທີ II: ກິດຈະກຳທີ່ຍົກເວັ້ນ ແລະ ມີຄວາມສ່ຽງຕ່ຳ

*ກະລຸນາຕອບຄຳຖາມໃນສອງຕາຕະລາງ ໂດຍສະທ້ອນຈາກຂໍ້ມູນໃນຢູ່ໃນສ່ວນຈຸດປະສົງຂອງໂຄງການແລະກິດຈະກຳຂ້າງເທິງ.*

## ຕາຕະລາງ 1: ກິດຈະກຳທີ່ຍົກເວັ້ນ

| **ກິດຈະກຳທີ່ຍົກເວັ້ນ** | *ແມ່ນ/ບໍ່ແມ່ນ/ບໍ່ແນ່ໃຈ* | *ຖ້າຄຳຕອບແມ່ນ "ແມ່ນ" ຫຼື "ບໍ່ແນ່ໃຈວ່າ", ກະລຸນາລະບຸ:* |
|---|---|---|
| ແມ່ນກິດຈະກຳທີ່ສະເໜີໃນໂຄງການ ຫາກເປັນກິດຈະກຳສ່ວນທີ່ຖືກຍົກເວັ້ນດັ່ງລຸ່ມນີ້:<br>- ການຈັດຊື້/ນຳໃຊ້ອາວຸດຍຸດໂທປະກອນ<br>- ການເຄື່ອນໄຫວທາງທະຫານ<br>- ກິດຈະກຳທີ່ກ່ຽວຂ້ອງກັບ ການບັງຄັບໃຊ້ແຮງງານ / ແຮງງານເດັກ<br>- ການຈັດຊື້/ນຳໃຊ້ ຜະລິດຕະພັນທີ່ສ້າງຂຶ້ນໃນ WHO Classes IA, IB ຫຼື II<br>- ການຈັດຊື້/ນຳໃຊ້ສານເຄມີກຳຈັດສັດຕູພືດ ແລະ ສານມົນລະພິດທີ່ຕົກຄ້າງຍາວນານທີ່ລະບຸໄວ້ໃນ ສົນທິສັນຍາສະຕັອກໂຮມ | ບໍ່ | |

| | | |
|---|---|---|
| - ການປ່ຽນແປງຫຼືການເຮັດໃຫ້ທີ່ຢູ່ອາໄສສຳຄັນຂອງທຳມະຊາດເຊື່ອມໂຊມ<br>- ການແນະນຳຊະນິດພັນພືດແລະສັດທີ່ຮູ້ກັນວ່າເປັນພັນທີ່ຮຸກຮານເຂົ້າໄປສູ່ສະພາບແວດລ້ອມໃໝ່<br>- ການຕັ້ງຖິ່ນຖານແບບບໍ່ສະໝັກໃຈ | | |

ຖ້າຄຳຕອບຂອງຕາຕະລາງ 1 ຄື: ແມ່ນ, ກະລຸນາຕິດຕໍ່ຜູ້ຊ່ຽວຊານດ້ານການຄຸ້ມຄອງໃນອົງການ WWF GEF/GCF ເພື່ອປຶກສາຫາລື. ໂຄງການຈະຕ້ອງໄດ້ຮັບການອອກແບບໃໝ່ເພື່ອຮັບປະກັນວ່າມັນບໍ່ໄດ້ສະໜັບສະໜູນກິດຈະກຳໃດໆທີ່ໄດ້ລະບຸໄວ້ໃນຕາຕະລາງຂ້າງເທິງ.

## ຕາຕະລາງ 2: ກິດຈະກໍາທີ່ມີຄວາມສ່ຽງຕໍ່າ

| **ກິດຈະກໍາທີ່ມີຄວາມສ່ຽງຕໍ່າ** | *ແມ່ນ/ບໍ່ແມ່ນ/ບໍ່ແນ່ໃຈ* | *ຖ້າຄໍາຕອບແມ່ນ "ແມ່ນ", ກະລຸນາອະທິບາຍລັກສະນະຂອງໂຄງການ:* |
|---|---|---|
| ຂ້າງລຸ່ມນີ້ແມ່ນລາຍການ ກິດຈະກໍາທີ່ຖືວ່າມີຄວາມສ່ຽງຕໍ່າຕໍ່ຜົນກະທົບຕໍ່ສິ່ງແວດລ້ອມແລະສັງຄົມ. ກິດຈະກໍາທັງໝົດຂອງໂຄງການແມ່ນມີໃນລາຍຊື່ນີ້ ບໍ ?:<br><br>- ການປະຕິຮູບນະໂຍບາຍ<br>- ການປະເມີນ ແລະ ການຕິດຕາມຊັບພະຍາກອນທໍາມະຊາດ<br>- ການລົງຕິດຕາມ ແລະ ການປະເມີນຜົນຕົວຈິງ<br>- ການສຶກສາໃນສໍານັກງານ, ກອງປະຊຸມສໍາມະນາ, ກອງປະຊຸມ<br>- ການຄົ້ນຄວ້າວິທະຍາສາດ ແລະ ການສໍາຫຼວດພາກສະໜາມ<br>- ການຄົ້ນຄວ້າ ແລະ ການຂະຫຍາຍຜົນໃນດ້ານ ກະສິກໍາ, ປ່າໄມ້, ການປະມົງ ແລະ ການຈັດການຊັບພະຍາກອນທໍາມະຊາດ<br>- ການສັງເກດການໄລຍະໄກ ແລະ ການວິເຄາະທາງພູມສາດ<br>- ການພັດທະນາຄວາມສາມາດ, ການສື່ສານ ແລະ ເຜີຍແຜ່ໂຄງການ, ລວມທັງການຝຶກອົບຮົມແລະການຊ່ວຍເຫຼືອດ້ານວິຊາການ<br>- ສະໜັບສະໜູນຄວາມພ້ອມຂອງການລົງທຶນ | ແມ່ນແລ້ວ | ໂຄງການນີ້ແມ່ນໄດ້ສຸມໃສ່ການແກ້ໄຂບັນຫາທີ່ຕົ້ນນທາງງ - ນະໂຍບາຍ ແລະ ການຊ່ວຍເຫຼືອດ້ານວິຊາການ.<br><br>ກິດຈະກໍາຂອງໂຄງການແມ່ນຈັດຢູ່ໃນປະເພດຂອງ:<br><br>- ການພັດທະນານະໂຍບາຍ, ແຜນການ ແລະ ຄໍາແນະນໍາ / ການຝຶກອົບຮົມສໍາລັບການຍັ້ງຢືນ<br>- ການວິເຄາະກະແສວັດສະດຸແລະການວິເຄາະຕະຫຼາດ<br>- ການຈັດການແຂ່ງຂັນເພື່ອກໍານົດຜະລິດຕະພັນທາງເລືອກໃໝ່ແທນຜະລິດຕະພັນປລາສຕິກທີ່ໃຊ້ເທື່ອດຽວ ແລະ ການຊ່ວຍເຫຼືອດ້ານວິຊາການກັບຜູ້ສະເໜີ<br>- ການທົດລອງການນໍາໃຊ້ຜະລິດຕະພັນໃໝ່ກັບຜູ້ໃຫ້ບໍລິການດ້ານການທ່ອງທ່ຽວ ແລະ ການໂຮງແຮມ ( ເຊັ່ນ: ຂວດແກ້ວແທນປລາສຕິກ)<br>- ພັດທະນາຍຸດທະສາດການຕະຫຼາດ ແລະ ການໂຄສະນາເພື່ອຊຸກຍູ້ໃຫ້ມີການສ້າງທາງເລືອກໃໝ່ແທນການຊົມໃຊ້ປລາສຕິກທີ່ໃຊ້ໄດ້ຄັ້ງດຽວ<br>- ການຊ່ວຍເຫຼືອດ້ານວິຊາການ, ການຝຶກອົບຮົມ, ການໃຫ້ຄໍາປຶກສາ<br>- ພັດທະນາຍຸດທະສາດການສື່ສານ ແລະອຸປະກອນການແລກປ່ຽນ ຄວາມຮູ້ |

| | | |
|---|---|---|
| | | - ການເຂົ້າຮ່ວມຝຶກອົບຮົມ<br>- ການຕິດຕາມ ແລະ ປະເມີນໂຄງການ |

ຖ້າຄໍາຕອບຂອງຕາຕະລາງ 2 ຄື ແມ່ນ, ໃຫ້ຢຸດທີ່ນີ້. ທ່ານອາດຈະບໍ່ຈໍາເປັນຕ້ອງຕື່ມຂໍ້ມູນສ່ວນທີ່ເຫຼືອຂອງເອກະສານນີ້. ສົ່ງອີເມວເອກະສານນີ້ໄປຫາຜູ້ຊ່ຽວຊານດ້ານການຄຸ້ມຄອງໃນອົງການ WWF GEF/GCF ແລະພວກເຂົາຈະຕັດສິນວ່າທ່ານຈໍາເປັນຕ້ອງໄດ້ສືບຕໍ່ຕື່ມຂໍ້ມູນສ່ວນທີ່ເຫຼືອຂອງການກວດຄັດກອງຫຼືບໍ່.

**ແຜນການມີສ່ວນຮ່ວມຂອງພາກສ່ວນກ່ຽວຂ້ອງ**

ການສົ່ງເສີມການແກ້ໄຂບັນຫາແບບໝູນວຽນຈາກການຜະລິດ ແລະ ຊົມໃຊ້ ປລາສຕິກທີ່ໃຊ້ເທື່ອດຽວ ໃນ ສປປ ລາວ

24.05.2024

ອົງການ GEF/GCF: WWF US

ໜ່ວຍງານຈັດຕັ້ງປະຕິບັດ: ກະຊວງຊັບພະຍາກອນທຳມະຊາດແລະສິ່ງແວດລ້ອມ (ກຊສ)

## 1. ບົດນຳ

ການຫັນປ່ຽນທາງດ້ານເສດຖະກິດ ແລະ ສັງຄົມໃນ ສປປ ລາວ ກຳລັງສົ່ງຜົນໃຫ້ ປະລິມານຂອງ ປລາສຕິກທີ່ໃຊ້ຄັ້ງດຽວ (SUPs) ເພີ່ມຂຶ້ນ, ເຊິ່ງສ້າງຄວາມກົດດັນຕໍ່ລະບົບການຈັດການສິ່ງເສດເຫຼືອ. ຫລາຍຄົວເຮືອນຍັງສືບຕໍ່ຖິ້ມ ຫຼື ຈູດຂີ້ເຫຍື້ອຊະຊາຍ, ສົ່ງຜົນໃຫ້ ເກີດມົນລະພິດທາງບົກ, ອາກາດ, ແລະ ນ້ຳຢ່າງແຜ່ຫຼາຍ. ໂຄງການພັດທະນາທີ່ແນໃສ່ການແຊກແຊງໃນປາຍນ້ຳເທົ່ານັ້ນ ບໍ່ສາມາດນຳທັນກັບການເພີ່ມຂຶ້ນຂອງສິ່ງເສດເຫຼືອໄດ້. ດັ່ງນັ້ນ, ວິທີການໃໝ່ທີ່ສຸມໃສ່ເສດຖະກິດໝູນວຽນ ແລະ ການແຊກແຊງ ທາງຕົ້ນນ້ຳຈຶ່ງມີຄວາມຈຳເປັນໃນການ ຫຼຸດຜ່ອນການໃຊ້ ປລາສຕິກທີ່ໃຊ້ຄັ້ງດຽວ ໃນຂະແໜງອາຫານ ແລະ ເຄື່ອງດື່ມ ແລະ ການ ຫັນໄປຊົມໃຊ້ຜະລິດຕະພັນທົດແທນທີ່ເປັນມິດກັບສິ່ງແວດລ້ອມທີ່ນຳໃຊ້ວັດສະດຸທາງເລືອກ. ໂຄງການນີ້ໃຊ້ແນວທາງອັນເປັນລະບົບ, ທີ່ສຸມໃສ່ໃນທຸກພາກສ່ວນຂອງຕ່ອງໂສ້ອຸປະທານ.

ໂຄງການນີ້ມຸ້ງເນັ້ນການຫຼຸດຜ່ອນການນຳໃຊ້ປລາສຕິກທີ່ໃຊ້ຄັ້ງດຽວ ໃນຂະແໜງອາຫານ ແລະ ເຄື່ອງດື່ມ ແລະ ສະໜັບສະໜູນ ການພັດທະນາຜະລິດຕະພັນ / ການບໍລິການ ແລະ ຕະຫຼາດສຳລັບຜະລິດຕະພັນທົດແທນ. ລັດຖະບານຈະໄດ້ຮັບການສະໜັບສະໜູນດ້ານວິຊາການເພື່ອພັດທະນານະໂຍບາຍ, ຍຸດທະສາດ, ແລະແຜນການທີ່ກ່ຽວຂ້ອງ. ວິສາຫະກິດທີ່ພັດທະນາຜະລິດຕະພັນ ແລະ ການບໍລິການທີ່ນຳໃຊ້ວັດສະດຸທາງເລືອກເພື່ອທົດແທນປລາສຕິກ ຈະໄດ້ຮັບການສະໜັບສະໜູນໂດຍຜ່ານໂຄງການຝຶກອົບຮົມ ພາກສ່ວນທຸລະກິດ ແລະ ເພື່ອຊ່ວຍເລັ່ງໃຫ້ທຸລະກິດເຕີບໂຕ. ການວິໄຈຕະຫຼາດຈະຖືກດຳເນີນການເພື່ອເຂົ້າໃຈເຖິງ ຄວາມຕ້ອງການຂອງລູກຄ້າ, ພ້ອມທັງນຳໃຊ້ແຄມເປນການຕະຫຼາດ ໃນການພັດທະນາການແບ່ງກຸ່ມເປົ້າໝາຍ, ການກຳນົດເປົ້າໝາຍ ແລະ ການວາງຕຳແໜ່ງຂອງຜະລິດຕະພັນ / ການບໍລິການໃໝ່ເພື່ອໃຫ້ເກີດມີການນຳໃຊ້ຢ່າງກວ້າງຂວາງ ແລະ ຮັບປະກັນຄວາມຍືນຍົງທາງດ້ານການເງິນຂອງຜະລິດຕະພັນທີ່ນຳສະເໜີໃໝ່. ແນວທາງປະຕິບັດທີ່ດີທີ່ສຸດພາຍໃນທຸລະກິດການທ່ອງທ່ຽວ ແລະ ການໂຮງແຮມຈະໄດ້ຮັບການສົ່ງເສີມພາຍໃນລາວ ແລະ ພາກພື້ນທີ່ກວ້າງຂວາງ.

ອີງຕາມການຈັດຕັ້ງປະຕິບັດວຽກງານໃນອະດີດ ແລະ ປັດຈຸບັນ, ໂຄງການນີ້ຈະມີການດຳເນີນການໂດຍຄູ່ຮ່ວມງານຫຼາຍຝ່າຍ. ກະຊວງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ( ກຊສ ) ຈະເປັນຜູ້ດຳເນີນງານຫຼັກ ຂອງອົງປະກອບທີ 1 (ການພັດທະນານະໂຍບາຍແຫ່ງຊາດ), ໄດ້ຮັບການສະໜັບສະໜູນດ້ານວິຊາການ. ອົງການ Swisscontacts ຈະເປັນຜູ້ດຳເນີນງານຫຼັກຂອງອົງປະກອບ 2 (ສະໜັບສະໜູນວິສາຫະກິດໃນການພັດທະນາຜະລິດຕະພັນ ແລະ ການບໍລິການໃຫມ່), ໂດຍອີງໃສ່ປະສົບການຈາກໂຄງການສ້າງມູນຄ່າແກ່ສິ່ງເສດເຫຼືອ (Waste to Value) ແລະ ການຈັດງານ Eco-Challenge, ເຊິ່ງສະໜັບສະໜູນການ

ພັດທະນາການແກ້ໄຂບັນຫາທາງສິ່ງແວດລ້ອມໃຫ້ກາຍເປັນຕົ້ນແບບຕົວຈິງ. ອົງການ Plan International ຈະເປັນຜູ້ດຳເນີນງານຫຼັກຂອງອົງປະກອບທີ 3 ໃນການສະໜັບສະໜູນທຸລະກິດການທ່ອງທ່ຽວ ແລະ ການໂຮງແຮມ ໃນໄລຍະການຫັນປ່ຽນຈາກ SUPs, ໂດຍໃຊ້ປະໂຫຍດຈາກປະສົບການທີ່ຈັດຕັ້ງປະຕິບັດໂຄງການ SUSTOUR Laos (Lasting Laos Certification: ການຢັ້ງຢືນຄວາມຍືນຍົງຂອງແຜນງານ ລາວຍືນຍາວ). ອົງການ WWF Laos ຈະເປັນຜູ້ຊ່ວຍໃນການຄຸ້ມຄອງ-ບໍລິຫານໂຄງການ ແລະ ດຳເນີນກິດຈະກຳດ້ານວິຊາການບາງລາຍການໂດຍກົງ, ເຊັ່ນ: ການເຮັດສັນຍາການຕະຫຼາດ ແລະການສຶກສາຕ່າງໆ.

ທຶນສະໜັບສະໜູນເພີ່ມເຕີມມູນຄ່າເຖິງ 3 ລ້ານໂດລາສະຫະລັດແມ່ນກຳລັງດຳເນີນການຂໍຮັບການຊ່ວຍເຫຼືອຈາກອົງການ French Facility for Global Environment (FFEM). ເງິນທຶນຂອງອົງການ FFEM ຈະເສີມສ້າງຫຼາຍກິດຈະກຳຂອງ GEF ແຕ່ສ່ວນໃຫຍ່ຈະເນັ້ນໃສ່ກິດຈະກຳໃນລະດັບປາຍນທາງງ ເນື່ອງຈາກມີການເຊື່ອມຕໍ່ ແລະ ມີຄວາມຈຳເປັນສຳລັບການພັດທະນາການຈັດການສິ່ງເສດເຫຼືອໃນ ສປປ ລາວ. ນອກນີ້, ທຶນ FFEM ຈະສາມາດຊ່ວຍໃຫ້ມີການຊ່ວຍເຫຼືອດ້ານການເງິນ, ເຊິ່ງເປັນສິ່ງສຳຄັນໃນການສະໜັບສະໜູນການພັດທະນາວິສາຫະກິດ ແລະ ທຸລະກິດຕ່າງໆ.

ໂຄງການດັ່ງກ່າວຈະປະກອບສ່ວນເຂົ້າໃນຜົນປະໂຫຍດດ້ານສິ່ງແວດລ້ອມລະດັບໂລກ (GEBs), ລວມທັງການຫຼຸດຜ່ອນມົນລະພິດປລາສຕິກໃນແມ່ນ້ຳລະຫວ່າງປະເທດ (ເຊິ່ງມີສ່ວນຊ່ວຍໃນການບັນເທົາ ການເຊື່ອມໂຊມຂອງດິນ, ແມ່ນ້ຳລະຫວ່າງປະເທດຂອງ GEBs). ການປ່ຽນແປງ ຈາກການຜະລິດ ແລະ ການນຳໃຊ້ SUPS ຈະສະໜັບສະໜູນການປ່ຽນຜ່ານສູ່ການໃຊ້ວັດສະດຸທີ່ມີຄາບອນຕ່ຳໄປສູ່ວັດສະດຸທາງເລືອກອື່ນທີ່ມີປະລິມານກາສເຮືອນແກ້ວທີ່ໜ້ອຍລົງ (ການຫຼຸດຜ່ອນການປ່ຽນແປງດິນຟ້າອາກາດ). ການຫຼຸດລົງຂອງການຈັດການສິ່ງເສດເຫຼືອທີ່ບໍ່ເຂັ້ມແຂງ (ການຖິ້ມ ແລະ ຈູດຂີ້ເຫຍື້ອ) ຍັງຈະເປັນປະໂຫຍດຕໍ່ສຸຂະພາບຂອງມະນຸດ ແລະ ສິ່ງແວດລ້ອມອີກດ້ວຍ (ສານເຄມີແລະສິ່ງເສດເຫຼືອ).

## 2. ກົດລະບຽບ ແລະ ຂໍ້ກຳນົດ

ແຜນງານມີສ່ວນຮ່ວມຂອງພາກສ່ວນກ່ຽວຂ້ອງ (SEP) ໄດ້ຮັບຮອງເອົາຂະບວນການປຶກສາຫາລືແບບລວມ ແລະ ໂປ່ງໃສ ເພື່ອຂໍຄຳຄິດເຫັນຈາກພາກລດ, ເອກະຊົນ, ອົງການຈັດຕັ້ງທາງສັງຄົມ ແລະ ຊຸມຊົນທີ່ໄດ້ຮັບຜົນກະທົບ/ຜົນ ປະໂຫຍດ. ແຜນ SEP ແມ່ນອ້າງອີງຈາກຄຳແນະນຳຂອງອົງການ WWF ສຳລັບການປຶກສາຫາລື ແລະ ການມີສ່ວນຮ່ວມຂອງພາກສ່ວນກ່ຽວຂ້ອງ, ເຊິ່ງຄວບຄຸມວົງຈອນຂອງການມີສ່ວນພົວພັນ - ນັບຕັ້ງແຕ່ການລວບລວມຄຳຄິດຄຳເຫັນ, ການປະເມີນຜົນ ແລະການຕອບສະໜອງຕໍ່ຄຳຄິດຄຳເຫັນເຫຼົ່ານີ້, ແລະຮັບປະກັນວ່າຄຳຕອບຈະໄດ້ຮັບການເປີດເຜີຍໃຫ້ແກ່ຜູ້ທີ່ມີສ່ວນກ່ຽວຂ້ອງ .

ແຜນ SEP ໄດ້ຮັບການພັດທະນາຈາກການປຶກສາຫາລືກັບຜູ້ມີສ່ວນກ່ຽວຂ້ອງທີ່ໄດ້ດຳເນີນການໃນໄລຍະການອອກແບບໂຄງການ ເພື່ອກຳນົດຜູ້ທີ່ມີສ່ວນກ່ຽວຂ້ອງຫຼັກຂອງໂຄງການ ລວມເຖິງການມີສ່ວນຮ່ວມອັນເປັນທ່າແຮງທີ່ສຳຄັນໃນໂຄງການ ພ້ອມກັບບົດບາດ ແລະ ໜ້າທີ່ຮັບຜິດຊອບໃນການຈັດຕັ້ງປະຕິບັດແຜນການນີ້.

ຄະນະກຳມະການຊີ້ນຳໂຄງການ (PSC)/ໜ່ວຍງານປະຕິບັດງານ (ກົມສິ່ງແວດລ້ອມ, ກັບ WWF - ລາວ) ຮັບຜິດຊອບໃນການຮັບປະກັນຄວາມສອດຄ່ອງກັບມາດຕະຖານຂອງ GEF ແລະ WWF ກ່ຽວກັບການມີສ່ວນຮ່ວມຂອງພາກສ່ວນກ່ຽວຂ້ອງ, ໂດຍສະເພາະແມ່ນ ມາດຕະຖານ WWF ກ່ຽວກັບການມີສ່ວນຮ່ວມຂອງພາກສ່ວນກ່ຽວຂ້ອງ ແລະ ຂັ້ນຕອນທີ່ກ່ຽວຂ້ອງໃນການຈັດຕັ້ງປະຕິບັດມາດຕະຖານຂອງການມີສ່ວນຮ່ວມຂອງພາກສ່ວນກ່ຽວຂ້ອງ. ມາດຕະຖານ WWF ກ່ຽວກັບການມີສ່ວນ

ຮ່ວມຂອງພາກສ່ວນກ່ຽວຂ້ອງ ຮຽກຮ້ອງໃຫ້ໜ່ວຍງານຈັດຕັ້ງປະຕິບັດ ແລະ ໜ່ວຍງານດໍາເນີນການແຫ່ງຊາດ (ກົມສິ່ງແວດລ້ອມ (DoE) ໃນກະຊວງຊັບພະຍາກອນທໍາມະຊາດ ແລະ ສິ່ງແວດລ້ອມ ( ກຊສ ) ໂດຍໄດ້ຮັບການສະໜັບສະໜູນຈາກອົງການ WWF ລາວ) ເພື່ອສ້າງການມີສ່ວນຮ່ວມກັບພາກສ່ວນກ່ຽວຂ້ອງໃນລະດັບຊາດ ແລະ ທ້ອງຖິ່ນ ລວມທັງຜູ້ໄດ້ຮັບຜົນກະທົບຈາກໂຄງການ , ອົງການຈັດຕັ້ງທ້ອງຖິ່ນ, ລັດຖະບານແຫ່ງຊາດ, ລັດຖະບານທ້ອງຖິ່ນ (ແຂວງ ແລະ ເມືອງ), ໜ່ວຍງານ ແລະ ສະຖາບັນທີ່ເຄື່ອນໄຫວວຽກງານໃນ ທ້ອງຖິ່ນ, ແລະ ອົງການຈັດຕັ້ງທີ່ບໍ່ຂຶ້ນກັບລັດຖະບານ.

ອົງການ WWF-US, ໃນຖານະທີ່ເປັນໜ່ວຍງານໂຄງການ GEF, ມີຄວາມຮັບຜິດຊອບໃນການຕິດຕາມ. ກຊສ, ອົງການ Swisscontacts , ອົງການ Plan International ແລະ ອົງການ WWF-Lao PDR ມີໜ້າທີ່ຮັບຜິດຊອບໃນການດໍາເນີນງານຕາມແຜນການມີສ່ວນຮ່ວມຂອງພາກສ່ວນກ່ຽວຂ້ອງໃຫ້ສອດຄ່ອງກັບມາດຕະຖານຂອງ WWF ກ່ຽວກັບການມີສ່ວນຮ່ວມຂອງພາກສ່ວນກ່ຽວຂ້ອງ.

ໃນຖານະເປັນຜູ້ຮັບເງິນທຶນຈາກ GEF, ກຊສ , ອົງການ Swisscontact, ອົງການ Plan International, ແລະ ອົງການ WWF-Lao PDR ຈໍາເປັນຕ້ອງປະຕິບັດຕາມກອບວຽກງານການປ້ອງກັນຜົນກະທົບທາງສິ່ງແວດລ້ອມ ແລະ ສັງຄົມ ຂອງ WWF-US, ຕາມລາຍລະອຽດໃນເອກະສານນະໂຍບາຍ ແລະ ຂັ້ນຕອນການຮັກສາສິ່ງແວດລ້ອມ ແລະ ສັງຄົມແບບປະສົມປະສານ.

ນອກຈາກນັ້ນ, ໂຄງການຕ້ອງ ປະຕິບັດຕາມນະໂຍບາຍ ແລະ ກົດລະບຽບທີ່ກ່ຽວຂ້ອງກັບລັດຖະບານເຊັ່ນ: ດໍາລັດວ່າດ້ວຍການປະເມີນຜົນກະທົບຕໍ່ສິ່ງແວດລ້ອມ (EIA) ທີ່ໄດ້ຮັບການອະນຸມັດໃນປີ 2019, ເຊິ່ງໄດ້ໃຫ້ຖານທາງດ້ານກົດໝາຍທີ່ເຂັ້ມແຂງສໍາລັບໂຄງການພັດທະນາເພື່ອດໍາເນີນການປະເມີນສັງຄົມ ແລະ ການວາງແຜນ/ດໍາເນີນມາດຕະການການຫຼຸດຜ່ອນຕາມຄວາມຈໍາເປັນ, ລວມທັງຄູ່ມືດ້ານວິຊາການກ່ຽວກັບຄໍາແນະນໍາການມີສ່ວນຮ່ວມຂອງສັງຄົມ(PI) ທີ່ເປີດຕົວໃນປີ 2013, ແລະ ອື່ນໆດັ່ງຕໍ່ໄປນີ້:

- **ບົດແນະນໍາການມີສ່ວນຮ່ວມຂອງສັງຄົມ, ຄໍາສັ່ງຂອງລັດຖະມົນຕີ ສະບັບເລກທີ 29/ກຊສ (2013) -** ໄດ້ກໍານົດໃຫ້ທຸກໂຄງການການລົງທຶນ ແລະ ການເຄື່ອນໄຫວຂອງລັດ ແລະ ເອກະຊົນ, ທັງພາຍໃນ ແລະ ຕ່າງປະເທດ, ວິສາຫະກິດທີ່ດໍາເນີນທຸລະກິດຢູ່ ສປປ ລາວ ທີ່ກໍ່ໃຫ້ເກີດ ຫຼື ອາດກໍ່ໃຫ້ເກີດຜົນກະທົບຕໍ່ສິ່ງແວດລ້ອມ ແລະ ສັງຄົມ ຕ້ອງດໍາເນີນການປະເມີນຜົນກະທົບຕໍ່ສິ່ງແວດລ້ອມ ແລະ ສັງຄົມ. ຄໍາສັ່ງດັ່ງກ່າວຍັງໄດ້ພິຈາລະນາ ຂະບວນການມີສ່ວນຮ່ວມຂອງປະຊາຊົນ 4 ຂັ້ນຕອນຄື: ການລວບລວມຂໍ້ມູນຂ່າວສານ, ການເຜີຍແຜ່ຂໍ້ມູນຂ່າວສານ, ການປຶກສາຫາລື ແລະ ການມີສ່ວນຮ່ວມ, ເພື່ອຮັບປະກັນວ່າກິດຈະກໍາຂອງໂຄງການໄດ້ຖືກອອກແບບໂດຍຄໍານຶງເຖິງການຫຼຸດຜ່ອນຜົນກະທົບທາງລົບຕໍ່ສັງຄົມແລະສິ່ງແວດລ້ອມ ແລະ ສ້າງຜົນກະທົບທາງບວກໃນໄລຍະຍາວ. ແນວທາງນີ້ສ່ວນຫຼາຍແມ່ນຖືກປະຕິບັດໂດຍໂຄງການພື້ນຖານໂຄງລ່າງຂະໜາດໃຫຍ່ ເຊັ່ນ: ໂຄງການກໍ່ສ້າງເຂື່ອນໄຟຟ້າ ຫຼື ການຂຸດຄົ້ນບໍ່ແຮ່.
- **ດໍາລັດວ່າດ້ວຍການປະເມີນຜົນກະທົບດ້ານສິ່ງແວດລ້ອມ (2019) -** ຮຽກຮ້ອງໃຫ້ໂຄງການພັດທະນາປະເພດ ແລະ ຂະໜາດຕ່າງໆ ດໍາເນີນການກວດກາສິ່ງແວດລ້ອມເບື້ອງຕົ້ນ (IEE) ແລະ/ຫຼື ການປະເມີນຜົນກະທົບຕໍ່ສິ່ງແວດລ້ອມ ແລະ

ສັງຄົມ (ESIA). ການວິເຄາະນີ້ຕ້ອງປະກອບມີຂະບວນການປຶກສາຫາລືທີ່ເໝາະສົມກັບທຸກພາກສ່ວນທີ່ກ່ຽວຂ້ອງທັງໝົດ, ໂດຍສະເພາະແມ່ນຜູ້ທີ່ໄດ້ຮັບຜົນກະທົບໂດຍກົງຈາກໂຄງການ, ດັ່ງທີ່ໄດ້ອະທິບາຍໄວ້ໃນ ຄຳແນະນຳ ຂອງ ກຊສ ກ່ຽວກັບ IEE, ເລກທີ 8029 (2013) ແລະ ຄຳແນະນຳກ່ຽວກັບ ESIA ເລກທີ 8030 (2013).

- **ປຶ້ມແນະນຳແນວທາງການປຶກສາຫາລືກັບກຸ່ມຊົນເຜົ່າ (2012) –** ໃຫ້ຄຳແນະນຳກ່ຽວກັບວິທີການປຶກສາຫາລືກັບບັນດາຊົນເຜົ່າຕ່າງໆໃນຮູບແບບທີ່ເໝາະສົມທາງດ້ານວັດທະນະທຳ. ຄຳແນະນຳລະດັບຊາດ ໃນການປຶກສາຫາລືກັບບັນດາຊົນເຜົ່ານີ້ແມ່ນສອດຄ່ອງກັບນະໂຍບາຍຂອງທະນາຄານໂລກກ່ຽວກັບຄົນພື້ນເມືອງ (OP/BP 4.10). ໂດຍແນໃສ່ການຮັບປະກັນໃຫ້ບັນດາຊົນເຜົ່າທັງໝົດທີ່ໄດ້ຮັບຜົນປະໂຫຍດ ຫຼື ໄດ້ຮັບຜົນກະທົບທາງລົບຈາກໂຄງການພັດທະນາ, ໂດຍບໍ່ຄຳນຶງເຖິງແຫຼ່ງທຶນ, ໃຫ້ໄດ້ມີສ່ວນຮ່ວມໃນຂະບວນການປຶກສາຫາລືທຸກຂັ້ນຕອນ ນັບແຕ່ການກະກຽມເຖິງການຈັດຕັ້ງປະຕິບັດ. ນອກຈາກນັ້ນ, ຍັງປະກອບມີການມີສ່ວນຮ່ວມ ຂອງຜູ້ນຳຊົນຊາດ ຫຼື ຊົນເຜົ່າ ຖ້າມີ, ຫ້ອງວ່າການແຂວງ ຫຼື ເມືອງຂອງແນວລາວສ້າງຊາດ ແລະ ອົງການຈັດຕັ້ງທາງສັງຄົມທ້ອງຖິ່ນອື່ນໆ (CSOs) ທີ່ກຸ່ມຊົນເຜົ່າໄດ້ກຳນົດວ່າມີຄວາມສຳຄັນໃນການເປັນຕົວແທນຜົນປະໂຫຍດຂອງເຂົາເຈົ້າ, ລວມເຖິງໂອກາດໃນການປຶກສາຫາລືໃນແຕ່ລະຂັ້ນຕອນຂອງ ການກະກຽມ ແລະ ຈັດຕັ້ງປະຕິບັດໂຄງການຍ່ອຍ.
- **ກົດໝາຍວ່າດ້ວຍການແກ້ໄຂຄຳຮ້ອງທຸກ ສະບັບເລກທີ 53/ສພຊ 2014** , ຂໍ້ຂັດແຍ່ງສາມາດແກ້ໄຂໄດ້ໂດຍຜ່ານລະບົບການແກ້ໄຂຂໍ້ຂັດແຍ່ງທາງກົດໝາຍ - ລະບົບປະເພນີ ຫຼື ລະບົບຕາມທຳນຽມ ຫຼື ໜ່ວຍງານໄກ່ເກ່ຍຂໍ້ຂັດ ແຍ່ງຂັ້ນບ້ານ. ລະດັບເໜືອຂັ້ນບ້ານແມ່ນຂັ້ນເຂດ, ແຂວງ, ແລະສານສູງສຸດແຫ່ງຊາດ. ບັນດາບັນຫາ, ຄຳຮ້ອງທຸກ, ຫຼືຂໍ້ສອບຖາມແບບເລັ່ງດ່ວນແມ່ນສາມາດແຈ້ງຕໍ່ສະມາຊິກສະພາແຫ່ງຊາດ, ຫຼືຜ່ານສາຍດ່ວນຂອງສະພາແຫ່ງຊາດໄດ້ ເຊິ່ງເປີດໃຫ້ບໍລິການໃນລະຫວ່າງ ກອງປະຊຸມສະພາແຫ່ງຊາດ. ການແກ້ໄຂຄຳຮ້ອງທຸກຍັງສາມາດດຳເນີນໄດ້ໂດຍຜ່ານຊ່ອງທາງບໍລິຫານຫຼືຊ່ອງທາງຂອງພັກ, ຜ່ານບັນດາອົງການຈັດຕັ້ງມະຫາຊົນ (ແນວລາວສ້າງຊາດ ທີ່ກ່ຽວກັບບັນຫາຊົນເຜົ່າ, ແລະ ສະຫະພັນແມ່ຍິງລາວທີ່ກ່ຽວກັບບັນຫາແມ່ຍິງ).
- ນອກຈາກນີ້, **ຄຳສັ່ງຂອງນາຍົກລັດຖະມົນຕີ ສະບັບເລກທີ 16/ນຍ (2012) ກ່ຽວກັບ ວຽກງານສາມສ້າງ (ສາມສ້າງ)** ຍັງເປັນນິຕິກຳຂອງລັດຖະບານທີ່ສຳຄັນ ແລະ ມີລັກສະນະຍຸດທະສາດ ທີ່ຊຸກຍູ້ ແລະ ມີເປົ້າໝາຍໃນການ (ກ) ສ້າງແຂວງໃຫ້ເປັນຫົວໜ່ວຍຍຸດທະສາດ; (b) ສ້າງເມືອງໃຫ້ເປັນຫົວໜ່ວຍເຂັ້ມແຂງຮອບດ້ານ, ໂດຍສະເພາະແມ່ນການວາງແຜນ; ແລະ (c) ສ້າງບ້ານເປັນຫົວໜ່ວຍພັດທະນາ, ວຽກງານສາມສ້າງ ສົ່ງເສີມການບໍລິຫານຢູ່ຂັ້ນຮາກຖານຢ່າງຕັ້ງໜ້າ. ການຈັດຕັ້ງປະຕິບັດແມ່ນສຸມໃສ່ການດຳເນີນການບໍລິຫານ ແລະ ການປະຕິບັດຕາມຄວາມຮັບຜິດຊອບລະຫວ່າງອົງການປົກຄອງຂັ້ນສູນກາງ, ແຂວງ, ເມືອງ ແລະ ຂັ້ນບ້ານ. ການປະຕິບັດຮຽກຮ້ອງໃຫ້ເຈົ້າໜ້າທີ່ຂັ້ນສູນກາງ ແລະ ແຂວງ ສົມທົບກັນຢ່າງແໜ້ນແຟ້ນຂຶ້ນ.

***ມາດຕະຖານ WWF ກ່ຽວກັບການມີສ່ວນຮ່ວມຂອງພາກສ່ວນກ່ຽວຂ້ອງ:*** ໜ່ວຍງານ GEF ຂອງ ອົງການ WWF ຮຽກຮ້ອງໃຫ້ທຸກໂຄງການ GEF ປະຕິບັດຕາມມາດຕະຖານ GEF ແລະ WWF ກ່ຽວກັບການມີສ່ວນພົວພັນຂອງພາກສ່ວນທີ່

ກ່ຽວຂ້ອງ, ໂດຍສະເພາະ ມາດຕະຖານ WWFກ່ຽວກັບການມີສ່ວນຮ່ວມຂອງພາກສ່ວນກ່ຽວຂ້ອງ ແລະ ຂັ້ນຕອນທີ່ກ່ຽວຂ້ອງກັບການຈັດຕັ້ງປະຕິບັດມາດຕະຖານການມີສ່ວນຮ່ວມຂອງພາກສ່ວນທີ່ກ່ຽວຂ້ອງ. ການມີສ່ວນຮ່ວມຂອງພາກສ່ວນທີ່ກ່ຽວຂ້ອງແມ່ນຄຳທີ່ກວມເອົາຫຼາຍກິດຈະກຳ ແລະ ປະຕິສຳພັນກັບຜູ້ມີສ່ວນກ່ຽວຂ້ອງຕະຫຼອດວົງຈອນໂຄງການ ແລະ ເປັນສ່ວນສຳຄັນຂອງການຄຸ້ມຄອງບໍລິຫານໂຄງການທີ່ດີ. ມາດຕະຖານ WWF ກ່ຽວກັບການມີສ່ວນຮ່ວມຂອງພາກສ່ວນກ່ຽວຂ້ອງຮຽກຮ້ອງໃຫ້ໜ່ວຍງານດຳເນີນງານຕ້ອງມີສ່ວນຮ່ວມກັບຜູ້ມີສ່ວນກ່ຽວຂ້ອງຕະຫຼອດໄລຍະວົງຈອນຂອງໂຄງການ; ສື່ສານການປ່ຽນແປງທີ່ສຳຄັນຕໍ່ກັບຜູ້ມີສ່ວນຮ່ວມຂອງໂຄງການ ແລະປຶກສາຫາລືກ່ຽວກັບຄວາມສ່ຽງ ແລະ ຜົນກະທົບທີ່ອາດເກີດຂຶ້ນ; ສ້າງກົນໄກແກ້ໄຂຄຳຮ້ອງທຸກ ແລະ ລົງທະບຽນ ແລະ ຕອບກັບ ຄຳຮ້ອງທຸກຕະຫຼອດການດຳເນີນໂຄງການ; ແລະ ເຜີຍແຜ່ຂໍ້ມູນຂ່າວສານໃນລັກສະນະທີ່ກ່ຽວຂ້ອງ, ໂປ່ງໃສ, ມີຈຸດປະສົງ, ມີຄວາມໝາຍ, ເຂົ້າເຖິງໄດ້ງ່າຍ. ມາດຕະຖານການມີສ່ວນຮ່ວມຂອງພາກສ່ວນທີ່ກ່ຽວຂ້ອງສົ່ງເສີມຂະບວນການທີ່ກວມລວມເພື່ອສະໜັບສະໜູນການພັດທະນາສາຍພົວພັນທີ່ເຂັ້ມແຂງ, ສ້າງສັນ ແລະ ຕອບສະໜອງ.

## 3. ພາກສ່ວນກ່ຽວຂ້ອງຂອງໂຄງການ

### ໜ່ວຍງານລັດຖະບານແຫ່ງຊາດ

**ກົມແຜນການ ແລະ ການເງິນ – DPF (ພາຍໃຕ້** ກຊສ) – ຈຸດປະສານງານຫຼັກດ້ານການປະຕິບັດການຂອງ GEF. ໄດ້ສະໜັບສະໜູນການກຳນົດຂອງໂຄງການ GEF ນີ້ ແລະ ໄດ້ຮັບແຈ້ງຂໍ້ມູນຕະຫຼອດການຈັດຕັ້ງປະຕິບັດ.

**ກົມສິ່ງແວດລ້ອມ,** ກຊສ – ໜ່ວຍງານຜູ້ດຳເນີນການຫຼັກ: ກົມສິ່ງແວດລ້ອມທີ່ ກຊສ ແມ່ນໜ່ວຍງານຫຼັກທີ່ຄຸ້ມຄອງການຈັດການສິ່ງແວດລ້ອມ, ທີ່ດິນ, ປ່າໄມ້, ນ້ຳ, ອາກາດ, ແລະການອະນຸລັກຊີວະນາໆພັນ. ປັດຈຸບັນ, ກົມສິ່ງແວດລ້ອມຮັບຜິດຊອບການພັນຂະຫຍາຍແຜນປະຕິບັດການປຼາສະຕິກແຫ່ງຊາດ (NPAP), ລວມທັງການນຳໃຊ້ນະໂຍບາຍ / ກົດລະບຽບ / ມາດຕະຖານ / ຄູ່ມື, ການປູກຈິດສຳນຶກ, ການປະສານງານ / ເຮັດວຽກກັບຂະແໜງການທີ່ກ່ຽວຂ້ອງ, ການເກັບກຳລວບລວມຂໍ້ມູນ ທີ່ກ່ຽວຂ້ອງ, ແລະ ການສ້າງກຸ່ມເຮັດວຽກ/ເຄືອຂ່າຍ ເພື່ອແກ້ໄຂບັນຫາ ແລະ ສິ່ງທ້າທາຍກ່ຽວກັບປລາສຕິກໃນທົ່ວປະເທດ. ກົມສິ່ງແວດລ້ອມ ຈະຮັບຜິດຊອບການພັດທະນານະໂຍບາຍແຫ່ງຊາດເພື່ອຫຼຸດຜ່ອນການນຳໃຊ້ປລາສຕິກທີ່ໃຊ້ໄດ້ເທື່ອດຽວ ແລະ ສົ່ງເສີມການຊົມໃຊ້ວັດສະດຸທາງເລືອກ. ໂຄງການຈະໃຫ້ການຊ່ວຍເຫຼືອດ້ານວິຊາການໃນຮູບແບບຂອງທີ່ປຶກສາທີ່ປະຈຳຢູ່ໃນກົມສິ່ງແວດລ້ອມ. ກົມສິ່ງແວດລ້ອມຈະຮັບຜິດຊອບໃນການປະສານງານກັບກະຊວງທີ່ກ່ຽວຂ້ອງໃນການພັດທະນານະໂຍບາຍເຫຼົ່ານີ້, ລວມທັງການປະສານງານກັບພາກສ່ວນລັດຖະບານ.

**ກະຊວງອຸດສາຫະກຳ ແລະ ການຄ້າ** (ກອຄ) : ກອຄ ຮັບຜິດຊອບໃນການຄຸ້ມຄອງ ແລະ ພັດທະນາວຽກງານອຸດສາຫະກຳ ແລະ ການຄ້າ ລວມທັງການກຳກັບການຜະລິດ, ການຈັດການດ້ານການຄ້າ (ການນຳເຂົ້າ/ສົ່ງອອກ), ການເປັນຕົວແທນລະຫວ່າງປະເທດ ແລະ ສົ່ງເສີມການຄ້າ. ດັ່ງນັ້ນ, ການພັດທະນານະໂຍບາຍແຫ່ງຊາດຈະຕ້ອງໄດ້ດຳເນີນໂດຍການສົມທົບກັບ ກອຄ ເນື່ອງຈາກອາດສົ່ງຜົນກະທົບຕໍ່ການຜະລິດສິນຄ້າທົດແທນການນຳໃຊ້ທາງເລືອກຂອງການນຳໃຊ້ພາດສະຕິກໃນລາວ ລວມເຖິງການຄ້າສິນຄ້າປລາສຕິກທີ່ນຳໃຊ້ໄດ້ເທື່ອດຽວ ກັບ ປະເທດເພື່ອນບ້ານ (ເຊັ່ນ: ອາດມີການນຳສະເໜີເຄື່ອງມືທາງເສດຖະກິດທີ່ລວມມີພາສີນຳເຂົ້າສິນຄ້າປລາສຕິກທີ່ໃຊ້ໄດ້ເທື່ອດຽວ). ກອຄ ຍັງອາດຈະຖືກຮຽກຮ້ອງໃຫ້ຊ່ວຍລະດົມພາກສ່ວນທຸລະກິດໃຫ້ຫຼຸດຜ່ອນການນຳໃຊ້

ສິນຄ້າປລາສຕິກທີ່ໃຊ້ໄດ້ເທື່ອດຽວ ແລະ ນໍາໃຊ້ທາງເລືອກທີ່ເປັນມິດກັບສິ່ງແວດລ້ອມ. ກອຄ ຈະໄດ້ຮັບການປຶກສາຫາລືສອງຝ່າຍ ໂດຍຜ່ານການພັດທະນານະໂຍບາຍ ແລະໄດ້ຮັບເຊີນເຂົ້າຮ່ວມກອງປະຊຸມສຳມະນາປຶກສາຫາລືທີ່ສຳຄັນ ແລະ ກອງປະຊຸມທີ່ກ່ຽວຂ້ອງ.

**ກະຊວງການເງິນ** (ກງ): ກະຊວງການເງິນ ມີໜ້າທີ່ໃນການຄຸ້ມຄອງການເງິນພາກລັດ ລວມທັງການກວດກາການເງິນ, ການສ້າງແຜນງົບປະມານ ແລະ ການປະຕິບັດການເກັບພາສີ, ການເກັບລາຍຮັບ, ການປະສານງານນະໂຍບາຍເສດຖະກິດ, ລະບຽບການເງິນ ແລະ ລະບຽບການສາກົນ. ການນໍາໃຊ້ເຄື່ອງມືທາງດ້ານເສດຖະກິດຈະຖືກພິຈາລະນາໃນໄລຍະການພັດທະນານະໂຍບາຍ, ແລະດັ່ງນັ້ນ, ຈຶ່ງຈໍາເປັນທີ່ຈະຕ້ອງພັດທະນານະໂຍບາຍເຫຼົ່ານີ້ໂດຍການຮ່ວມມືລະຫວ່າງ ກຊສ ແລະ ກງ (ຕົວຢ່າງ: ຖ້າມີການພິຈາລະນາການນໍາໃຊ້ພາສີນໍາເຂົ້າ, ກໍຈະຖືວ່າຢູ່ໃນຂອບເຂດຂອງກົມພາສີ). ຈະໄດ້ຮັບການປຶກສາຫາລື ສອງຝ່າຍໂດຍຜ່ານການພັດທະນານະໂຍບາຍ ແລະໄດ້ຮັບເຊີນເຂົ້າຮ່ວມກອງປະຊຸມສຳມະນາປຶກສາຫາລືທີ່ສຳຄັນ ແລະ ກອງປະຊຸມທີ່ກ່ຽວຂ້ອງ.

**ກະຊວງຖະແຫລງຂ່າວ, ວັດທະນະທໍາ ແລະ ທ່ອງທ່ຽວ** (ຖວທ): ຖວທ ຮັບຜິດຊອບໃນການສົ່ງເສີມການທ່ອງທ່ຽວ, ການອະນຸລັກວັດທະນະທໍາ, ການເຜີຍແຜ່ຂໍ້ມູນຂ່າວສານ, ການພັດທະນາການທ່ອງທ່ຽວ ແລະ ການເປັນຕົວແທນລະຫວ່າງປະເທດ. ເນື່ອງຈາກໂຄງການເນັ້ນໃສ່ຜະລິດຕະພັນອາຫານ ແລະ ເຄື່ອງດື່ມໃນຂະແໜງການທ່ອງທ່ຽວ ແລະ ການໂຮງແຮມ, ນັ້ນຈຶ່ງເປັນສິ່ງທີ່ສໍາຄັນໃນການສື່ສານກັບ ຖວທ. ຖວທ ຈະຖືກເຊີນເຂົ້າຮ່ວມກອງປະຊຸມສຳມະນາປຶກສາຫາລືທີ່ສຳຄັນ ແລະ ກອງປະຊຸມທີ່ກ່ຽວຂ້ອງ, ພ້ອມທັງໄດ້ຮັບຊຸດເຄື່ອງມື ຫຼື ຂໍ້ມູນທີ່ຈໍາເປັນໃນການສົ່ງເສີມທຸລະກິດການທ່ອງທ່ຽວ ແລະ ການໂຮງແຮມ.

<u>**ການບໍລິຫານງານລັດຖະບານລະດັບພທ້ອງຖິ່ນ**</u>

***ຫ້ອງການຊັບພະຍາກອນທໍາມະຊາດ ແລະ ສິ່ງແວດລ້ອມແຂວງ ແລະ ເມືອງ (ພຊສ/ ຫຊສ):*** ສໍານັກງານເຫຼົ່ານີ້ແມ່ນສໍານັກງານຂອງຫ້ອງການລະດັບແຂວງ ແລະ ເມືອງຂອງ ກຊສ (ນະຄອນຫຼວງວຽງຈັນ, ວັງວຽງ ແລະ ນະຄອນຫຼວງພະບາງ). ເປັນເຈົ້າການໃນການປູກຈິດສໍານຶກ, ສ້າງຂະບວນການສຶກສາອົບຮົມ, ເຜີຍແຜ່ລະບຽບການ, ຂໍ້ບັງຄັບໃຊ້ທາງກົດໝາຍຕ່າງໆກ່ຽວກັບການຈັດການສິ່ງເສດເຫຼືອ ແລະ ສິ່ງແວດລ້ອມ. ພຊສ/ ຫຊສ ຈະເປັນຈຸດຕິດຕໍ່ທີ່ສໍາຄັນໃນການຊ່ວຍສະໜັບສະໜູນໂຄງການໂດຍການປະສານງານ, ການອໍາ ນວຍຄວາມສະດວກ ແລະ ການມີສ່ວນຮ່ວມຂອງອໍານາດການປົກຄອງທ້ອງຖິ່ນ ແລະ ຊຸມຊົນທີ່ກ່ຽວຂ້ອງໃນສາມເມືອງເປົ້າໝາຍ.

***ການຄຸ້ມຄອງ ແລະ ບໍລິການຕົວເມືອງ (ຫ້ອງການຄຸ້ມຄອງ ແລະ ບໍລິການຕົວເມືອງວຽງຈັນ (ຄບຕ), ອໍານາດການປົກຄອງການພັດທະນາຕົວເມືອງ ແຂວງວຽງຈັນ (UDAA), ແລະ ຫ້ອງການບໍລິການຕົວເມືອງຫຼວງພະບາງ (USO)):*** ອົງການທ້ອງຖິ່ນເຫຼົ່ານີ້ມີໜ້າທີ່ໃນການສົ່ງເສີມ ຫຼື ຄຸ້ມຄອງຂະບວນການພັດທະນາຕົວເມືອງ ລວມທັງ ອໍານວຍຄວາມສະດວກໃຫ້ແກ່ການເຕີບໂຕດ້ານເສດຖະກິດ (ລວມທັງການພັດທະນາພື້ນຖານໂຄງລ່າງ), ການອະນຸລັກຮັກສາມໍລະດົກທີ່ເກີດຈາກທໍາມະຊາດ ແລະ ທີ່ຖືກສ້າງຂຶ້ນ, ຍົກສູງຄຸນນະພາບຊີວິດການເປັນຢູ່ຂອງຜູ້ຢູ່ອາໄສ. ພວກເຂົາມີຄວາມຮັບຜິດຊອບກ່ຽວກັບການຈັດການກັບຂີ້ເຫຍື້ອມູນຝອຍ ລວມທັງການເກັບມ້ຽນຂີ້ເຫຍື້ອ ແລະ ກໍາຈັດສິ່ງເສດເຫຼືອ. UDAA ຈະເປັນຈຸດຕິດຕໍ່ທີ່ສໍາຄັນ, ໂດຍຊ່ວຍສະໜັບສະໜູນໂຄງການດ້ວຍການປະສານງານ, ການອໍານວຍຄວາມສະດວກ ແລະ ການມີສ່ວນຮ່ວມຂອງອໍານາດການປົກຄອງທ້ອງຖິ່ນ ແລະ ຊຸມຊົນທີ່ກ່ຽວຂ້ອງໃນ 3 ເມືອງເປົ້າໝາຍ.

## ອົງການຈັດຕັ້ງສາກົນທີ່ບໍ່ຂຶ້ນກັບລັດຖະບານ (INGOs)

**ອົງການ Swisscontact :** ອົງການ Swisscontact ເປັນອົງການທີ່ບໍ່ຫວັງຜົນກຳໄລ ແລະ ເປັນສະມາຊິກຂອງອົງການເພື່ອຄວາມໂປ່ງໃສສາກົນ ແລະ ຂໍ້ຕົກລົງແຫ່ງສະຫະປະຊາຊາດ. ຢູ່ ສປປ ລາວ, ອົງການSwisscontact ສ້າງຕັ້ງຂຶ້ນໃນປີ 2013 ດ້ວຍໂຄງການພັດທະນາການທ່ອງທ່ຽວຢູ່ ແຂວງ ຈໍາປາສັກ , ແລະ ສືບຕໍ່ຂະຫຍາຍຕົວຢ່າງຕັ້ງໜ້າໃນນະຄອນຫຼວງວຽງຈັນ, ແຂວງສາລະວັນ , ແຂວງຄໍາມ່ວນ, ແຂວງຊຽງຂວາງ , ແຂວງອຸດົມໄຊ , ແຂວງໄຊຍະບູລີ ແລະ ແຂວງວຽງຈັນ. ໂຄງການສ້າງມູນຄ່າແກ່ສິ່ງເສດເຫຼືອ (Waste to Value) ແມ່ນໜຶ່ງໃນບັນດາໂຄງການທີ່ພົ້ນເດັ່ນຂອງອົງການ, ດ້ວຍມີຈຸດປະສົງເພື່ອ (ກ) ປັບປຸງການດໍາເນີນງານດ້ານສິ່ງແວດລ້ອມໃນຂະແໜງການບໍລິການຂະໜາດກາງ ແລະ ຂະໜາດນ້ອຍ ຜ່ານການເຂົ້າ ເຖິງຜະລິດຕະພັນສີຂຽວ ແລະ ການປະຕິບັດການຈັດການສິ່ງເສດເຫຼືອທີ່ດີຂຶ້ນ; ແລະ (ii) ເສີມຂະຫຍາຍຜົນການດໍາເນີນທຸລະກິດຂອງຜູ້ເກັບຂີ້ເຫຍື້ອນອກລະບົບ ເພື່ອປັບປຸງຊີວິດການເປັນຢູ່ຂອງເຂົາເຈົ້າ. ກິດຈະກໍາທີ່ສໍາຄັນປະກອບມີການພັດທະນາ & ເປີດຕົວຜະລິດຕະພັນ ແລະ ການບໍລິການສີຂຽວ (ຕົວຢ່າງ, ທາງເລືອກສໍາລັບຜະລິດຕະພັນປລາສຕິກທີ່ນໍາໃຊ້ເທື່ອດຽວ, Eco-Challenge, ການຕະຫຼາດ, ເຄື່ອງມືທຸລະກິດ ແລະ ແຄມເປນການຫຼຸດຜ່ອນການນໍາໃຊ້ຖົງຢາງກັບຮ້ານມິນິມາດ); ການຈັດການສິ່ງເສດເຫຼືອ (ສິ່ງເສດເຫຼືອອາຫານ, ສິ່ງເສດເຫຼືອປລາສຕິກ, ການໃຊ້ຊັບພະຍາກອນຢ່າງມີປະສິດທິພາບ ແລະ ຜູ້ເກັບຂີ້ເຫຍື້ອນອກລະບົບ); ແລະການສ້າງຄວາມຮັບຮູ້ແລະເຄືອຂ່າຍ. Swisscontacts ຈະຮັບຜິດຊອບຕໍ່ຜົນໄດ້ຮັບ ແລະ ການດໍາເນີນງານສ່ວນໃຫຍ່ຂອງອົງປະກອບ 2. ເຊິ່ງຈະປະກອບມີການຄຸ້ມຄອງທຸລະກິດບົ່ມເພາະ, Eco-Challenge ແລະ ໂຄງການສົ່ງເສີມທຸລະກິດເພື່ອເລັ່ງການເຕີບໂຕເພື່ອຊ່ວຍໃຫ້ວິສາຫະກິດທ້ອງຖິ່ນພັດທະນາຜະລິດຕະພັນແລະການບໍລິການເພື່ອສະໜອງການທົດແທນປລາສຕິກທີ່ນໍາໃຊ້ໄດ້ເທື່ອດຽວ.

***ອົງການ Plan International Deutschland eV:*** ອົງການ Plan International ເປັນອົງການສົ່ງເສີມສິດທິເດັກທີ່ບໍ່ຫວັງຜົນກໍາໄລ ເຄື່ອນໄຫວຢູ່ໃນຫຼາຍກວ່າ 45 ປະເທດທີ່ກໍາລັງພັດທະນາໃນອາຟຣິກາ, ອາຊີ ແລະ ອາເມລິກາລາຕິນ. ປະຈຸບັນ ອົງການ Plan International ປະຈໍາລາວ ກໍາລັງຈັດຕັ້ງປະຕິບັດໂຄງການ SUSTOUR Laos ທີ່ໄດ້ຮັບທຶນຈາກສະຫະພາບເອີຣົບພາຍໃຕ້ໂຄງການ SWITCH-Asia ເຊິ່ງເຮັດວຽກຮ່ວມກັນກັບສະພາການຄ້າ ແລະ ອຸດສາຫະກໍາແຫ່ງຊາດລາວ (ສຄອຊ), ກະຊວງອຸດສາຫະກໍາ ແລະ ການຄ້າ (ອຄ) ແລະ ສູນການທ່ອງທ່ຽວແບບນິເວດ ແລະ ກະສິກໍາຂອງເອີຣົບ. ໂຄງການ SUSTOUR Laos ແມ່ນມຸ້ງເນັ້ນສົ່ງເສີມການປະຕິບັດການບໍລິໂພກແບບຍືນຍົງ (SCP) ໃນບັນດາວິສາຫະກິດຂະໜາດຍ່ອຍ, ຂະໜາດນ້ອຍ ແລະ ຂະໜາດກາງ (MSMEs) ໃນຂະແໜງທ່ອງທ່ຽວ. ໂດຍການສະໜັບສະໜູນບັນດາວິສາຫະກິດໃຫ້ຍຶດໝັ້ນມາດຕະຖານການທ່ອງທ່ຽວແບບຍືນຍົງ ທີ່ໄດ້ຮັບການຮັບຮອງຈາກ ໂຄງການໃບຢັ້ງຢືນ ທຣາເວວໄລຟ໌ (Travellife) ແລະ ລາວຍືນຍາວ (Lasting Laos). ອົງການ Plan International ຈະຮັບຜິດຊອບຕໍ່ຜົນໄດ້ຮັບ ແລະ ການດໍາເນີນງານຂອງອົງປະກອບທີ 3. ນີ້ຈະລວມມີການສະໜັບສະໜູນທຸລະກິດການທ່ອງທ່ຽວ ແລະ ການໂຮງແຮມ ທີ່ຈະມີການທົດລອງ 20 ແຫ່ງໃນແຕ່ລະເມືອງ (ເຊັ່ນ: ໂຮງແຮມ, ຮ້ານອາຫານ, ບາ,

ແລະຜູ້ປະກອບການທ່ອງທ່ຽວ) ດ້ວຍການປ່ຽນຜ່ານການນຳໃຊ້ປລາສຕິກທີ່ໃຊ້ໄດ້ເທື່ອດຽວ. ອົງການ Plan International ຈະຮັບຜິດຊອບໃນການດຳເນີນການປະເມີນພື້ນຖານ ແລະ ຕິດຕາມວິທີການດຳເນີນທຸລະກິດໃຫ້ມີຄວາມຍືນຍົງທາງດ້ານສິ່ງແວດລ້ອມ ແລະ ສັງຄົມຫຼາຍຂຶ້ນ, ພ້ອມທັງສະໜັບສະໜູນໃຫ້ທຸລະກິດເຫຼົ່ານັ້ນໄດ້ຮັບການຢັ້ງຢືນພາຍໃຕ້ໂຄງການ ລາວຍືນຍາວ (Lasting Laos). ອົງການ Plan International ຍັງຈະມີຄວາມຮັບຜິດຊອບພາຍໃຕ້ອົງປະກອບທີ 1 ກ່ຽວກັບກິດຈະກຳທີ່ກ່ຽວຂ້ອງກັບການພັດທະນາ ແລະ ເສີມສ້າງມູນຄ່າການອອກໃບຢັ້ງຢືນ. ເຊິ່ງຕ້ອງອາໄສໃຫ້ມີການຮ່ວມມືກັບ ສຄອຊ.

***WWF ລາວ.*** WWF Laos ເປັນຫ້ອງການໂຄງການພາຍໃຕ້ WWF-International. ອົງການ WWF ປະຈຳລາວ ຈະໃຫ້ການສະໜັບສະໜູນດ້ານການບໍລິຫານ ແລະ ວິຊາການ ແກ່ໜ່ວຍງານຈັດຕັ້ງປະຕິບັດຫຼັກ, ກົມສິ່ງແວດລ້ອມ (ໃນ ກຊສ), ລວມທັງການສະໜັບສະໜູນການຄຸ້ມຄອງໂຄງການ, ການສະໜັບສະໜູນການຈັດຊື້ ແລະ ການຄຸ້ມຄອງການເງິນຂອງໂຄງການ. ນອກຈາກນັ້ນ, ອົງການ WWF-Laos ຍັງຈະຮັບຜິດຊອບການຈັດຕັ້ງປະຕິບັດບາງກິດຈະກຳໂດຍກົງ. ໃນນັ້ນລວມເຖິງການພັດທະນາແຜນປະຕິບັດງານປລາສຕິກຕົວເມືອງພາຍໃຕ້ອົງປະກອບ 1; ການວິເຄາະກະແສວັດສະດຸ ແລະການວິໄຂຕະຫຼາດພາຍໃຕ້ອົງປະກອບ 2; ການວິໄຈການຕະຫຼາດ ແລະ ຍຸດທະສາດການຕະຫຼາດ, ແລະ ການສຶກສາສຸຂະອະນາໄມພາຍໃຕ້ອົງປະກອບທີ 3; ແລະການຈັດການຄວາມຮູ້, ການສື່ສານ ແລະ ການປະສານງານພາຍໃຕ້ອົງປະກອບ 4.

<u>ໜ່ວຍງານຫຼາຍຝ່າຍ</u>

ອົງການ ***Agence Française de Développement :*** ອົງການ AFD ແມ່ນສະຖາບັນການເງິນເພື່ອການພັດທະນາສອງຝ່າຍ ທີ່ສ້າງຕັ້ງຂຶ້ນໃນປີ 1941 ເຊິ່ງເຮັດວຽກໃນນາມຂອງລັດຖະບານຝຣັ່ງ. ພາລະກິດຂອງ AFD ແມ່ນໃຫ້ການສະໜັບສະໜູນທາງການເງິນສຳລັບການພັດທະນາຕາມນະໂຍບາຍການຮ່ວມມືການພັດທະນາຂອງຝຣັ່ງ. ອົງການ AFD ຈະເປັນພັນທະມິດທ້ອງຖິ່ນທີ່ຈະສະໜອງທຶນຊ່ວຍເຫຼືອລ້າ (ລໍຖ້າການຢືນຢັນ) ຈາກ ອົງການ Facility for Global Environment (FFEM) ຂອງຝຣັ່ງ, ໂດຍໄດ້ຮັບການສະໜັບສະໜູນຈາກກະຊວງເອີຣົບ ແລະ ການຕ່າງປະເທດຂອງຝຣັ່ງ ແລະ ກະຊວງການປ່ຽນລະບົບນິເວດ ແລະ ການເຮັດວຽກຮ່ວມກັນໃນທ້ອງຖິ່ນ. ທັງສອງໂຄງການຈະເຮັດວຽກຮ່ວມກັນໃນທຸກອົງປະກອບ, ໂດຍ GEF ໄດ້ສຸມໃສ່ຫາຕົ້ນທາງແລະ FFEM ຈະເນັ້ນໃສ່ປາຍນທາງ. ການຊ່ວຍເຫຼືອທາງດ້ານການເງິນແກ່ພາກເອກະຊົນຍັງສາມາດໄດ້ຮັບຈາກ FFEM, ລວມທັງການຊ່ວຍເຫຼືອລ້າສຳລັບວິສາຫະກິດ ແລະ ທຸລະກິດການທ່ອງທ່ຽວ ແລະ ການໂຮງແຮມທົດລອງ (ວິທີການນີ້ເຮັດໃຫ້ຮັບຮູ້ວ່າການສະໜັບສະໜູນດ້ານວິຊາການຢ່າງດຽວແມ່ນບໍ່ສາມາດເຮັດໃຫ້ປະສົບຜົນສຳເລັດໄດ້). AFD ຈະມີຕົວແທນຢູ່ໃນຄະນະກຳມະການຊີ້ນຳໂຄງການໂດຍລວມ.

ສ້າງຄວາມສາມາດໃຫ້ແກ່ລາວໃນການຈັດການສິ່ງເສດເຫຼືອ ແລະ ມົນລະພິດ, ປັບປຸງການຈັດການຂີ້ເຫຍື້ອມູນຝອຍຂອງເທດສະບານໃນເຂດເປົ້າໝາຍໃນ ສປປ ລາວ, ແລະ ໃຫ້ການຕອບສະໜອງຢ່າງທັນການ ແລະ ມີປະສິດທິພາບໃນກໍລະນີເກີດວິກິດການ ຫຼື ພາວະສຸກເສີນ. ອົງປະກອບທີ່ສຳຄັນລວມມີການປະຕິບັດນະໂຍບາຍ ແລະ ການເພີ່ມສັກກະຍະພາບ, ການດຳເນີນງານການຈັດການສິ່ງເສດເຫຼືອ ແລະ ປລາສຕິກ ແລະ ການລົງທຶນ (ໂຄງລ່າງພື້ນຖານການກົບຝັງຂີ້ເຫຍື້ອ (ກມ32 ແລະ ກມ16), ສະຖານີໂອນຂີ້ເຫຍື້ອ ແລະ ສິ່ງອຳນວຍຄວາມສະດວກໃນການຈັດການຂີ້ເຫຍື້ອແບບປະສົມປະສານ). ເນື່ອງຈາກໂຄງການຄຸ້ມຄອງ

ມືນລະພິດ ແລະ ສິ່ງເສດເຫຼືອ (PWMP) ຈະເນັ້ນໃສ່ນະຄອນຫຼວງວຽງຈັນເປັນສ່ວນໃຫຍ່, ຈຶ່ງເປັນສິ່ງສຳຄັນສຳລັບໂຄງການ GEF ທີ່ຈະຮັກສາການສື່ສານຢ່າງໃກ້ຊິດກັບທະນາຄານໂລກກ່ຽວກັບການພັດທະນາ ແລະ ການຮ່ວມມືກັນ/ຜົນກະທົບທີ່ອາດຈະເກີດຂຶ້ນໃນທົ່ວທັງສອງໂຄງການ. ທະນາຄານໂລກຍັງຈະໄດ້ຮັບການເຊື້ອເຊີນໃຫ້ເຂົ້າຮ່ວມກອງປະຊຸມສຳມະນາທີ່ສຳຄັນ ແລະ ກອງປະຊຸມທີ່ກ່ຽວຂ້ອງ.

***ທະນາຄານພັດທະນາອາຊີ (ADB):*** ADB ກຳລັງດຳເນີນໂຄງການກໍ່ສ້າງພື້ນຖານໂຄງລ່າງການທ່ອງທ່ຽວໃນອະນຸພາກພື້ນແມ່ນ້ຳຂອງ (GMS) ເພື່ອການຂະຫຍາຍການເຕີບໂຕທີ່ຄອບຄຸມ, ເຊິ່ງລວມມີການປັບປຸງການຄຸ້ມຈັດການສິ່ງເສດເຫຼືອ ແລະ ການພັດທະນາບ່ອນກົບຝັງຂີ້ເຫຍື້ອໃນເມືອງວັງວຽງ. ໂຄງການ ADB ຮັບຮູ້ວ່າການຫຼຸດຜ່ອນການກຳຈັດສິ່ງເສດເຫຼືອ ແລະ ການເພີ່ມອັດຕາການແຍກຂີ້ເຫຍື້ອແມ່ນມີຄວາມສຳຄັນທີ່ເຮັດໃຫ້ການດຳເນີນງານຂອງບ່ອນກົບຝັງຂີ້ເຫຍື້ອມີຄວາມໝັ້ນຄົງທາງດ້ານການເງິນໄດ້. ດັ່ງນັ້ນ, ຈະມີການຮ່ວມມືທີ່ສຳຄັນລະຫວ່າງສອງໂຄງການ. ADB ຍັງເລີ່ມໂຄງການ ລົງທຶນປັບປຸງສິ່ງແວດລ້ອມຕົວເມືອງຢູ່ຫຼວງພະບາງ, ເຊິ່ງລວມມີອົງປະກອບການຈັດການຂີ້ເຫຍື້ອ, ລວມທັງການພັດທະນາບ່ອນຖິ້ມຂີ້ເຫຍື້ອ. ເນື່ອງຈາກ ADB ກຳລັງດຳເນີນງານຢູ່ໃນທັງວັງວຽງ ແລະ ວຽງຈັນ, ມັນເປັນສິ່ງສຳຄັນສຳລັບໂຄງການ GEF ທີ່ຈະຮັກສາການສື່ສານຢ່າງໃກ້ຊິດກັບ ADB ກ່ຽວກັບການພັດທະນາແລະການຮ່ວມມື/ຜົນກະທົບທີ່ອາດຈະເກີດຂຶ້ນລະຫວ່າງສອງໂຄງການໃນຕົວເມືອງດັ່ງກ່າວ, ລວມເຖິງລະດັບຊາດ. ADB ຍັງຈະໄດ້ຮັບການເຊື້ອເຊີນໃຫ້ເຂົ້າຮ່ວມກອງປະຊຸມສຳມະນາທີ່ສຳຄັນ ແລະ ກອງປະຊຸມທີ່ກ່ຽວຂ້ອງ.

**ອົງການຈັດຕັ້ງທີ່ບໍ່ຂຶ້ນກັບລັດຖະບານໃນທ້ອງຖິ່ນ/ຊຸມຊົນ**

***ອົງການຈັດຕັ້ງມະຫາຊົນລາວ / ອົງການຈັດຕັ້ງແຫ່ງຊາດ:*** ມີຫຼາຍອົງການຈັດຕັ້ງພທີ່ ເຮັດໜ້າທີ່ຫຼາຍບົດບາດຂອງສັງຄົມພົນລະເຮືອນໃນລາວ, ລວມທັງສະຫະພັນແມ່ຍິງລາວ (ສຍລ), ສູນກາງຊາວໜຸ່ມປະຊາຊົນປະຕິວັດລາວ (ຄຊປປລ), ແລະສະຫະພັນກຳມະບານລາວ (ສກລ). ພວກເຂົາມີບົດບາດຢ່າງຕັ້ງໜ້າໃນການພັດທະນາລະດັບທ້ອງຖິ່ນ ແລະ ລະດັບຊາດ, ລວມເຖິງການສ້າງຈິດສຳນຶກ, ການຝຶກອົບຮົມ ແລະ ການພັດທະນາຂີດຄວາມສາມາດ, ການຈັດຕັ້ງກິດຈະກຳທີ່ມີຖານຊຸມຊົນ, ແລະ ເປັນເຈົ້າການອຳນວຍຄວາມສະດວກໃຫ້ແກ່ຄູ່ຮ່ວມພັດທະນາໃນເຂດຊົນນະບົດ. ກຸ່ມເຫຼົ່ານີ້ມີເຄືອຂ່າຍສາຍຕັ້ງທີ່ໜັກແໜ້ນ, ໂດຍສ່ວນໃຫຍ່ມີຕົວແທນໃນແຕ່ລະບ້ານທີ່ເຊື່ອມໂຍງກັບຂັ້ນເມືອງ, ແຂວງ ແລະ ລະດັບຊາດ. ດັ່ງນັ້ນ, ກຸ່ມເຫຼົ່ານີ້ຈະເປັນປະໂຫຍດຫຼາຍສຳລັບໂຄງການ, ແລະສາມາດຊ່ວຍອຳນວຍຄວາມສະດວກ / ປະສານງານຂະບວນການປຶກສາຫາລື, ການເຜີຍແຜ່ຂໍ້ມູນຂ່າວສານ ແລະ ການປູກຈິດສຳນຶກ.

***ອົງການຈັດຕັ້ງທີ່ບໍ່ຫວັງຜົນກຳໄລໃນທ້ອງຖິ່ນ (NPO)/ອົງການຈັດຕັ້ງທີ່ບໍ່ຂຶ້ນກັບລັດຖະບານ (NGOs):*** ມີຫຼາຍອົງການ NGO ທີ່ເຮັດວຽກເພື່ອປັບປຸງການຈັດການຂີ້ເຫຍື້ອມູນຝອຍຢູ່ໃນລາວ. Zerowaste Laos ເປັນສະມາຄົມທີ່ນຳພາໂດຍໄວໜຸ່ມທີ່ເນັ້ນໃສ່ບັນຫາສິ່ງແວດລ້ອມຕ່າງໆລວມທັງການສົ່ງເສີມການຫຼຸດຜ່ອນຂີ້ເຫຍື້ອປລາສຕິກ ໂດຍການຊຸກຍູ້ໃຫ້ປະຊາຊົນຊື້ຜະລິດຕະພັນທີ່ຫຸ້ມຫໍ່ປລາສຕິກໃຫ້ໜ້ອຍລົງ ແລະ ນຳເອົາປລາສຕິກທີ່ມີຢູ່ແລ້ວມາໃຊ້ໃໝ່ເຊັ່ນ: ຕຸກນ້ຳ. Zerowaste Laos ຈັດກອງປະຊຸມສຳມະນາ ແລະ ການໂຄສະນາ ເພື່ອດຶງດູດຊາວໜຸ່ມ. Green Vientiane ເປັນກຸ່ມອາສາສະໝັກທີ່ສົ່ງເສີມການຈັດການສິ່ງເສດເຫຼືອແບບຍືນຍົງ ໂດຍຜ່ານການໂຄສະນາປູກຈິດສຳນຶກ, ການອະນາໄມຂີ້ເຫຍື້ອ, ການສ້າງຄວາມອາດສາມາດ

ແລະ ການແບ່ງປັນຄວາມຮູ້. ກຸ່ມເຫຼົ່ານີ້ຈະໄດ້ຮັບການປຶກສາຫາລືກ່ຽວກັບກິດຈະກຳແລະຜົນກະທົບ ແລະ ຈະເປັນປະໂຫຍດຫຼາຍສຳລັບ ໂຄງການ, ເຊັ່ນ: ການຊ່ວຍເຫຼືອການເຜີຍແຜ່ຂໍ້ມູນຂ່າວສານ, ການປູກຈິດສຳນຶກ ແລະ ການປຶກສາຫາລືກ່ຽວກັບກິດຈະກຳ ແລະ ຜົນກະທົບ.

<u>**ພາກສ່ວນເອກະຊົນ**</u>

***ສະພາການຄ້າ ແລະ ອຸດສາຫະກຳ ແຫ່ງຊາດລາວ (LNCCI):*** ສຄອຊ ເປັນອົງການເອກະລາດທີ່ເປັນຕົວແທນຂອງຊຸມຊົນທຸລະກິດໃນ ສປປ ລາວ. ເປັນການເຊື່ອມໂຍງລະຫວ່າງວິສາຫະກິດພາກລັດ ແລະ ເອກະຊົນ ແລະ ເປັນຕົວແທນໃຫ້ແກ່ຜູ້ໃຊ້ແຮງງານ, ກຸ່ມບໍລິສັດ ແລະ ການຮ່ວມທຶນໃນທົ່ວທຸກໜ່ວຍງານທີ່ໄດ້ຮັບການສ້າງຕັ້ງຂຶ້ນຕາມກົດໝາຍຂອງ ສປປ ລາວ. ປັດຈຸບັນມີສະມາຊິກກວ່າ 4.000 ຄົນທີ່ຕາງໜ້າຜ່ານສະພາການຄ້າໃນ 18 ແຂວງ ແລະ ສະມາຄົມນັກທຸລະກິດ ແລະ ກຸ່ມບໍລິສັດ. LNCCI, ໄດ້ຮັບການສະໜັບສະໜູນຈາກ GIZ ແລະ ECONOX, ໄດ້ດຳເນີນໂຄງການກາໝາຍ ສປປ ລາວ ປາສະຈາກປລາສຕິກ (Plastic Free Laos Label), ເຊິ່ງ ຍັ້ງຢືນທຸລະກິດສີຂຽວທີ່ມຸ່ງໝັ້ນໃນການຫຼຸດຜ່ອນການໃຊ້ປລາສຕິກທີ່ໃຊ້ຄັ້ງດຽວ. ໂຄງການນີ້ມີຈຸດປະສົງເພື່ອອຳນວຍຄວາມສະດວກໃນການຫຼຸດຜ່ອນການນຳໃຊ້ປລາສຕິກທີ່ໃຊ້ແລ້ວຖິ້ມໂດຍການສະໜອງການສຶກສາ, ເຄື່ອງມື, ແລະ ການຍັ້ງຢືນວິສາຫະກິດ. ສຄອຊ ຍັງຮ່ວມມືກັບ ອົງການ Plan International ເພື່ອດຳເນີນໂຄງການ ການຍັ້ງຢືນ SUSTOUR Laos ແລະ ລາວຍືນຍາວ (Lasting Laos), ເຊິ່ງອຸທິດຕົນເພື່ອສົ່ງເສີມການປະຕິບັດ ການບໍລິໂພກແບບຍືນຍົງໃນບັນດາວິສາຫະກິດຂະໜາດຍ່ອຍ, ຂະໜາດນ້ອຍ ແລະ ຂະໜາດກາງ (MSMEs) ໃນຂະແໜງ ທ່ອງທ່ຽວ. LNCCI ຈະຮ່ວມມືກັບອົງການ Plan International, ກຊສ, ແລະ ອຄ ໃນການຈັດຕັ້ງ ປະຕິບັດອົງປະກອບທີ 1, ເຊິ່ງຄົ້ນຄວ້າຫາການເສີມສ້າງມູນຄ່າການຍັ້ງຢືນ ແລະ ການເຊື່ອມໂຍງກັບນະໂຍບາຍ ທີ່ກວ້າງຂວາງ, ພ້ອມທັງຂະຫຍາຍເງື່ອນໄຂ ແລະ ການນຳໃຊ້ການຍັ້ງຢືນລາວຍືນຍາວ (Lasting Laos) (ລວມທັງຄວາມສາມາດຂອງຄູຝຶກສອນ ແລະ ຜູ້ປະເມີນຂອງ ສຄອຊ). ດັ່ງນັ້ນ, ສຄອຊ ຈະມີບົດບາດສຳຄັນໃນການດຳເນີນໂຄງການ ແລະ ຊ່ວຍເຜີຍແຜ່ຂໍ້ມູນ ແລະ ບົດຮຽນຈາກໂຄງການ.

***ສະມາຄົມໂຮງແຮມ ແລະ ຮ້ານອາຫານ ແຫ່ງ ສປປ ລາວ:*** ເປັນສະມາຄົມໂຮງແຮມ, ເຮືອນພັກ ແລະ ຮ້ານອາຫານທີ່ສ້າງຕັ້ງຂຶ້ນພາຍໃຕ້ ສຄອຊ, ແນໃສ່ພັດທະນາອຸດສາຫະກຳໂຮງແຮມ ແລະ ປະກອບສ່ວນເຂົ້າໃນ ການພັດທະນາຂະແໜງການທ່ອງ ທ່ຽວ ແລະ ການບໍລິການໃນ ສປປ ລາວ. ໂຮງແຮມ ແລະ ຮ້ານອາຫານທີ່ຖືກຄັດເລືອກໃນເມືອງເປົ້າໝາຍ ຈະຖືກເຊີນເຂົ້າຮ່ວມໂຄງການທົດລອງທີ່ສະເພາະເຈາະຈົງໃນແຕ່ເມືອງເພື່ອຢຸດຕິ ຫຼື ຫຼຸດຜ່ອນ ປລາສຕິກທີ່ນຳໃຊ້ໄດ້ເທື່ອດຽວອັນເປັນບັນຫາ ໃນພາກສ່ວນອາຫານ ແລະ ເຄື່ອງດື່ມພາຍໃຕ້ອົງປະກອບ 2. ສະມາຄົມໂຮງແຮມ ແລະ ຮ້ານອາຫານ ຈະໄດ້ຮັບການປຶກສາຫາລືກ່ຽວກັບເງື່ອນໄຂ ແລະ ການຄັດເລືອກທຸລະກິດທົດລອງ, ແລະ ຂໍ້ມູນ ແລະ ບົດຮຽນຈາກໂຄງການຈະຖືກແຈກຢາຍໃຫ້ສະມາຄົມເພື່ອການສົ່ງເສີມທີ່ກວ້າງຂວາງຂຶ້ນ.

***ສະມາຄົມທຸລະກິດທ່ອງທ່ຽວລາວ ແລະ ກຸ່ມການທ່ອງທ່ຽວ:*** ສທທລ ແມ່ນກຸ່ມຕົວແທນພາກເອກະຊົນທີ່ເປັນອິດສະຫຼະ, ສະໝັກໃຈ, ສ້າງຕັ້ງຂຶ້ນພາຍໃຕ້ ສຄອຊ. ສະມາຊິກຂອງສະມາຄົມແມ່ນປະກອບດ້ວຍຕົວແທນການທ່ອງທ່ຽວແລະຜູ້ປະກອບການ

ດ້ານການນຳທ່ຽວ. ໜຶ່ງໃນຈຸດປະສົງຂອງສະມາຄົມແມ່ນເພື່ອສົ່ງເສີມການພັດທະນາອຸດສາຫະກຳການທ່ອງທ່ຽວແບບຍືນຍົງໃນ ສປປ ລາວ. ຂໍ້ມູນ ແລະ ບົດຮຽນຈາກໂຄງການຈະຖືກແຈກຢາຍໃຫ້ກຸ່ມເພື່ອການສົ່ງເສີມທີ່ກວ້າງຂວາງຂຶ້ນ.

***Makerbox Lao:*** ດຳເນີນງານເປັນອົງກອນທີ່ບໍ່ຫວັງຜົນກຳໄລ, ໄດ້ຮັບທຶນຈາກຫຼາຍອົງການຈັດຕັ້ງ. ເປັນພື້ນທີ່ເຮັດວຽກຮ່ວມກັນສຳລັບການສ້າງ, ການຮຽນຮູ້, ການສຳຫຼວດ, ແລະການແບ່ງປັນທີ່ໃຊ້ເຕັກໂນໂລຢີຂັ້ນສູງ ໄປຈົນເຖິງ ເຄື່ອງມືທຳມະດາສຳລັບເດັກນ້ອຍ, ຜູ້ໃຫຍ່, ແລະ ຜູ້ປະກອບການ. ໃຫ້ການສະໜັບສະໜູນ, ຄຳແນະນຳ, ການໃຫ້ຄຳປຶກສາຫາລື ແລະ ການຝຶກອົບຮົມສຳລັບຜູ້ຊ່ຽວຊານດ້ານອຸດສາຫະກຳ, ອຸປະກອນການສຶກສາ ແລະ ອາຈານຈາກ ມະຫາວິທະຍາໄລ. Makerbox Lao ມີພື້ນທີ່ສຳລັບການສ້າງ ແລະ ພື້ນທີ່ເຮັດວຽກຮ່ວມກັນທີ່ສະໜອງໃຫ້ແກ່ການພັດທະນາຜະລິດຕະພັນທາງເລືອກ (ໃນຂັ້ນຕອນການເຮັດຕົ້ນແບບ), ແລະຄວາມສາມາດໃນການສະໜັບສະໜູນໂຄງການ Eco-challenges ແລະ ໂປແກຼມການຝຶກອົບຮົມທາງດ້ານທຸລະກິດ.

**Econox:** ເປັນວິສາຫະກິດທີ່ມີຈຸດປະສົງເພື່ອຮັບເອົາແນວຄວາມຄິດປະດິດສ້າງເຂົ້າໃນການສ້າງຄວາມສົມດຸນລະຫວ່າງການອະນຸລັກ ແລະ ການພັດທະນາສິ່ງແວດລ້ອມ. Econox Laos ເຮັດວຽກເພື່ອປັບປຸງຂັ້ນຕອນຂອງສິ່ງແວດລ້ອມທຳມະຊາດ ແລະ ການພັດທະນາທີ່ຍືນຍົງຂອງຊຸມຊົນໃນ ສປປ ລາວ ໂດຍຜ່ານ (ກ) ການປະເມີນຜົນກະທົບຕໍ່ສັງຄົມ-ສິ່ງແວດລ້ອມ; (b) ການພັດທະນາແບບຍືນຍົງຂອງຊຸມຊົນ ແລະ ການປົກປັກຮັກສາຊັບພະຍາກອນທຳມະຊາດ; (c) ຄວາມຮັບຜິດຊອບຕໍ່ສັງຄົມຂອງບໍລິສັດ; (d) ການສ້າງຂີດຄວາມສາມາດ ແລະ ການຝຶກອົບຮົມ; (e) ການຜະລິດ ແລະ ການສະໜອງຜະລິດຕະພັນທີ່ເປັນມິດກັບສິ່ງແວດລ້ອມ; ແລະ (f) ນັກຂ່າວສິ່ງແວດລ້ອມ.

***ວິສາຫະກິດທ້ອງຖິ່ນ:*** ແມ່ນທຸລະກິດທ້ອງຖິ່ນທີ່ກຳລັງຊອກຫາການພັດທະນາຜະລິດຕະພັນ ແລະ ການບໍລິການດ້ານອາຫານ ແລະ ເຄື່ອງດື່ມ (ເຊັ່ນ: ການບໍລິການເຕີມສິນຄ້າ) ເພື່ອຈຳໜ່າຍໃນທຸລະກິດການທ່ອງທ່ຽວ ແລະ ການໂຮງແຮມ. ວິສາຫະກິດເຫຼົ່ານີ້ຈະໄດ້ຮັບການເຊື້ອເຊີນເຂົ້າຮ່ວມໂຄງການບົ່ມເພາະທຸລະກິດເປັນໄລຍະເວລາ 6 ເດືອນໃນເບື້ອງຕົ້ນ, ເຊິ່ງຈະລວມມີກອງປະຊຸມສຳມະນາ ແລະ ການສະໜັບສະໜູນດ້ານວິຊາການ / ທຸລະກິດເພື່ອຊ່ວຍພັດທະນາທຸລະກິດ ແລະ ຂໍ້ສະເໜີຂອງພວກເຂົາ. ຫຼັງຈາກນັ້ນ ຈະມີການຈັດການແຂ່ງຂັນໃນຮູບແບບຂອງ Eco-Challenge ເພື່ອຄັດເລືອກເອົາຫ້າທຸລະກິດທີ່ດີທີ່ສຸດ, ເຊິ່ງຈະໄດ້ຮັບການໃຫ້ຄຳປຶກສາດ້ານວິຊາການ ແລະ ທຸລະກິດແບບໜຶ່ງຕໍ່ໜຶ່ງ (ລວມເຖິງການສະໜັບສະໜູນທາງດ້ານການເງິນຜ່ານ FFEM) ຕະຫຼອດໄລຍະສາມປີ.

***ທຸລະກິດການທ່ອງທ່ຽວ ແລະ ການໂຮງແຮມ:*** ທຸລະກິດທົດລອງ ຈຳນວນ 20 ແຫ່ງ (ເຊັ່ນ: ໂຮງແຮມ, ເຮືອນພັກ, ຮ້ານອາຫານ, ບາ, ແລະ ຜູ້ປະກອບການທ່ອງທ່ຽວ) ໃນແຕ່ລະເມືອງເປົ້າໝາຍທັງ 3 ເມືອງ ຈະໄດ້ຮັບການສະໜັບສະໜູນດ້ານວິຊາການ ແລະ ການໃຫ້ຄຳປຶກສາຕະຫຼອດໃນໄລຍະ 3 ປີ ໃນການຫັນປ່ຽນຈາກການນຳໃຊ້ປລາສຕິກທີ່ນຳໃຊ້ໄດ້ເທື່ອດຽວ, ການຮັບຮອງເອົາແນວທາງການປະຕິບັດແບບຍືນຍົງມາໃຊ້ ແລະ ໄດ້ຮັບການຮັບຮອງໃນລະບົບການຍັ້ງຢືນ. ຜະລິດຕະພັນ ແລະ ການບໍລິການໃໝ່ຈາກວິສາຫະກິດຈະຖືກທົດລອງໃນໂຄງການເຫຼົ່ານີ້ (ດ້ວຍການສະໜັບສະໜູນທາງດ້ານການເງິນ / ເງິນອຸດໜູນຈາກ FFEM). ແນວທາງການປະຕິບັດທີ່ດີທີ່ສຸດແລະຄວາມສຳເລັດຈາກຈາກໂຄງການທົດລອງເຫຼົ່ານີ້ຈະຖືກຜັກດັນໃຫ້ເປັນທີ່ຮູ້ຈັກໃນແວດວົງທຸລະກິດຢ່າງກວ້າງຂວາງໂດຍຜ່ານການສື່ສານ, ຊຸດເຄື່ອງມື, ກອງປະຊຸມ, ແລະ ງານວາງສະແດງການຄ້າ.

ໂຄງການຍັງຮັບຮູ້ເຖິງຄວາມສຳຄັນຂອງພະນັກງານທີ່ເຮັດວຽກໃນທຸລະກິດຂະແໜງການທ່ອງທ່ຽວ ແລະ ການໂຮງແຮມເຫຼົ່ານີ້ (ເຊັ່ນ: ພະນັກງານຮ້ານອາຫານ ແລະ ໂຮງແຮມ). ການແນະນຳຜະລິດຕະພັນ ແລະ ການບໍລິການໃໝ່ມີແນວໂນ້ມ ທີ່ຈະປະສົບຜົນສຳເລັດຫຼາຍຂຶ້ນຖ້າພະນັກງານເຂົ້າໃຈເຖິງຄວາມສຳຄັນໃນການປ່ຽນຈາກການຊົມໃຊ້ປລາສຕິກທີ່ນຳໃຊ້ໄດ້ເທື່ອດຽວມານຳ ນຳໃຊ້ຜະລິດຕະພັນແລະການບໍລິການທົດແທນ ທີ່ໃຫ້ຄວາມສະດວກເທົ່າກັນ. ໃນໄລຍະການວິໄຈຕະຫຼາດ ແລະ ການປະເມີນພື້ນຖານເບື້ອງຕົ້ນຂອງທຸລະກິດການທ່ອງທ່ຽວ ແລະ ການໂຮງແຮມທີ່ເຂົ້າຮ່ວມໂຄງການທົດລອງ, ຈະມີການສຳຫຼວດຄວາມຄິດເຫັນພະນັກງານເພື່ອເຂົ້າໃຈເຖິງມຸມມອງ, ຄວາມກັງວົນ ແລະ ຄວາມຕ້ອງການ ເພື່ອສະໜັບສະໜູນການເຮັດວຽກຂອງພວກເຂົາ. ພະນັກງານຍັງຈະໄດ້ຮັບການຊ່ວຍເຫຼືອໃນການພັດທະນາຄວາມສາມາດ, ເຕັກນິກຕ່າງໆ (ເຊັ່ນ: ແນວທາງການທຳຄວາມສະອາດດ້ວຍສິ່ງຂອງທີ່ນຳມາໃຊ້ຄືນໄດ້) ແລະ ແນວທາງການປະຕິບັດທີ່ດີທີ່ສຸດໂດຍຜ່ານການສະໜັບສະໜູນຂອງໂຄງການທົດລອງ.

<u>ສະຖາບັນການສຶກສາ</u>

***ມະຫາວິທະຍາໄລແຫ່ງຊາດ:*** ມຊ, ໂດຍສະເພາະຄະນະວິທະຍາສາດສິ່ງແວດລ້ອມ, ໄດ້ມີການຮ່ວມມື ແລະ ປະຕິບັດໜ້າທີ່ຮ່ວມກັບຄູ່ຮ່ວມພັດທະນາຫຼັກ ແລະ ກຊສ ກ່ຽວກັບການຈັດການສິ່ງເສດເຫຼືອ ແລະ ການຄົ້ນຄວ້າວິໄຈ ແລະ ການສຶກສາທີ່ກ່ຽວຂ້ອງ; ການພັດທະນາຫຼັກສູດ ແລະ ການຝຶກອົບຮົມ; ການທົດລອງປະຕິບັດງານຂອງທະນາຄານລີໄຊເຄີນ; ການປູກຈິດສຳນຶກ; ການຕິດຕາມ ແລະ ການປະເມີນຜົນ. ມຊ ຍັງມີຫ້ອງທົດລອງສະເພາະສຳລັບປລາສຕິກ. ມຊ ອາດມີແນວຄວາມຄິດສຳລັບວັດສະດຸທົດແທນທີ່ສາມາດນຳໃຊ້ໃນລາວ ແລະ ອາດມີສາຍພົວພັນກັບວິສາຫະກິດທີ່ຕ້ອງການເຂົ້າຮ່ວມໃນໂຄງການການບົ່ມເພາະທຸລກິດ ແລະ Eco-Challenge. ເຊິ່ງອາດມີແນວຄວາມຄິດສຳລັບການແກ້ໄຂຜະລິດຕະພັນທີ່ສາມາດຍ່ອຍສະຫຼາຍໄດ້ເມື່ອສິ້ນສຸດອາຍຸການໃຊ້ງານ. ຂໍ້ມູນ ແລະ ບົດຮຽນຈາກໂຄງການຈະຖືກເຜີຍແຜ່ໃຫ້ ມຊ ເພື່ອການສົ່ງເສີມໃຫ້ກວ້າງຂວາງ.

<u>**ລູກຄ້າ ແລະ ຜູ້ບໍລິໂພກຂັ້ນສຸດທ້າຍ**</u>

***ລູກຄ້າທຸລະກິດ:*** ລູກຄ້າເບື້ອງຕົ້ນຂອງຜະລິດຕະພັນ ແລະ ການບໍລິການໃໝ່ຈະເປັນທຸລະກິດການທ່ອງທ່ຽວ ແລະ ການໂຮງແຮມ (ຕາມລາຍລະອຽດຂ້າງເທິງ). ຫຼັງຈາກນັ້ນ, ລູກຄ້າເຫຼົ່ານີ້ຈະຈັດຂາຍຍ່ອຍ ຜະລິດຕະພັນ ອາຫານ ແລະ ເຄື່ອງດື່ມໃຫ້ແກ່ຜູ້ບໍລິໂພກສຸດທ້າຍ. ຄາດວ່າການນຳເອົາແນວທາງການປະຕິບັດແບບຍືນຍົງກວ່ານີ້ຈະຊ່ວຍປັບປຸງຄວາມສົມດຸນໃນການເຮັດທຸລະກິດທັງສາມດ້ານ (ຄົນ, ກຳໄລ, ໂລກ), ເພີ່ມຍອດຂາຍ, ປັບປຸງຄວາມເພິ່ງພໍໃຈຂອງລູກຄ້າ ແລະ ພະນັກງານ, ແລະ ປະກອບສ່ວນເຂົ້າໃນຄວາມຍືນຍົງດ້ານສິ່ງແວດລ້ອມ. ທຸລະກິດເຫຼົ່ານີ້ຈະໄດ້ຮັບການສະໜັບສະໜູນໂດຍທາງກົງ ແລະ ທາງອ້ອມຈາກໂຄງການ.

***ຜູ້ບໍລິໂພກຂັ້ນສຸດທ້າຍ:*** ບຸກຄົນເຫຼົ່ານີ້ແມ່ນຜູ້ອຸດໜູນທຸລະກິດການທ່ອງທ່ຽວ ແລະ ການໂຮງແຮມ ແລະ ເຊິ່ງອາດລວມມີນັກທ່ອງທ່ຽວຕ່າງປະເທດ, ນັກທ່ອງທ່ຽວພາຍໃນ ແລະ ຊຸມຊົນທ້ອງຖິ່ນ. ຈະມີການວິໄຈຕະຫຼາດເພື່ອທຳຄວາມເຂົ້າໃຈພຶດຕິກຳການຊື້ຂອງພວກເຂົາ ແລະ ເພື່ອກຳນົດຄວາມຕ້ອງການ ແລະ ຄວາມຈຳເປັນຂອງພວກເຂົາຕໍ່ກັບຜະລິດຕະພັນ ອາຫານ ແລະ ເຄື່ອງດື່ມ. ຫຼັງຈາກນັ້ນ, ຈະມີການສ້າງຄວາມຮັບຮູ້ດ້ານການຕະຫຼາດເພື່ອສົ່ງເສີມຜະລິດຕະພັນ ແລະ ການບໍລິການໃໝ່ໃຫ້ແກ່ຜູ້ບໍລິໂພກເຫຼົ່ານີ້. ການນຳເອົາຫຼັກການເສດຖະກິດໝູນວຽນມາໃຊ້ຜ່ານໂຄງການ ຄາດວ່າຈະໃຫ້ຜູ້ບໍລິໂພກ ມີທາງເລືອກຫຼາຍຂຶ້ນ ແລະ ມີປະສິບທີ່ມີຄຸນນະພາບສູງຂຶ້ນ.

## 4. ສັງລວມກິດຈະກຳການມີສ່ວນຮ່ວມຂອງພາກສ່ວນກ່ຽວຂ້ອງທີ່ຜ່ານມາ

**ກອງປະຊຸມທີມງານພາຍໃນ**

ການພັດທະນາໃນໄລຍະ ProDoc ໄດ້ຖືກນຳພາໂດຍ ອົງການ WWF-Laos, ໂດຍໄດ້ຮັບການສະໜັບສະໜູນຢ່າງເປັນປົກກະຕິຈາກອົງການ WWF-US GEF. ທຸກໆສາມອາທິດ, ໄດ້ມີການປະຊຸມລະຫວ່າງ WWF ລາວ ແລະ WWF-US ເພື່ອຮັບປະກັນວ່າ ການອອກແບບ ແລະ ການພັດທະນາ ProDoc ແມ່ນໄປຕາມແຜນທີ່ວາງໄວ້ ແລະ ຈະສາມາດຕອບສະໜອງຕາມຄວາມຕ້ອງການຂອງ ອົງການ GEF ໄດ້.

ອົງການ WWF-Laos ແລະ ກົມສິ່ງແວດລ້ອມ (DoE) ເຊິ່ງເປັນໜ່ວຍງານຜູ້ດຳເນີນໂຄງການຍັງໄດ້ນັດກອງປະຊຸມຢູ່ ກະຊວງສິ່ງແວດລ້ອມ ແລະ ຊັບພະຍາກອນທຳມະຊາດ (ກຊສ) ຢ່າງເປັນປະຈຳ. ກອງປະຊຸມເລີ່ມຕົ້ນໄດ້ຈັດຂຶ້ນເພື່ອສະຫຼູບໂຄງການ ແລະ ຕົກລົງແຕ່ງຕັ້ງທີມພັດທະນາໂຄງການ (PDT), ເຊິ່ງລວມມີພະນັກງານຈາກໂຄງການ WWF, ພະນັກງານລັດ, ແລະ ທີ່ປຶກສາພາຍໃນ ແລະ ຕ່າງປະເທດ. ຫຼັງຈາກນັ້ນ, ທີມພັດທະນາໂຄງການ ໄດ້ດຳເນີນການສື່ສານຢ່າງເປັນປົກກະຕິເພື່ອຈັດກອງປະຊຸມ / ກອງປະຊຸມສຳມະນາ ແລະ ປະສານງານກັບພາກສ່ວນກ່ຽວຂ້ອງທີ່ສຳຄັນ.

ທີມພັດທະນາໂຄງການ ຍັງໄດ້ເຂົ້າຮ່ວມກອງປະຊຸມປະຈຳເດືອນກັບໜ່ວຍງານທີ່ກ່ຽວຂ້ອງໃນໂຄງການລະດັບໂລກ, ລວມເຖິງກອງປະຊຸມທີ່ນຳພາໂດຍຄູ່ຮ່ວມງານ (ຕົວຢ່າງ, ການນຳໃຊ້ຄືນໃຫມ່, ວັດສະດຸທາງເລືອກ, ແລະນະໂຍບາຍ) ເພື່ອຊ່ວຍແຈ້ງການອອກແບບຂອງໂຄງການ.

**ກອງປະຊຸມສອງຝ່າຍ**

ໃນຕອນເລີ່ມຕົ້ນຂອງການອອກແບບໂຄງການ, ທີມງານອອກແບບໄດ້ຮັບຮູ້ວ່າມີຫຼາຍໂຄງການທີ່ໄດ້ດຳເນີນ ຫຼື ກຳລັງດຳເນີນວຽກງານທີ່ກ່ຽວຂ້ອງກັບການຈັດການຂີ້ເຫຍື້ອປລາສຕິກທີ່ນຳໃຊ້ໄດ້ເທື່ອດຽວ ແລະ ການຈັດການຂີ້ເຫຍື້ອມູນຝອຍ. ດັ່ງນັ້ນ, ຈຶ່ງໄດ້ມີການຈັດກອງປະຊຸມສອງຝ່າຍຂຶ້ນເປັນໄລຍະເພື່ອປຶກສາຫາລືຖອດຖອນບົດຮຽນ, ສິ່ງທ້າທາຍ, ໂອກາດໃນການຕໍ່ຍອດວຽກງານທີ່ຜ່ານມາ, ລວມເຖິງສັກກະຍະພາບໃນການເສີມສ້າງຄູ່ຮ່ວມພັດທະນາ. ເຊິ່ງໄດ້ມີການຈັດກອງປະຊຸມສອງຝ່າຍກັບບັນດາໜ່ວຍງານດັ່ງລຸ່ມນີ້:

- ອົງການ Swisscontact : ກອງປະຊຸມສອງຝ່າຍໄດ້ຈັດຂຶ້ນຫຼາຍຄັ້ງກັບ ອົງການ Swisscontact , ໂດຍໃຫ້ຄວາມສຳຄັນກັບປະສົບການຂອງເຂົາເຈົ້າກັບ ໂຄງການສ້າງມູນຄ່າແກ່ສິ່ງເສດເຫຼືອໃນລາວ (Waste to Value in Laos) ແລະງານ Eco-Challenge ທີ່ເຄີຍດຳເນີນມາກ່ອນ. ກອງປະຊຸມເຫຼົ່ານີ້ເຮັດໃຫ້ສາມາດລະບຸໄດ້ວ່າ ອົງການ Swisscontact ເປັນຄູ່ຮ່ວມງານທີ່ມີທ່າແຮງ ແລະ ສາມາດເປັນຜູ້ໄດ້ຮັບເງິນທຶນສະໜັບສະໜູນລະດັບຍ່ອຍ, ໂດຍສະເພາະໃນດ້ານການດຳ

ເນີນກິດຈະກຳພາຍໃຕ້ອົງປະກອບ 2 (ການພັດທະນາວິສາຫະກິດ). ອົງການ Swisscontact ຍັງໄດ້ເຂົ້າຮ່ວມກອງປະຊຸມສໍາມະນານອກອົງກອນທັງໝົດ.

- ອົງການ Plan International: ກອງປະຊຸມສອງຝ່າຍໄດ້ຈັດຂຶ້ນຫຼາຍຄັ້ງກັບອົງການ Plan International, ໂດຍໃຫ້ຄວາມສໍາຄັນກັບປະສົບການຂອງເຂົາເຈົ້າກັບ SUSTOUR Laos ແລະໂຄງການລາວຍືນຍາວ (Lasting Laos). ກອງປະຊຸມເຫຼົ່ານີ້ເຮັດສາມາດລະບຸໄດ້ວ່າອົງການ Plan International ເປັນຄູ່ຮ່ວມງານທີ່ມີທ່າແຮງ ແລະ ສາມາດຮັບເງິນທຶນສະໜັບສະໜູນລະດັບຍ່ອຍ, ໂດຍສະເພາະໃນດ້ານການດໍາເນີນກິດຈະກໍາພາຍໃຕ້ອົງປະກອບ 1 (ການເສີມສ້າງຄວາມເຂັ້ມແຂງໃຫ້ແກ່ການຍັ້ງຍືນ) ແລະອົງປະກອບ 3 (ສະໜັບສະໜຸນທຸລະກິດການທ່ອງທ່ຽວ ແລະ ການໂຮງແຮມ). ອົງການ Plan International ຍັງໄດ້ເຂົ້າຮ່ວມກອງປະຊຸມສໍາມະນາໃນນະຄອນຫຼວງວຽງຈັນອີກດ້ວຍ.
- ສຄອຊ: ກອງປະຊຸມໄດ້ຖືກຈັດຂຶ້ນກັບທີມງານ SUTOUR Laos ແລະ ສຄອຊ ເພື່ອປຶກສາຫາລືກ່ຽວ ກັບໂຄງການການຍັ້ງຍືນ Travellife and ລາວຍືນຍາວ (Lasting Laos). ສຄອຊ ຈະມີຄວາມສໍາຄັນໃນຫຼາຍຂອບເຂດຂອງອົງປະກອບ, ລວມທັງພາຍໃຕ້ອົງປະກອບ 1 (ການເສີມສ້າງຄວາມເຂັ້ມແຂງໃຫ້ແກ່ການຍັ້ງຍືນ) ແລະ ການສົ່ງເສີມໂດຍທົ່ວໄປ.
- ອົງການ GGGI: ກອງປະຊຸມສອງຝ່າຍໄດ້ຈັດຂຶ້ນກັບ GGGI ຮ່ວມກັບ ກຊສ. ກອງປະຊຸມຄັ້ງນີ້ໄດ້ພິຈາລະນາວຽກງານທີ່ GGGI ໄດ້ດໍາເນີນການປະຕິບັດແລ້ວ, ລວມທັງໂຄງການ AMUSE, ເຊິ່ງປະກອບດ້ວຍການພັດທະນາທະນາຄານລີໄຊເຄນສິ່ງເສດເຫຼືອ ແລະ ສິ່ງອໍານວຍຄວາມສະດວກໃນການເຮັດປຸ໋ຍໝັກ, ແລະການສ້າງຄວາມສາມາດ. ເຖິງຈະມີການຕັດສິນໃຈວ່າ ອົງການ GGGI ບໍ່ສາມາດເຂົ້າຮ່ວມໂຄງການໄດ້ຢ່າງເປັນທາງການ ແຕ່ກໍມີການຢືນຢັນເຖິງການຮັກສາຄວາມສໍາຄັນຂອງການຕິດຕໍ່ສື່ສານປົກກະຕິ. ອົງການ GGGI ຍັງໄດ້ເຂົ້າຮ່ວມກອງປະຊຸມສໍາມະນາທີ່ນະຄອນຫຼວງວຽງຈັນອີກດ້ວຍ.
- ທະນາຄານໂລກ: ກອງປະຊຸມສອງຝ່າຍໄດ້ຈັດຂຶ້ນກັບທະນາຄານໂລກ, ໂດຍສະເພາະເພື່ອປຶກສາຫາລືກ່ຽວກັບວຽກງານທີ່ຜ່ານມາ (ການສໍາຫຼວດວິນິດໄສ ແລະ ການລະບຸສານມົນລະພິດພາດສະຕິກຫຼັກໃນລາວ) ແລະ ໂຄງການຈັດການມົນລະພິດ ແລະ ສິ່ງເສດເຫຼືອ (PWMP). ການກະກຽມສໍາລັບ ໂຄງການ PWMP ໄດ້ຖືກຢຸດໄວ້ແຕ່ໄດ້ເລີ່ມຄືນໃໝ່ໃນທ້າຍປີ 2024. ໂຄງການດັ່ງກ່າວ ໄດ້ເນັ້ນໃສ່ການພັດທະນາຄວາມສາມາດໃນການຈັດການຂີ້ເຫຍື້ອມູນຝອຍ ແລະ ການຈັດການປລາສຕິກ, ເຊັ່ນດຽວກັນກັບການກໍ່ສ້າງພື້ນຖານໂຄງລ່າງ (ເຊັ່ນ: ບ່ອນກົບຝັງຂີ້ເຫຍື້ອ ແລະ ສະຖານີໂອນຂີ້ເຫຍື້ອ) ໃນນະຄອນຫຼວງວຽງຈັນ. ວຽກງານປລາສຕິກແມ່ນເຊື່ອມຕໍ່ກັບແຜນປະຕິບັດການແຫ່ງຊາດກ່ຽວກັບການຈັດການປລາສຕິກ NPAP (ທີ່ທະນາຄານໂລກຊ່ວຍພັດທະນາ), ໂດຍສຸມໃສ່ການປັບປຸງການລີໄຊເຄີລ. ໂດຍທີ່ທັງສອງໂຄງການຈະປະກອບສ່ວນເຂົ້າໃນ ການພັດທະນາ NPAP, ການຕິດຕໍ່ສື່ສານກັນຢ່າງສະໝໍ່າສະເໝີຈຶ່ງເປັນສິ່ງທີ່ສໍາຄັນ. ທະນາຄານໂລກ ກໍ່ໄດ້ເຂົ້າຮ່ວມກອງປະຊຸມສໍາມະນາ ທີ່ນະຄອນຫຼວງວຽງຈັນ.
- ADB: ກອງປະຊຸມສອງຝ່າຍໄດ້ຈັດຂຶ້ນກັບທີມງານໂຄງການທີ່ຮັບຜິດຊອບໃນການດໍາເນີນໂຄງການໂຄງລ່າງພື້ນຖານດ້ານການທ່ອງທ່ຽວ GMS Laos ຂອງ ADB (ເຮັດວຽກພາຍໃຕ້ ກະຊວງຖະແຫຼງຂ່າວ, ວັດທະນະທໍາ ແລະ ທ່ອງທ່ຽວ) ເຊິ່ງລວມມີການບ່ອນກົບຝັງຂີ້ເຫຍື້ອໃໝ່ໃຫ້ເມືອງວັງວຽງ. ໂຄງການດັ່ງກ່າວຍັງໄດ້ພັດທະນາສະຖານທີ່ຟື້ນຟູວັດສະດຸ ແລະ ຈະຊອກຫາບໍລິສັດເອກະຊົນເພື່ອຈັດການສິ່ງອໍານວຍຄວາມສະດວກ, ນໍາໃຊ້ແຮງງານນອກລະບົບ

ເປັນແຮງງານທີ່ມີຄວາມຍືດຫຍຸ່ນ. ນອກຈາກນີ້, ຍັງມີທ່າແຮງທີ່ຈະພັດທະນາເຄື່ອງຍ່ອຍສະຫຼາຍຂີ້ເຫຍື້ອທາງຊີວະພາບ/ເຄື່ອງເຮັດປຸ໋ຍໝັກ ເຊີງການຄ້າຮ່ວມກັນ (ຮ່ວມກັບ GGGI) ຢູ່ບ່ອນຝັງຂີ້ເຫຍື້ອ. ທີມງານໂຄງການໄດ້ເຂົ້າຮ່ວມກອງປະຊຸມສຳມະນາທີ່ເມືອງວັງວຽງ ແລະ ນະຄອນຫຼວງວຽງຈັນ.

- ຄະນະກຳມາທິການແມ່ນ້ຳຂອງສາກົນ (MRC): ກອງປະຊຸມສອງຝ່າຍໄດ້ຈັດຂຶ້ນກັບ MRC, ໂດຍໄດ້ຍົກໃຫ້ເຫັນເຖິງວຽກງານກວດກາປລາສຕິກໃນແມ່ນ້ຳຂອງ. ໃນລະຫວ່າງໂຄງການ GEF, ຂໍ້ມູນຈາກສະຖານີຕິດຕາມກວດກາຈະຖືກເປີດເຜີຍໃຫ້ສາທາລະນະຊົນ ແລະ ອາດຈະຖືກລວມເຂົ້າໃນຕົວຊີ້ວັດໂຄງການ GEF ໃນພາຍຫຼັງ.
- Makerbox Lao: ກອງປະຊຸມສອງຝ່າຍໄດ້ຈັດຂຶ້ນກັບ Makerbox , ໂດຍໄດ້ປຶກສາຫາລືເຖິງ ປະສົບການຂອງເຂົາເຈົ້າໃນການພັດທະນາຜະລິດຕະພັນຕົ້ນແບບ, ການບົ່ມເພາະທຸລະກິດ, Eco-challenge ແລະ ການຕະຫຼາດ. ກອງປະຊຸມນີ້ເຮັດໃຫ້ Makerbox ຖືກລະບຸວ່າເປັນຄູ່ຮ່ວມງານທີ່ມີທ່າແຮງໃນກິດຈະກຳຍ່ອຍ, ໂດຍສະເພາະໃນການດຳເນີນກິດຈະກຳພາຍໃຕ້ອົງປະກອບ 2 (ການພັດທະນາວິສາຫະກິດ). Makerbox ຍັງໄດ້ເຂົ້າຮ່ວມກອງປະຊຸມສຳມະນາທີ່ວຽງຈັນອີກດ້ວຍ.
- Econox: ກອງປະຊຸມສອງຝ່າຍໄດ້ຈັດຂຶ້ນກັບ Econox , ໂດຍໄດ້ປຶກສາຫາລືເຖິງປະສົບການຂອງເຂົາເຈົ້າກ່ຽວກັບໂຄງການກາໝາຍ ສປປ ລາວ ປາສະຈາກປລາສຕິກ (Plastic Free Laos Label) ແລະ ການລິເລີ່ມໂຄງການ Rent-Your-Cup. ກອງປະຊຸມຄັ້ງນີ້ເຮັດໃຫ້ Econox ຖືກລະບຸວ່າເປັນຄູ່ຮ່ວມທີ່ມີທ່າແຮງໃນກິດຈະກຳຍ່ອຍ, ໂດຍສະເພາະການດຳເນີນກິດຈະກຳພາຍໃຕ້ອົງປະກອບ 3 (ການສະໜັບສະໜູນທຸລະກິດການທ່ອງທ່ຽວ ແລະ ການໂຮງແຮມ). Econox ຍັງໄດ້ເຂົ້າຮ່ວມກອງປະຊຸມສຳມະນາທີ່ວຽງຈັນອີກດ້ວຍ.

**<u>ກອງປະຊຸມສຳມະນາສາທາລະນະ</u>**

ກອງປະຊຸມສຳມະນາສາທາລະນະໄດ້ຈັດຂຶ້ນເປັນໄລຍະໂດຍມີຈຸດປະສົງເພື່ອແຈ້ງໃຫ້ສາທາລະນະ, ລັດຖະບານທ້ອງຖິ່ນ, ພາກສ່ວນເອກະຊົນ, ແລະ NGOs ໄດ້ຮັບຮູ້ກ່ຽວກັບໂຄງການ ແລະ ເພື່ອຮັບຟັງຄຳຄິດເຫັນກ່ຽວກັບການອອກແບບເບື້ອງຕົ້ນ. ໄດ້ມີການຖົກຖຽງກັນວ່າ ຈະຈັດກອງປະຊຸມສຳມະນາພຽງຄັ້ງດຽວຢູ່ນະຄອນຫຼວງວຽງຈັນ ຫຼື ຈັດໃນລະເມືອງ. ໃນທີ່ສຸດ, ກໍເລືອກຈັດກອງປະຊຸມສຳມະນາໃນແຕ່ລະເມືອງ, ໂດຍທີ່ຄຳນຶງເຖິງຂໍ້ຈຳກັດ ແລະ ເອກະລັກຂອງແຕ່ລະເມືອງ, ເຊິ່ງມີແນວໂນ້ມທີ່ຈະເຮັດໃຫ້ຄົນເຂົ້າຮ່ວມຫຼາຍຂຶ້ນ. ສະຫຼຸບແລ້ວ, ມີຜູ້ເຂົ້າຮ່ວມທັງໝົດ 101 ຄົນ, ຍິງ 42 ຄົນ (ຫຼືຄິດເປັນ 41 ສ່ວນຮ້ອຍ), ໄດ້ເຂົ້າຮ່ວມກອງປະຊຸມສຳມະນາ 3 ຄັ້ງ. ເບິ່ງເອກະສານຊ້ອນທ້າຍ 3: ລາຍງານບົດບັນທຶກຂອງກອງປະຊຸມສຳລັບລາຍລະອຽດການປະຊຸມທັງໝົດ.

**<u>ການຍ່າງສຳຫຼວດພື້ນທີ່ຕົວຈິງ</u>**

ການຍ່າງສຳຫຼວດພື້ນທີ່ຕົວຈິງ (transect walk) ເປັນເຄື່ອງມືສຳລັບການອະທິບາຍ ແລະ ສະແດງຕຳແໜ່ງສະຖານທີ່ ແລະ ການກະຈາຍຂອງຊັບພະຍາກອນ, ພື້ນຖານໂຄງລ່າງ, ລັກສະນະທາງສັງຄົມ, ພູມສັນຖານ, ແລະ ການໃຊ້ປະໂຫຍດສ່ວນໃຫຍ່ຕາມເສັ້ນທາງທີ່ກຳນົດ. ວິທີການເຫຼົ່ານີ້ແມ່ນ ເຄື່ອງມືເກັບກຳຂໍ້ມູນທີ່ມີຄວາມສ່ຽງ/ຜົນກະທົບຕ່ຳ ເຊິ່ງເປັນມາດຕະຖານສຳຫຼັບວິທີການທີ່ຄຳນຶງເຖິງບົດບາດຍິງຊາຍ. ໂດຍບໍ່ໃຊ້ລະບົບຕາມລຳດັບຂັ້ນ ແລະ ມີຄວາມເປັນທາງການໜ້ອຍກວ່າກອງປະຊຸມສຳມະນາ,

ເຊິ່ງອະນຸຍາດໃຫ້ມີການເຂົ້າຮ່ວມ ແລະ ການສຳພາດຜູ້ເຂົ້າຮ່ວມໄດ້ຫຼາກຫຼາຍຂຶ້ນ, ເໝາະສົມແກ່ຫຼາຍຄົນທີ່ບໍ່ມັກຈະເຂົ້າຮ່ວມກອງປະຊຸມຢ່າງເປັນທາງການ. ດັ່ງນັ້ນ, ການຍ່າງສຳຫຼວດພື້ນທີ່ຕົວຈິງໄດ້ພິສູດວ່າເປັນວິທີທີ່ສຳຄັນ ໃນການເຂົ້າໃຈສິ່ງທ້າທາຍ ແລະ ໂອກາດໃນພື້ນທີ່, ແລະ ການສັງເກດຈາກການຍ່າງສຳຫຼວດພື້ນທີ່ຕົວຈິງເຫຼົ່ານີ້ໄດ້ປະກອບສ່ວນຢ່າງຫຼວງຫຼາຍໃນການອອກແບບໂຄງການ ແລະ ການອອກແບບຄືນໃຫມ່. ການຍ່າງສຳຫຼວດພື້ນທີ່ຕົວຈິງໄດ້ຖືກຈັດຂຶ້ນພາຍຫຼັງກອງປະຊຸມສຳມະນາຢູ່ທັງສາມຕົວເມືອງ.

<u>**ກອງປະຊຸມສຳມະນາ ແລະ ການຍ່າງສຳຫຼວດເມືອງວັງວຽງ**</u>

***ກອງປະຊຸມສຳມະນາ:*** ເປັນການຈັດກອງປະຊຸມສຳມະນາຄັ້ງທຳອິດ, ທີ່ຈັດຂຶ້ນໃນວັນທີ 13/12/2023, ມີຜູ້ເຂົ້າຮ່ວມທັງໝົດ 30 ທ່ານ. ໃນລະຫວ່າງກອງປະຊຸມສຳມະນາເຄິ່ງມື້ນີ້, ຜູ້ເຂົ້າຮ່ວມທັງໝົດໄດ້ຢືນຢັນເຖິງຄວາມສຳຄັນຂອງລາວຕໍ່ກັບໂຄງການລັກສະນະດັ່ງກ່າວນີ້. ມີປະເດັນສຳຄັນຫຼາຍປະເດັນ, ທີ່ຊ່ວຍໃນການອອກແບບໂຄງການ:

- ສະໜາມຂີ້ເຫຍື້ອແຫ່ງໃໝ່: ເມືອງວັງວຽງ ຈະມີບ່ອນກົບຂີ້ເຫຍື້ອໃໝ່ໃນຕົ້ນປີ 2025. ເຖິງຢ່າງໃດກໍ່ຕາມ, ຍັງປະກົດມີຄວາມທ້າທາຍດ້ານງົບປະມານທຶນຮອນເພື່ອຄຸ້ມຄອງຄ່າໃຊ້ຈ່າຍໃນການປະຕິບັດວຽກງານບ່ອນກົບຝັງ ຂີ້ເຫຍື້ອ. ເຊິ່ງຈະເປັນບັນຫາທົ່ວໄປໃນທົ່ວປະເທດລາວ. ເຊິ່ງກອງປະຊຸມສຳມະນານີ້ໄດ້ເສີມຂະຫຍາຍຄວາມສຳຄັນຂອງການຫຼຸດຜ່ອນ ແລະ ຫັນປ່ຽນສິ່ງເສດເຫຼືອໃນເບື້ອງຕົ້ນ ເພື່ອຫຼຸດຕົ້ນທຶນໃນການຈັດການສິ່ງເສດເຫຼືອຢູ່ປາຍນ້ຳ.
- ການປູກຈິດສຳນຶກ: ເນື່ອງຈາກເມືອງວັງວຽງ ເປັນແຫຼ່ງທ່ອງທ່ຽວທີ່ສຳຄັນ ທີ່ມີບາ, ຮ້ານອາຫານ ແລະ ໂຮງແຮມຫຼາຍແຫ່ງ, ຈຶ່ງມີຄວາມຈຳເປັນໃນການປູກຈິດສຳນຶກຕໍ່ຜົນກະທົບຂອງປລາສຕິກ, ການຫ້າມຖິ້ມຂີ້ເຫຍື້ອຊະຊາຍ, ການຊອກຫາທາງເລືອກ ແລະ ພັດທະນາການແຍກປະເພດ ແລະ ເກັບມ້ຽນວັດສະດຸທີ່ສາມາດນຳມາໃຊ້ຄືນໃໝ່. ໂດຍທີ່ວ່າການສ້າງຈິດສຳນຶກຕ້ອງໃຊ້ເວລາ ແລະ ມີແນວໂນ້ມທີ່ຈະບັນລຸການປ່ຽນແປງໄດ້ຢ່າງຈຳກັດ, ການອອກແບບໂຄງການຈຶ່ງໄດ້ສຸມໃສ່ການຕະຫຼາດຫຼາຍຂຶ້ນໂດຍມີກິດຈະກຳການວິໄຈຕະຫຼາດ ແລະ ການພັດທະນາຍຸດທະສາດ ການຕະຫຼາດ.

**ການຍ່າງສຳຫຼວດພື້ນທີ່ຕົວຈິງ*:*** ການຍ່າງເປັນເວລາເຄິ່ງວັນໄດ້ຖືກຈັດຂຶ້ນໂດຍສົມທົບກັບ ອົງການ Swisscontact ທີ່ມີສຳນັກງານຢູ່ເມືອງວັງວຽງ ລວມເຖິງຜູ້ຕາງໜ້າຈາກລັດຖະບານທ້ອງຖິ່ນ ( ກຊສ , ອົງການພັດທະນາ ແລະ ບໍລິຫານຕົວເມືອງວັງວຽງ UDAA). ເນື່ອງຈາກມີຜູ້ເຂົ້າຮ່ວມຈຳນວນຫຼາຍ, ຈຶ່ງໄດ້ແບ່ງເປັນສອງກຸ່ມລົງສຳຫຼວດ. ກຸ່ມທຳອິດແມ່ນສຳຫຼວດຢູ່ເຂດທ່ອງທ່ຽວຕົ້ນຕໍ, ໃນຂະນະທີ່ກຸ່ມທີສອງໄປພື້ນທີ່ທ້ອງຖິ່ນຂອງເມືອງທີ່ຫ່າງອອກໄປເລັກນ້ອຍ. ໂຮງແຮມຫຼາຍແຫ່ງ ທີ່ໄດ້ໄປຢ້ຽມຢາມແມ່ນໄດ້ດຳເນີນການປະຕິບັດແບບຍືນຍົງແລ້ວ, ເນື່ອງຈາກໄດ້ມີການຝຶກອົບຮົມໂດຍ ອົງການ Swisscontact . ໂຮງແຮມຈຳນວນຫນ້ອຍໄດ້ຍົກບາງຈຸດສຳຄັນກ່ຽວກັບການໃຊ້ວັດສະດຸທາງເລືອກແທນພາດສະຕິກ:

- ສຸຂະອະນາໄມ: ການນຳໃຊ້ວັດສະດຸທາງເລືອກຫຼອດດູດນ້ຳ (ເຊັ່ນ: ໄມ້ໄຜ່ ແລະ ສະແຕນເລດ) ສາມາດເຮັດໃຫ້ເກີດບັນຫາດ້ານສຸຂະອະນາໄມ. ພາກສ່ວນທຸລະກິດການທ່ອງທ່ຽວ ແລະ ການໂຮງແຮມບາງບ່ອນຍັງບໍ່ເຂົ້າໃຈຂໍ້ກຳນົດດ້ານສຸຂາພິບານກັບຜະລິດຕະພັນທີ່ນຳມາໃຊ້ຄືນໄດ້. ການສັງເກດການນີ້ນຳໄປສູ່ການສຶກສາເພີ່ມເຕີມດ້ານສຸຂະອະນາໄມ ແລະ ການສື່ສານຂອງການປະຕິບັດທີ່ດີທີ່ສຸດພາຍໃຕ້ອົງປະກອບ 3.

- ຕະຫຼາດ: ໂຮງແຮມ ແລະ ຮ້ານອາຫານບາງແຫ່ງພະຍາຍາມຫາຜະລິດຕະພັນທົດແທນປລາສຕິກ (ໂດຍສະເພາະຂວດປລາສຕິກ). ເຖິງຢ່າງໃດກໍຕາມ, ການຈັດຫາຜະລິດຕະພັນທົດແທນແມ່ນສິ່ງທ້າທາຍອັນໃຫຍ່ຫຼວງ, ເຊິ່ງສິນຄ້າສ່ວນໃຫຍ່ຈະຕ້ອງຖືກນຳເຂົ້າໂດຍສະຖາບັນສ່ວນບຸກຄົນ, ເຊິ່ງມີຕົ້ນທຶນທີ່ສູງ. ການສັງເກດນີ້ໄດ້ນຳໄປສູ່ການເພີ່ມ ການສຶກສາທີ່ລະບຸຊ່ອງຫວ່າງ ແລະ ໂອກາດຂອງຕະຫຼາດ (ທາງອອນໄລນ໌/ຕົວຈິງ) ໃນ ສປປ ລາວ ພາຍໃຕ້ອົງປະກອບທີ 2.
- ຕົ້ນທຶນ: ຜູ້ຂາຍອາຫານ ແລະ ເຄື່ອງດື່ມຈຳນວນໜຶ່ງ, ລວມທັງຜູ້ຂາຍຕາມຖະໜົນ, ໄດ້ອະທິບາຍເຖິງວິທີທີ່ເຂົາເຈົ້າພະຍາຍາມໃຊ້ວັດສະດຸອື່ນແທນປລາສຕິກ (ລວມທັງຜູ້ຂາຍທີ່ໃຊ້ໃບຕອງຫໍ່ອາຫານ ແຕ່ຍັງໃຊ້ຖົງຢາງ ເພື່ອໃຫ້ຜູ້ຊື້ສາມາດຫິ້ວເອົາອາຫານໄປເຮືອນໄດ້, ເນື່ອງຈາກ ຖົງເຈ້ຍທີ່ຈະໃຊ້ແທນ ແມ່ນລາຄາແພງເກີນໄປ). ຈຸດສັງເກດເຫຼົ່ານີ້ໄດ້ເຮັດໃຫ້ເຫັນເຖິງຄວາມສຳຄັນໃນການທີ່ຈະສາມາດຮັບປະກັນວ່າ ຜະລິດຕະພັນທາງເລືອກຕ້ອງສາມາດໃຊ້ງານໄດ້ຈິງຢ່າງຄ້າຍຄືກັນກັບປລາສຕິກທີ່ນຳໃຊ້ແຕ່ເທື່ອດຽວ ແລະ ມີຈຸດກຸ້ມທຶນທີ່ໃກ້ຄຽງກັນ ມີຄວາມເປັນໄປໄດ້ທີ່ຈະທົດແທນກັນ, ໂດຍສະເພາະເມື່ອພິຈາລະນາເຖິງຕົ້ນທຶນທີ່ຕ່ຳ ຂອງລາຄາອາຫານທີ່ຂາຍໂດຍຜູ້ຂາຍຕາມຖະໜົນໃຫ້ກັບປະຊາຊົນລາວຈຳນວນຫຼາຍ (ເຊັ່ນ: ການຫຸ້ມຫໍ່ລາຄາແພງຈະບໍ່ໄດ້ຜົນຢູ່ໃນຊ່ອງທາງການຂາຍຍ່ອຍນີ້). ການສັງເກດເຫຼົ່ານີ້ຍັງນຳໄປສູ່ການສຳຫຼວດຄວາມເຕັມໃຈທີ່ຈະຈ່າຍ, ເຊິ່ງຈະເປັນສ່ວນໜຶ່ງ ຂອງການຄົ້ນຄວ້າຕະຫຼາດພາຍໃຕ້ອົງປະກອບ 3.

**<u>ກອງປະຊຸມສຳມະນາ ແລະ ການຍ່າງສຳຫຼວດພື້ນທີ່ຕົວຈິງໃນເມືອງຫຼວງພະບາງ</u>**

***ກອງປະຊຸມສຳມະນາ:*** ກອງປະຊຸມສຳມະນາຄັ້ງທີ 2 ນີ້ ໄດ້ຖືກຈັດຂຶ້ນໃນວັນທີ 12/01/2024, ໂດຍມີຜູ້ເຂົ້າຮ່ວມ 30 ທ່ານ. ແນວຄວາມຄິດຂອງໂຄງການທີ່ເນັ້ນໃສ່ຕົ້ນນ້ຳທີ່ກ່ຽວຂ້ອງກັບປລາສຕິກ ແມ່ນໄດ້ຮັບການຕອບຮັບເປັນຢ່າງດີ, ໂດຍສະເພາະຈາກທຸລະກິດການທ່ອງທ່ຽວ ແລະ ການໂຮງແຮມຂອງພາກເອກະຊົນຫຼາຍແຫ່ງ (ເຊິ່ງພວກເຂົາກ່າວວ່າ ໄດ້ລໍຖ້າໂຄງການແບບນີ້ມາຫຼາຍປີແລ້ວ, ໂດຍສະເພາະແມ່ນໂຄງການນີ້ເນັ້ນໃສ່ທຸລະກິດ ແລະ ພາກເອກະຊົນເປັນຫຼັກ). ມີປະເດັນສຳຄັນຫຼາຍປະເດັນ, ທີ່ຊ່ວຍໃນການອອກແບບໂຄງການ:

  - ຄວາມໝັ້ນຄົງທາງດ້ານການເງິນ: ປະເດັນສຳຄັນທີ່ໄດ້ຮັບການກ່າວເຖິງ ແມ່ນຄວາມຈຳເປັນດ້ານຄວາມໝັ້ນຄົງຫຼັງຈາກໂຄງການ GEF ສິ້ນສຸດລົງ, ທີ່ຜ່ານມາໄດ້ສັງເກດເຫັນວ່າ ໂຄງການພັດທະນາຈຳນວນຫຼາຍລົ້ມເຫລວໃນດ້ານນີ້. ປະເດັນນີ້ໄດ້ເນັ້ນຢ້ຳເຖິງຄວາມສຳຄັນຂອງການນຳໃຊ້ແນວທາງທາງທຸລະກິດແທນການສ້າງການຮັບຮູ້ທົ່ວໄປ. ໂດຍສະເພາະໃນອົງປະກອບ 2 ແລະ 3, ທີ່ໄດ້ມີກິດຈະກຳທີ່ສຳຄັນ (ໃນການສະໜັບສະໜຸນທຸລະກິດ ແລະ ການຕະຫຼາດ) ໂດຍແນໃສ່ການຮັບປະກັນວ່າທຸລະກິດສາມາດມີກຳໄລ ແລະ ສ້າງຄວາມໝັ້ນຄົງໃຫ້ຕົວເອງເຖິງແມ່ນວ່າໂຄງການຈະສິ້ນສຸດລົງກໍຕາມ.
  - ຕົ້ນທຶນ: ເຊັ່ນດຽວກັນກັບເມືອງວັງວຽງ, ຕົ້ນທຶນໃນການຜະລິດວັດສະດຸທາງເລືອກແທນປລາສຕິກກໍໄດ້ຖືກຍົກຂຶ້ນມາເຊັ່ນກັນ. ດັ່ງນັ້ນ, ຈຶ່ງມີຄວາມຈຳເປັນທີ່ຈະຕ້ອງຫຼຸດຕົ້ນທຶນໃນການຜະລິດວັດສະດຸທົດແທນລົງ (ຕາມອົງປະກອບ 2 ແລະ ການປັບປຸງປະສິດທິພາບການຜະລິດ), ແລະ ຕ້ອງໄດ້ມີການປະຊາສຳພັນເຖິງຄຸນຄ່າແລະ ຜົນປະໂຫຍດຂອງຜະລິດຕະພັນທົດແທນເຫຼົ່ານີ້.

- ການອອກໃບຢັ້ງຢືນ: ຜູ້ເຂົ້າຮ່ວມບາງທ່ານຈາກພາກສ່ວນເອກະຊົນ ໄດ້ຍົກໃຫ້ເຫັນຄວາມສຳຄັນຂອງການຢັ້ງຢືນ (ຕົວຢ່າງ: ລາວຍືນຍາວ Lasting Laos) ແລະ ສະໜັບສະໜູນໃຫ້ທຸລະກິດຕ່າງໆສະໝັກເຂົ້າຮ່ວມ, ໂດຍຊີ້ໃຫ້ເຫັນວ່າ ຖ້າທຸລະກິດ ການທ່ອງທ່ຽວ ແລະ ການໂຮງແຮມທັງໝົດໄດ້ຍົກລະດັບມາດຕະຖານ, ເມືອງຫຼວງພະບາງຈະເປັນແຫຼ່ງທ່ອງທ່ຽວທີ່ໄດ້ຮັບຜົນປະໂຫຍດ. ຈຸດນີ້ໄດ້ເສີມຂະຫຍາຍຄວາມສຳຄັນຂອງວຽກງານພາຍໃຕ້ອົງປະກອບ 1 ເພື່ອສ້າງຄວາມເຂັ້ມແຂງ ການອອກໃບຢັ້ງຢືນ.
- ຜູ້ນຳ: ປະເດັນຄວາມສຳຄັນວ່າດ້ວຍການສົ່ງເສີມແນວທາງການປະຕິບັດທີ່ດີທີ່ສຸດໄດ້ຖືກຍົກຂຶ້ນມາ, ແລະຜູ້ນຳ (ເຊັ່ນ: ທຸລະກິດທີ່ໄດ້ຮັບການຢັ້ງຢືນແລ້ວ) ຖືກນຳໃຊ້ເພື່ອຊ່ວຍໃນເລື່ອງນີ້. ປະເດັນນີ້ເຮັດໃຫ້ເກີດມີການເພີ່ມກິດຈະກຳເສີມທີ່ຈະນຳໃຊ້ເພື່ອເຜີຍແຜ່ການປະຕິບັດທີ່ດີທີ່ສຸດ ທີ່ຈະຖືກດຳເນີນການໂດຍພາກສ່ວນທຸລະກິດໃນຂະແໜງການທ່ອງທ່ຽວ ແລະ ການໂຮງແຮມຈຳນວນ 60 ແຫ່ງໃນໂຄງການທົດລອງ ເພື່ອຂະຫຍາຍຊຸມຊົນທຸລະກິດໃຫ້ກວ້າງຂວາງຂຶ້ນ.

**ການຍ່າງສຳຫຼວດພື້ນທີ່ຕົວຈິງ**: ການສຳຫຼວດ ໄດ້ຖືກຈັດຂຶ້ນເປັນເວລາ 2 ມື້ ເຊິ່ງລວມເຖິງການລົງຢ້ຽມຢາມສະໜາມຂີ້ເຫຍື້ອ, ລວມເຖິງທຸລະກິດທີ່ໄດ້ຮັບການຢັ້ງຢືນພາຍໃຕ້ ໂຄງການລາວຍືນຍາວ Lasting Laos, ແລະ ການລົງຢ້ຽມຢາມທົ່ວໄປໃນຮ້ານອາຫານ, ໂຮງແຮມ, ເຮືອນພັກ, ສະຖານທີ່ທ່ອງທ່ຽວ (ເຊັ່ນ: ນ້ຳຕົກ) ແລະ ຕະຫຼາດ. ມີຈຸດສັງເກດຫຼາຍປະເດັນສຳຄັນ, ທີ່ຊ່ວຍໃນການອອກແບບໂຄງການ:

- ນ້ຳດື່ມ: ປລາສຕິກທີ່ໃຊ້ເທື່ອດຽວຫຼາຍປະເພດໃນຂະແໜງທ່ອງທ່ຽວ ແລະ ການໂຮງແຮມແມ່ນກະຕຸກນ້ຳດື່ມ PET, ລວມທັງຂວດຂະໜາດນ້ອຍທີ່ບໍ່ບັນຈຸນ້ຳຫຼາຍ, ສະນັ້ນ ນີ້ຈຶ່ງເປັນໂອກາດສຳຄັນໃນການຫຼຸດຜ່ອນ ການນຳໃຊ້ປລາສສະຕິກ. ໂຮງແຮມບາງແຫ່ງໄດ້ໃຫ້ບໍລິການເຕີມນ້ຳຊ້ຳ, ເຊິ່ງໃຊ້ຂວດແກ້ວທີ່ມີຝາໂລຫະເຊິ່ງຖືກເຕີມໂດຍ ຜູ້ໃຫ້ບໍລິການ. ຢ່າງໃດກໍ່ຕາມ, ການກຳນົດລາຄາມັດຈຳຂວດທີ່ຂ້ອນຂ້າງສູງ ສາມາດເຮັດໃຫ້ເກີດການສູນເສຍໄດ້ ຖ້າຫາກຂວດແຕກ. ດັ່ງນັ້ນ, ບາງໂຮງແຮມບໍ່ຕ້ອງການທີ່ຈະໃຫ້ເກີດຄ່າບໍລິການເພີ່ມເຕີມເຫຼົ່ານີ້, ໂດຍສະເພາະເມື່ອການຕື່ມ ນ້ຳຊ້ຳມີຄ່າໃຊ້ຈ່າຍທີ່ແພງກວ່າຕຸກປລາສຕິກທີ່ໃຊ້ໄດ້ເທື່ອດຽວ. ພ້ອມດຽວກັນນີ້, ພະນັກງານເອງກໍຕ້ອງໃຊ້ຄວາມລະ ມັດລະວັງຫຼາຍ ເນື່ອງຈາກອາດຈະຖືກຕັດເງິນຄ່າຈ້າງ ຖ້າພວກເຂົາເຮັດຂວດແຕກໂດຍບໍ່ໄດ້ຕັ້ງໃຈ. ນີ້ຍົກສູງຄວາມ ສຳຄັນຂອງຄວາມສົມດຸນຂອງລາຄາແລະ ການກຳນົດການບໍລິການທີ່ດຶງດູດທຸລະກິດ ແລະ ເປັນທີ່ຍອມຮັບຂອງ ພະນັກງານ.
- ສຸຂະອະນາໄມ (ນ້ຳດື່ມ): ບາງໂຮງແຮມໄດ້ໃຊ້ເຫຍືອກນ້ຳ ຫຼື ຂວດເພື່ອເຕີມນ້ຳຊ້ຳ ທີ່ບໍ່ກ່ຽວຂ້ອງກັບຜູ້ໃຫ້ບໍລິການພາກສ່ວນທີສາມ. ຢ່າງໃດກໍ່ຕາມ, ຂວດເຫຼົ່ານີ້ບໍ່ສາມາດອັດຝາໄດ້ຢ່າງຊະນິດ. ເຖິງລູກຄ້າບາງຄົນຈະຮູ້ສຶກບໍ່ກັງວົນ ແຕ່ແນວທາງນີ້ອາດສ້າງຄວາມກັງວົນກ່ຽວກັບດ້ານສຸຂະອະນາໄມແກ່ລູກຄ້າຄົນອື່ນໆໄດ້.
- ສຸຂະອະນາໄມ (ເຄື່ອງໃຊ້ທີ່ນຳມາໃຊ້ຄືນໄດ້): ໂຮງແຮມ ແລະ ຮ້ານອາຫານຫຼາຍແຫ່ງໃຊ້ຫຼອດດູດນ້ຳ ແລະ ໄມ້ຖູ່ ທີ່ນຳໃຊ້ໄດ້ເທື່ອດຽວ (ເຊິ່ງທັງສອງອັນນີ້ມັກຖືກຫຸ້ມຫໍ່ມາດ້ວຍ ປລາສຕິກ). ຄວາມກັງວົນກ່ຽວກັບການປັບປ່ຽນການນຳໃຊ້ປະກອບມີຄ່າໃຊ້ຈ່າຍ ແລະ ສຸຂະອະນາໄມ. ຮ້ານອາຫານບາງແຫ່ງແມ່ນມີຂະໜາດນ້ອຍ ແລະ ມີເຄື່ອງໃຊ້ ນ້ຳຮ້ອນ

ຈຳກັດ, ສະນັ້ນ ຈຶ່ງເປັນສິ່ງສຳຄັນທີ່ຈະຫາວິທີເພື່ອປັບປຸງສຸຂະອະນາໄມຂອງເຄື່ອງໃຊ້ທີ່ນຳມາໃຊ້ຄືນໄດ້. ດ້ານສຸຂາພິບານ ແລະ ສຸຂະອະນາໄມ ຈະເປັນສ່ວນໜຶ່ງທີ່ສຳຄັນຂອງໂຄງການກ່ຽວກັບການໃຊ້ສິ່ງຂອງທີ່ນຳມາໃຊ້ຄືນໄດ້.

<u>ກອງປະຊຸມສຳມະນາ ແລະ ການຢ້ຽມຢາມສຳຫຼວດພື້ນທີ່ຕົວຈິງໃນນະຄອນຫຼວງວຽງຈັນ</u>

***ກອງປະ* ຊຸມສຳມະນາ**: ກອງປະຊຸມສຳມະນາຄັ້ງທີ 3 ນີ້ໄດ້ຈັດຂຶ້ນໃນວັນທີ 07/02/2024, ໂດຍມີຜູ້ເຂົ້າຮ່ວມຈຳນວນ 44 ຄົນ. ກອງປະຊຸມຄັ້ງນີ້ໄດ້ຮັບການເຂົ້າຮ່ວມເປັນຢ່າງດີຈາກພາກລັດ - ໃນລະດັບຊາດ ແລະ ທ້ອງຖິ່ນ), ພ້ອມທັງບັນດາອົງການທີ່ບໍ່ຂຶ້ນກັບພາກສ່ວນລັດຖະບານ ແລະ ພາກເອກະຊົນຈຳນວນໜຶ່ງ. ມີຈຸດສັງເກດຫຼາຍປະເດັນສຳຄັນ, ທີ່ຊ່ວຍໃນການອອກແບບໂຄງການ:

- ຫຼັກການໃນການຂະຫຍາຍຄວາມຮັບຜິດຊອບຂອງຜູ້ຜະລິດ- EPR: ແນວຄວາມຄິດຂອງການນຳສະເໜີຫຼັກການ EPR ແບບສະໝັກໃຈ/ບັງຄັບ ໄດ້ຖືກຍົກຂຶ້ນມາ. ເຖິງແມ່ນວ່າຈະບໍ່ມີການດຳເນີນການສະເພາະໃນສ່ວນຂອງ EPR, ແຕ່ຄາດວ່າຈະມີ ການປະເມີນພາຍໃຕ້ວຽກງານດ້ານນະໂຍບາຍ. ຍິ່ງໄປກວ່ານັ້ນ, Eco-Challenge ພາຍໃຕ້ອົງປະກອບ 2 ໄດ້ຂະຫຍາຍຈາກຜະລິດຕະພັນໄປສູ່ການບໍລິການ, ເຊິ່ງຈະລວມເຖິງລະບົບທີ່ຄືກັບ EPR ອີກດ້ວຍ.
- ປະເດັນອື່ນໆທີ່ໄດ້ຖືກຍົກຂຶ້ນມາໃນກອງປະຊຸມທີ່ຜ່ານມາລວມມີຄວາມເທົ່າທຽມຂອງຕົ້ນທຶນສຸຂະອະນະໄມຂອງຜະລິດຕະພັນທີ່ສາມາດນຳໃຊ້ຄືນໄດ້, ຄວາມຈຳເປັນໃນການອອກໃບຢັ້ງຢືນ, ແລະ ການສະໜັບສະໜູນດ້ານວິຊາການໃຫ້ແກ່ທຸລະກິດ.

ການຢ່າງສຳຫຼວດພື້ນທີ່ຕົວຈິງ*:* ການຢ່າງສຳຫຼວດພື້ນທີ່ຕົວຈິງ ລວມມີການລົງໄປຢ້ຽມຢາມສະໜາມຂີ້ເຫຍື້ອ, ລວມເຖິງຫົວໜ່ວຍທຸລະກິດ ແລະ ຕະຫຼາດທົ່ວໄປ. ນອກນີ້, ຍັງໄດ້ໄປຢ້ຽມຢາມອົງການແມ່ຍິງ ແລະ ຄົນພິການທີ່ຜະລິດເຄື່ອງຫັດຖະກຳ (ເຊັ່ນ: ກະເປົ໋າ, ເຄື່ອງປະດັບ) ຈາກສິ່ງເສດເຫຼືອປລາສຕິກ. ຈຸດສັງເກດຫຼາຍປະເດັນສຳຄັນ, ທີ່ຊ່ວຍໃນການອອກແບບໂຄງການ:

- ການຫ້າມໃຊ້ປລາສຕິກ: ໄດ້ມີການໄປຢ້ຽມຢາມຕະຫຼາດເກົ່າ ຂົວດິນ , ເຊິ່ງກ່ອນໜ້ານີ້ມີຊື່ສຽງໃນເລື່ອງການຫ້າມໃຊ້ຖົງປລາສຕິກໃນທ້ອງຖິ່ນ. ໃນປັດຈຸບັນ, ຕະຫຼາດນີ້ແມ່ນໄດ້ປັບໃຊ້ການບໍລິຫານແບບໃໝ່, ແລະ ການຫ້າມໃຊ້ຖົງປລາສຕິກກໍໄດ້ຖືກຍົກເລີກໄປ. ເຈົ້າຂອງຮ້ານຄ້າໄດ້ຊີ້ແຈງເຖິງຫຼາຍບັນຫາທີ່ກ່ຽວຂ້ອງກັບການຫ້າມນຳໃຊ້ຖົງປລາສຕິກ, ເຊິ່ງໄດ້ປະກອບມີຕົ້ນທຶນ. ເຖິງຢ່າງໃດກໍ່ຕາມ, ສິ່ງສຳຄັນກວ່ານັ້ນແມ່ນຄວາມຈິງທີ່ວ່າພວກເຂົາບໍ່ເຄີຍປຶກສາຫາລືກ່ອນທີ່ການຫ້າມຈະມີຜົນນຳໃຊ້, ເຊິ່ງເຮັດໃຫ້ຄວາມບໍ່ພໍໃຈ ແລະ ການຂາດຄວາມເຂົ້າໃຈ ແລະ ຄວາມຮັບຜິດຊອບ. ບັນດາຂໍ້ສັງເກດເຫຼົ່ານີ້ຈະເປັນປະໂຫຍດກ່ຽວກັບການພັດທະນາບັນດານະໂຍບາຍແຫ່ງຊາດ ແລະ ຄວາມສຳຄັນຂອງການປຶກສາຫາລື ແລະ ສ້າງຄວາມຮັບຮູ້ກ່ອນການນຳໃຊ້ນະໂຍບາຍໃໝ່.
- ຮ້ານເຕີມສິນຄ້າ: ໄດ້ມີການລົງຢ້ຽມຢາມຮ້ານເຕີມສິນຄ້າ, ບ່ອນທີ່ລູກຄ້າສາມາດໃຊ້ພາຊະນະຂອງຕົນເອງເພື່ອເຕີມຜະລິດຕະພັນໃນຄົວເຮືອນ (ເຊັ່ນ: ແຟ້ບຊັກເຄື່ອງ ແລະ ຢາສະຜົມ) ແລະ ສິນຄ້າອາຫານ. ພະນັກງານສັງເກດເຫັນວ່າລູກຄ້າສ່ວນໃຫຍ່ເປັນຊາວຕ່າງຊາດ. ການໃຊ້ວິທີການເຕີມສິນຄ້າສາມາດໃຫ້ເປັນທາງເລືອກໃນການຫຼຸດພົ້ນ

ຈາກການນໍາໃຊ້ບັນຈຸພັນແບບທົດລອງຂະໜາດນ້ອຍທີ່ຄົນລາວຫຼາຍຄົນຊື້ຄືແຊມພູ ແລະ ແຟັບຊັກເຄື່ອງ (ເຊິ່ງມັກຈະເກີດຈາກການທີ່ພວກເຂົາບໍ່ສາມາດຊື້ເປັນຂວດໃຫຍ່ໄດ້ ໃນຄັ້ງດຽວ). ດັ່ງນັ້ນ, ຈຶ່ງເຫັນໄດ້ເຖິງທ່າແຮງທີ່ແທ້ຈິງສໍາລັບລະບົບການໃຊ້ຊໍ້າ ແລະ ຮ້ານຄ້າ, ແຕ່ກໍຕ້ອງໄດ້ການຍອມຮັບຈາກປະຊາຊົນທົ່ວໄປນໍາ.

## 5. ແຜນການມີສ່ວນຮ່ວມຂອງພາກສ່ວນກ່ຽວຂ້ອງ

ຈຸດປະສົງຂອງແຜນການມີສ່ວນຮ່ວມຂອງພາກສ່ວນກ່ຽວຂ້ອງນີ້ ແມ່ນເພື່ອຮັບປະກັນການມີສ່ວນຮ່ວມທີ່ເໝາະສົມ ແລະ ສອດຄ່ອງຂອງຜູ້ມີສ່ວນກ່ຽວຂ້ອງຂອງໂຄງການໃນທຸກຂັ້ນຕອນຂອງການຈັດຕັ້ງປະຕິບັດໂຄງການ, ສະໜັບສະໜູນການສື່ສານທີ່ມີປະສິດທິພາບ ແລະ ສ້າງຄວາມສໍາພັນການເຮັດວຽກທີ່ດີ. ໜ່ວຍງານຄຸ້ມຄອງໂຄງການ (PMU) ຈະຮັບປະກັນວ່າທັດສະນະ ແລະ ຂໍ້ສະເໜີຈາກພາກສ່ວນກ່ຽວຂ້ອງຈະໄດ້ຖືກນໍາມາພິຈາລະນາຕະຫຼອດການຈັດຕັ້ງປະຕິບັດໂຄງການ.

C= ອົງປະກອບ; PSC = ຄະນະກໍາມະການຊີ້ນໍາໂຄງການ

| ປະເພດຜູ້ມີສ່ວນ ກ່ຽວຂ້ອງ | ຊື່ | ຄວາມຖີ່ຂອງການມີສ່ວນພົວພັນ/ປີໂຄງການ | ການມີສ່ວນຮ່ວມໃນລະຫວ່າງການຈັດຕັ້ງປະຕິບັດໂຄງການ |
|---|---|---|---|
| ລັດຖະບານ ສປປ ລາວ | ກົມແຜນການ ແລະ ການເງິນ (DPF), ກະຊວງຊັບພະຍາກອນທໍາມະຊາດ ແລະ ສິ່ງແວດລ້ອມ (ກຊສ) | ດໍາເນີນການຕໍ່ເນື່ອງ - ການລາຍງານໃນ PSC, ກອງປະຊຸມສໍາມະນາ ແລະ ການພົບປະເຊິ່ງໜ້າ, ອີເມວ, ໂທລະສັບ<br>ໄລຍະເວລາ: 1-5 ປີ | - ການກະກຽມ ແລະ ສະຫຼຸບບົດບັນທຶກຄວາມເຂົ້າໃຈ (MOU) ລະຫວ່າງລັດຖະບານລາວ GOL ແລະ ອົງການ WWF-Laos ກ່ຽວກັບການຄຸ້ມຄອງໂຄງການ, ການດໍາເນີນງານ, ການຈັດສັນການຈັດຕັ້ງປະຕິບັດ ແລະ ການລາຍງານ.<br>- ການເຂົ້າຮ່ວມໃນການແລກປ່ຽນຄວາມຮູ້ຂອງ C4, ກອງປະຊຸມສໍາມະນາ, ແລະກອງປະຊຸມລະດັບພາກພື້ນ / ໂລກ/ກອງປະຊຸມໃຫຍ່. |
| | ກົມສິ່ງແວດລ້ອມ (DOE), ກະຊວງຊັບພະຍາກອນທໍາມະຊາດ ແລະ ສິ່ງແວດລ້ອມ (ກຊສ) | ດໍາເນີນການຕໍ່ເນື່ອງ- ກອງປະຊຸມສໍາມະນາ, ການພົບປະເຊິ່ງໜ້າ, ອີເມວ, ໂທລະສັບ ການລາຍງານໃນ PSC<br>ໄລຍະເວລາ: 1-5 ປີ | - ຫົວໜ້າໜ່ວຍງານປະຕິບັດໂຄງການ<br>- ປະທານກອງປະຊຸມຄະນະກໍາມະການຊີ້ນໍາໂຄງການ (PSC)<br>- ຈະເປັນເຈົ້າພາບໃນການແຕ່ງຕັ້ງຄະນະຄຸ້ມຄອງໂຄງການ PMU.<br>- ອອກນະໂຍບາຍ ແລະລະບຽບການທີ່ກ່ຽວຂ້ອງ.<br>- ຈັດການການຊ່ວຍເຫຼືອດ້ານວິຊາການພາຍໃຕ້ C1<br>- ການເຂົ້າຮ່ວມໃນການແລກປ່ຽນຄວາມຮູ້ C4, ກອງປະຊຸມສໍາມະນາ, ແລະກອງປະຊຸມລະດັບພາກພື້ນ / ໂລກ/ກອງປະຊຸມໃຫຍ່.<br>- ການເຂົ້າຮ່ວມໃນກອງປະຊຸມສໍາມະນາແລະກິດຈະກໍາທີ່ສໍາຄັນພາຍໃຕ້ C2 ແລະ C3. |

| | | | |
|---|---|---|---|
| | ກະຊວງອຸດສາຫະກຳ ແລະ ການຄ້າ (ອຄ) | ທຸກໆ 6 ເດືອນ (ກອງປະຊຸມ PSC); ຕາມທີ່ຈຳເປັນ. ປີທີ 1-5 | - ອອກນະໂຍບາຍ ແລະ ລະບຽບການທີ່ກ່ຽວຂ້ອງ, ລວມທັງພາຍໃຕ້ C1.<br>- ພົວພັນກັບໂຄງການ ໂດຍຜ່ານການມີສ່ວນຮ່ວມໃນ PSC .<br>- ເຂົ້າຮ່ວມກອງປະຊຸມສຳມະນາ, ການຝຶກອົບຮົມ, ແລະ ກິດຈະກຳທີ່ກ່ຽວຂ້ອງກັບໂຄງການ. |
| | ກະຊວງການເງິນ (ກງ) | ທຸກໆ 6 ເດືອນ (ກອງປະຊຸມ PSC); ຕາມທີ່ຈຳເປັນ. ໄລຍະເວລາ: 1-5 ປີ | - ອອກນະໂຍບາຍ ແລະລະບຽບການທີ່ກ່ຽວຂ້ອງ, ລວມທັງພາຍໃຕ້ C1.<br>- ພົວພັນກັບໂຄງການ ໂດຍຜ່ານການມີສ່ວນຮ່ວມໃນ PSC .<br>- ເຂົ້າຮ່ວມກອງປະຊຸມສຳມະນາ, ການຝຶກອົບຮົມ, ແລະ ກິດຈະກຳທີ່ກ່ຽວຂ້ອງກັບໂຄງການ. |
| | ກະຊວງຖະແຫລງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ (ຖວທ), ລວມທັງ ພະແນກຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ ທີ່ກ່ຽວຂ້ອງໃນແຂວງໂຄງການ. | ທຸກໆ 6 ເດືອນ (ກອງປະຊຸມ PSC); ຕາມທີ່ຈຳເປັນ. ໄລຍະເວລາ: 1-5 ປີ | - ພົວພັນກັບໂຄງການ ໂດຍຜ່ານການມີສ່ວນຮ່ວມໃນ PSC.<br>- ໄດ້ຮັບຜົນປະໂຫຍດຈາກກິດຈະກຳການສ້າງຄວາມອາດສາມາດ.<br>- ເຂົ້າຮ່ວມກອງປະຊຸມສຳມະນາ, ການຝຶກອົບຮົມ, ແລະ ກິດຈະກຳທີ່ກ່ຽວຂ້ອງກັບໂຄງການ. |
| | ຫ້ອງການຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມແຂວງ ແລະ ເມືອງ (ພຊສ/ຫຊສ) | ດຳເນີນການຕໍ່ເນື່ອງ- ຕາມທີ່ຈຳເປັນ. ໄລຍະເວລາ: 1-5 ປີ | - ປະສານສົມທົບກັບບັນດາອົງການທີ່ກ່ຽວຂ້ອງໃນເຂດໂຄງການ, ເມືອງ/ແຂວງ.<br>- ສະໜັບສະໜູນໃນການກະກຽມແຜນການເຄື່ອນໄຫວຂອງເມືອງເພື່ອຍົກເລີກການນຳໃຊ້ປລາສຕິກທີ່ໃຊ້ໄດ້ເທື່ອດຽວອັນເປັນບັນຫາ.<br>- ເຂົ້າຮ່ວມກອງປະຊຸມສຳມະນາ, ການຝຶກອົບຮົມ, ແລະກິດຈະກຳທີ່ກ່ຽວຂ້ອງກັບໂຄງການ.<br>- ການສົ່ງເສີມການຮຽນຮູ້ຈາກໂຄງການ. |
| | ການບໍລິຫານຕົວເມືອງ ແລະ ການບໍລິການ | ບາງຄັ້ງ - ຕາມທີ່ຈຳເປັນ ໄລຍະເວລາ: 1-5 ປີ | - ສະໜັບສະໜູນໃນການກະກຽມແຜນການເຄື່ອນໄຫວຂອງເມືອງເພື່ອຍົກເລີກການນຳໃຊ້ປລາສຕິກທີ່ໃຊ້ໄດ້ເທື່ອດຽວອັນເປັນບັນຫາ.<br>- ເຂົ້າຮ່ວມກອງປະຊຸມສຳມະນາ, ການຝຶກອົບຮົມ, ແລະ ກິດຈະກຳທີ່ກ່ຽວຂ້ອງກັບໂຄງການ.<br>- ການສົ່ງເສີມການຮຽນຮູ້ຈາກໂຄງການ. |
| ພາກສ່ວນທີ່ບໍ່ຂຶ້ນກັບລັດຖະບານ | ອົງການ Swisscontacts | ດຳເນີນການຕໍ່ເນື່ອງ- ກອງປະຊຸມສຳມະນາ, ການພົບປະ | - ຜູ້ໄດ້ຮັບທຶນຍ່ອຍ ແລະ  ໜ່ວຍງານຫຼັກທີ່ດຳເນີນ C2. |

| | | | |
|---|---|---|---|
| | | ເຊິ່ງໜ້າ, ອີເມວ, ໂທລະສັບ ການລາຍງານໃນ PSC<br>ໄລຍະເວລາ: 1-5 ປີ | - ຮັບຜິດຊອບການຄຸ້ມຄອງໂຄງການໂດຍລວມ, ລວມທັງງົບປະມານ, ການຈັດການສັນຍາທັງໝົດ, ແລະການຕິດຕາມແລະການລາຍງານຂອງ C2.<br>- ມີສ່ວນຮ່ວມກັບວິສາຫະກິດຜະລິດຕະພັນ ແລະ ການບໍລິການສໍາລັບໂຄງການທົດລອງ. |
| | ອົງການ Plan International Deutschland eV | ດໍາເນີນການຕໍ່ເນື່ອງ-<br>ກອງປະຊຸມສໍາມະນາ, ການພົບປະເຊິ່ງໜ້າ, ອີເມວ, ໂທລະສັບ ການລາຍງານໃນ PSC<br>ໄລຍະເວລາ: 1-5 ປີ | - ຜູ້ໄດ້ຮັບທຶນຍ່ອຍ ແລະ ໜ່ວຍງານຫຼັກທີ່ດໍາເນີນ C3 ແລະກິດຈະກໍາພາຍໃຕ້ C1<br>- ຮັບຜິດຊອບການຄຸ້ມຄອງໂຄງການໂດຍລວມ, ລວມທັງງົບປະມານ, ການຈັດການສັນຍາທັງໝົດ, ແລະການຕິດຕາມແລະການລາຍງານຂອງ C3.<br>- ມີສ່ວນຮ່ວມກັບຫົວໜ່ວຍທຸລະກິດການທ່ອງທ່ຽວ ແລະ ການໂຮງແຮມສໍາລັບໂຄງການທົດລອງ. |
| ພາກສ່ວນເອກະຊົນ | ສະພາການຄ້າ ແລະ ອຸດສາຫະກໍາແຫ່ງຊາດລາວ (ສຄອຊ) | ດໍາເນີນການຕໍ່ເນື່ອງ-<br>ກອງປະຊຸມສໍາມະນາ, ການພົບປະເຊິ່ງໜ້າ, ອີເມວ, ໂທລະສັບ ການລາຍງານໃນ PSC<br>ໄລຍະເວລາ: 1-5 ປີ | - ໄດ້ຮັບ ການສະໜັບສະໜູນສໍາລັບຜູ້ປະເມີນພາຍໃຕ້ C1.<br>- ການຄຸ້ມຄອງລະບົບການຍັ້ງຍືນ – the Lasting Laos<br>- ການອໍານວຍຄວາມສະດວກໃຫ້ແກ່ການມີສ່ວນຮ່ວມຂອງພາກເອກະຊົນ<br>- ເຂົ້າຮ່ວມກອງປະຊຸມສໍາມະນາ, ການຝຶກອົບຮົມ, ແລະ ກິດຈະກໍາທີ່ກ່ຽວຂ້ອງກັບໂຄງການ. |
| | ສະມາຄົມໂຮງແຮມ ແລະ ຮ້ານອາຫານ ແຫ່ງ ສປປ ລາວ | ບາງຄັ້ງ - ຕາມຄວາມຈໍາເປັນ.<br>ປີທີ 1-5 | - ການເປັນຕົວແທນ ແລະ ການອໍານວຍຄວາມສະດວກໃຫ້ແກ່ການມີສ່ວນຮ່ວມຂອງພາກເອກະຊົນ<br>- ການເຂົ້າຮ່ວມກອງປະຊຸມສໍາມະນາ, ການຝຶກອົບຮົມ, ແລະກິດຈະກໍາທີ່ກ່ຽວຂ້ອງກັບໂຄງການ. |
| | ສະມາຄົມການທ່ອງທ່ຽວລາວ (ສທທລ) ແລະ ກຸ່ມທ່ອງທ່ຽວ | ບາງຄັ້ງ - ຕາມຄວາມຈໍາເປັນ.<br>ໄລຍະເວລາ: 1-5 ປີ | - ການເປັນຕົວແທນ ແລະ ການອໍານວຍຄວາມສະດວກໃຫ້ແກ່ການມີສ່ວນຮ່ວມຂອງພາກເອກະຊົນ<br>- ການເຂົ້າຮ່ວມກອງປະຊຸມສໍາມະນາ, ການຝຶກອົບຮົມ, ແລະກິດຈະກໍາທີ່ກ່ຽວຂ້ອງກັບໂຄງການ. |

| | | | |
|---|---|---|---|
| | Markerbox Lao | ດຳເນີນການຕໍ່ເນື່ອງ-<br>ກອງປະຊຸມສຳມະນາ, ການພົບປະເຊິ່ງໜ້າ, ອີເມວ, ໂທລະສັບ ການລາຍງານໃນ PSC<br>ໄລຍະເວລາ: 1-5 ປີ | - ມີສັກກະຍະພາບພຽງພໍທີ່ຈະໄດ້ຮັບການວ່າຈ້າງຈາກອົງການ Swisscontact ເພື່ອສະໜັບສະໜູນການ ບົ່ມເພາະ ທຸລະກິດ, Eco-Challenge ແລະ ໂຄງການສົ່ງເສີມທຸລະກິດເພື່ອເລັ່ງການເຕີບໂຕ.<br>- ການເຂົ້າຮ່ວມກອງປະຊຸມສຳມະນາ, ການຝຶກອົບຮົມ, ແລະກິດຈະກຳທີ່ກ່ຽວຂ້ອງກັບໂຄງການ |
| | Econox | ດຳເນີນການຕໍ່ເນື່ອງ-<br>ກອງປະຊຸມສຳມະນາ, ການພົບປະເຊິ່ງໜ້າ, ອີເມວ, ໂທລະສັບ ການລາຍງານໃນ PSC<br>ໄລຍະເວລາ: ປີທີ 1-5 | - ມີສ່ວນຮ່ວມກັບອົງການ Plan International ແລະ ສຄອຊໃນການສະໜັບສະໜູນ ໂຄງການການຍັ້ງຢືນ - Plastic Free Laos Label.<br>- ມີສັກກະຍະພາບພຽງພໍທີ່ຈະໄດ້ຮັບການວ່າຈ້າງຈາກອົງການ Plan International ເພື່ອຊ່ວຍໃນການສະໜັບສະໜູນທຸລະກິດການທ່ອງທ່ຽວ ແລະ ການໂຮງແຮມໃນໂຄງການທົດລອງ.<br>- ການເຂົ້າຮ່ວມກອງປະຊຸມສຳມະນາ, ການຝຶກອົບຮົມ, ແລະກິດຈະກຳທີ່ກ່ຽວຂ້ອງກັບໂຄງການ. |
| ວິສາຫະກິດຜະລິດຕະພັນ ແລະ ການບໍລິການ | ຈະໄດ້ມີການຢືນຢັນໃນລະຫວ່າງການຝຶກອົບຮົມດ້ານທຸລະກິດ | ດຳເນີນການຕໍ່ເນື່ອງ ໄລຍະເວລາ: ປີທີ 1-5<br>ໂດຍຜ່ານການສະໜັບສະໜູນໂດຍກົງ | - ການເຂົ້າຮ່ວມການຝຶກອົບຮົມດ້ານທຸລະກິດ ແລະ Eco-Challenge.<br>- ຜູ້ຊະນະທ້າຄົນທີ່ຈະໄດ້ຮັບການສະໜັບສະໜູນດ້ານວິຊາການ ແລະ ທຸລະກິດໃນໄລຍະສາມປີ.<br>- ການວິໄຈຕະຫຼາດ ແລະ ການໂຄສະນາເພື່ອຊ່ວຍສົ່ງເສີມຂໍ້ສະເຫນີຂອງພວກເຂົາ. |
| ທຸລະກິດການທ່ອງທ່ຽວ ແລະ ການໂຮງແຮມ ແລະ ພະນັກງານຂອງເຂົາເຈົ້າ | ໄດ້ຮັບການຢືນຢັນໃນລະຫວ່າງການຈັດຕັ້ງປະຕິບັດ | ດຳເນີນການຕໍ່ເນື່ອງ ໄລຍະເວລາ: 2-4 ປີ | - 20 ທຸລະກິດໃນໂຄງການທົດລອງໃນແຕ່ລະເມືອງຈະໄດ້ຮັບການສະໜັບສະໜູນດ້ານວິຊາການແລະທຸລະກິດໃນໄລຍະສາມປີ.<br>- ພະນັກງານໃນໂຄງການທົດລອງທີ່ຈະໄດ້ຮັບການສຳຫຼວດ ແລະ ສະຫນອງການສະໜັບສະໜູນການພັດທະນາຄວາມສາມາດ.<br>- ການສົ່ງເສີມແນວທາງປະຕິບັດທີ່ດີທີ່ສຸດໃຫ້ກັບທຸລະກິດອື່ນ. |
| | AFD<br>ທະນາຄານໂລກ | ບາງຄັ້ງ - ຕາມຄວາມຈຳເປັນ | - ສະໜອງຂໍ້ມູນອັບເດດເຊິ່ງກັນແລະກັນກ່ຽວກັບການພັດທະນາໂຄງການ ແລະ ການຈັດຕັ້ງປະຕິບັດກິດຈະກຳ. |

| | | | |
|---|---|---|---|
| ກອງທຶນ ສິ່ງແວດລ້ອມ ໂລກ ຫຼາຍຝ່າຍ | ທະນາຄານພັດທະນາອາຊີ (ADB) | ໄລຍະເວລາ: 1-5 ປີ | - ເຂົ້າຮ່ວມກອງປະຊຸມສຳມະນາ ແລະ ງານທີ່ກ່ຽວຂ້ອງກັບໂຄງການ |
| | GGGI | | |
| | ອື່ນໆ | | |
| ອົງການຈັດຕັ້ງ ມະຫາຊົນ | ສະຫະພັນແມ່ຍິງລາວ; ສະຫະພັນຊາວໜຸ່ມລາວ | ບາງຄັ້ງ - ຕາມຄວາມຈຳເປັນ<br>ປີ 1-5 | - ເຂົ້າຮ່ວມກອງປະຊຸມສຳມະນາປຶກສາຫາລື, ການຝຶກອົບຮົມ, ກອງປະຊຸມ, ແລະກິດຈະກຳທີ່ສຳຄັນຕ່າງໆ.<br>- ການເຜີຍແຜ່ການສ້າງຈິດສຳນຶກ ແລະ ການສົ່ງເສີມຜະລິດຕະພັນ ແລະ ການບໍລິການຫຼັກ. |
| ອົງການ NGO ທີ່ເຮັດວຽກກ່ຽວກັບບັນຫາຂີ້ເຫຍື້ອ | Zerowaste Laos, Green Vientiane | ບາງຄັ້ງ - ຕາມຄວາມຈຳເປັນ<br>ໄລຍະເວລາ: 1-5 ປີ | - ເຂົ້າຮ່ວມກອງປະຊຸມສຳມະນາປຶກສາຫາລື, ການຝຶກອົບຮົມ, ກອງປະຊຸມ, ແລະກິດຈະກຳທີ່ສຳຄັນຕ່າງໆ.<br>- ການເຜີຍແຜ່ການສ້າງຈິດສຳນຶກ ແລະ ການສົ່ງເສີມຜະລິດຕະພັນ ແລະ ການບໍລິການຫຼັກ. |
| ສະຖາບັນການສຶກສາ | ມະຫາວິທະຍາໄລແຫ່ງຊາດ | ບາງຄັ້ງ - ຕາມຄວາມຈຳເປັນ<br>ໄລຍະເວລາ: 1-5 ປີ | - ມີສັກກະຍາພາບທີ່ຈະຖືກໃຊ້ເຂົ້າໃນການ ສະໜັບສະໜູນ ວິທີການໃນການປະເມີນພື້ນຖານຂອງທຸລະກິດການທ່ອງທ່ຽວແລະການໂຮງແຮມ. |

ໂຄງການດັ່ງກ່າວໄດ້ກະກຽມແຜນດຳເນີນງານທາງດ້ານບົດບາດຍິງ-ຊາຍ ໂດຍອີງໃສ່ຜົນການວິໄຈບົດບາດຍິງ-ຊາຍ ເບື້ອງຕົ້ນ ແລະ ການເກັບກຳຂໍ້ມູນເພີ່ມໃນເຂດເປົ້າໝາຍຂອງໂຄງການຄື: ນະຄອນຫຼວງວຽງຈັນ, ຫຼວງພະບາງ ແລະ ວັງວຽງ. ແຜນປະຕິບັດງານບົດບາດຍິງຊາຍເຮັດໜ້າທີ່ເປັນກອບການສົ່ງເສີມບົດບາດຍິງຊາຍຕະຫຼອດການຈັດຕັ້ງປະຕິບັດໂຄງການ, ໂດຍຊ່ວຍໃຫ້ອົງການ WWF ແລະ ອົງການພັນທະມິດສາມາດ ດຳເນີນການຄອບຄຸມທາງສັງຄົມ ແລະ ການແຊກແຊງນະວັດຕະກຳທີ່ມີປະໂຫຍດຕໍ່ຄົນ ແລະ ທຳມະຊາດ. ແຜນການດັ່ງກ່າວຍັງ ໄດ້ກຳນົດ ຈຸດສຳຄັນສຳລັບຂໍ້ລິເລີ່ມການຫັນປ່ຽນທາງທີ່ຄອບຄຸມທາງດ້ານບົດບາດຍິງຊາຍ ແລະ ສັງຄົມພາຍໃນກິດຈະກຳໂຄງການ; ອີກທັງຍັງແກ້ໄຂຊ່ອງຫວ່າງ ແລະ ຄວາມສ່ຽງທີ່ອາດເກີດຂຶ້ນພາຍໃຕ້ໂຄງການເພື່ອພັດທະນາຍຸດທະສາດການຫຼຸດຜ່ອນສ່ຽງ, ແລະການບູລະນາການດ້ານບົດບາດຍິງຊາຍ ແລະ ສັງຄົມຢ່າງຄົບຖ້ວນໃນທົ່ວຜົນໄດ້ຮັບຂອງໂຄງການ. ເບິ່ງທີ່ເອກະສານຊ້ອນທ້າຍ 6: ການວິເຄາະບົດບາດຍິງ-ຊາຍ/ແຜນການປະຕິບັດບົດບາດຍິງຊາຍ, ຈາກຄຳຂໍການອະນຸມັດ ຂອງ WWF GEF-8 CEO ສຳລັບ FSP ແລະ MSP.

## 6. ຊັບພະຍາກອນ ແລະ ຄວາມຮັບຜິດຊອບ

ໜ່ວຍງານ WWF GEF ມີຄວາມຮັບຜິດຊອບໃນການກວດສອບກຳກັບ. ໜ່ວຍງານຜູ້ດຳເນີນການຫຼັກແມ່ນຮັບຜິດຊອບໃນການປະຕິບັດແຜນການມີສ່ວນຮ່ວມຂອງພາກສ່ວນກ່ຽວຂ້ອງ ແລະ ການປະຕິບັດຕາມມາດຕະຖານ WWF ວ່າດ້ວຍແຜນການມີສ່ວນຮ່ວມຂອງພາກສ່ວນກ່ຽວຂ້ອງ. ຜູ້ຈັດການໂຄງການຈະຖືກບັນຈຸເຂົ້າໃນໜ່ວຍງານຄຸ້ມຄອງໂຄງການ

(PMU) ທີ່ຕັ້ງຢູ່ ກົມສິ່ງແວດລ້ອມ (ກຊສ) ເພື່ອຮັບປະກັນການປະຕິບັດງານໂດຍລວມຂອງແຜນການມີສ່ວນຮ່ວມຂອງພາກສ່ວນກ່ຽວຂ້ອງ ແລະ ການປະຕິບັດຕາມມາດຕະຖານ WWF ກ່ຽວກັບແຜນການມີສ່ວນຮ່ວມຂອງພາກສ່ວນກ່ຽວຂ້ອງ. ລາວ/ນາງຈະກວດກາການຈັດຕັ້ງປະຕິບັດແຜນການມີສ່ວນຮ່ວມຂອງພາກສ່ວນກ່ຽວຂ້ອງໃນລະດັບໂຄງການໂດຍລວມ.

ອົງການ Swisscontact ແລະ Plan International ຈະຮັບຜິດຊອບໃນການຄວບຄຸມການມີສ່ວນຮ່ວມຂອງພາກສ່ວນກ່ຽວຂ້ອງກັບພາກເອກະຊົນ ແລະ ສະມາຄົມທຸລະກິດທີ່ກ່ຽວຂ້ອງພາຍໃນອົງປະກອບທີ່ກ່ຽວຂ້ອງ.

ໜ່ວຍງານຄຸ້ມຄອງໂຄງການ ຈະຮັບຜິດຊອບໃນການຮັບຜິດຊອບໃນການຈັດຕັ້ງປະຕິບັດແຜນການມີສ່ວນຮ່ວມຂອງພາກສ່ວນກ່ຽວຂ້ອງ ແລະ ແຜນປະຕິບັດບົດບາດຍິງ-ຊາຍ. ງົບປະມານໄດ້ຖືກຈັດສັນໄວ້ສໍາລັບການເດີນທາງ, ການຕິດຕາມ, ແລະການປະຕິບັດແຜນການມີສ່ວນຮ່ວມຂອງພາກສ່ວນກ່ຽວຂ້ອງ, ແລະແຜນການປະຕິບັດບົດບາດຍິງຊາຍ.

## 7. ກົນໄກການຮ້ອງທຸກ

ກົນໄກການແກ້ໄຂຄໍາຮ້ອງທຸກໄດ້ຖືກອອກແບບເພື່ອໃຫ້ ຮັບຄໍາຮ້ອງທຸກຈາກແມ່ຍິງ ແລະ ຜູ້ຊາຍທີ່ໄດ້ຮັບຜົນກະທົບ ແລະ ຄວາມກັງວົນຂອງສາທາລະນະກ່ຽວກັບການປະຕິບັດດ້ານສິ່ງແວດລ້ອມ ແລະ ສັງຄົມຂອງໂຄງການ. ສະຫຼຸບແລ້ວ, ຈຸດປະສົງຂອງກົນໄກແມ່ນເພື່ອເປີດໂອກາດໃຫ້ປະຊາຊົນຜູ້ທີ່ຢ້ານກົວຫຼືໄດ້ຮັບຜົນກະທົບທາງລົບໄດ້ສະແດງຄວາມຄິດເຫັນ ແລະ ໄດ້ຮັບການຊ່ວຍເຫຼືອ. ມັນໄດ້ຖືກອອກແບບເພື່ອແກ້ໄຂບັນຫາຄວາມກັງວົນຂອງຊຸມຊົນ ກັບໂຄງການທີ່ກ່ຽວຂ້ອງສະເພາະໃດໜຶ່ງ, ລວມເຖິງກໍານົດສາເຫດຂອງຂໍ້ຂັດແຍ່ງ, ແລະຊອກຫາທາງເລືອກສໍາລັບການແກ້ໄຂບັນຫາການຮ້ອງທຸກ. ສະນັ້ນ, ກົນໄກນີ້ຈຶ່ງເປັນເຄື່ອງມືທີ່ຈໍາເປັນໃນການຊຸກຍູ້ການຮ່ວມມືທີ່ດີກັບຜູ້ມີສ່ວນຮ່ວມຂອງໂຄງການ ແລະ ຮັບປະກັນການດໍາເນີນງານທີ່ໄດ້ຮັບໝາກຜົນຕາມທີ່ໄດ້ຕົກລົງກັນໃນເມື່ອກ່ອນຢ່າງພຽງພໍ.

ກົນໄກນີ້ຖືກອອກແບບມາເພື່ອ:

- ແກ້ໄຂການລະເມີດນະໂຍບາຍ ແລະ ຂັ້ນຕອນຂອງ WWF ທີ່ອາດຈະເກີດຂຶ້ນ.
- ເປັນເອກະລາດ, ໂປ່ງໃສ, ແລະມີປະສິດທິຜົນ.
- ຜູ້ທີ່ໄດ້ຮັບຜົນກະທົບຈາກໂຄງການຕ້ອງສາມາດເຂົ້າເຖິງກົນໄກດັ່ງກ່າວໄດ້.
- ເຮັດໃຫ້ຜູ້ຮ້ອງທຸກນໍາທັນກັບຄວາມຄືບໜ້າຂອງຄະດີທີ່ຍື່ນຟ້ອງ.
- ຮັກສາການບັນທຶກກ່ຽວກັບທຸກກໍລະນີ ແລະ ບັນຫາທີ່ຖືກຍື່ນສະເໜີມາເພື່ອທົບທວນຄືນ.

**ຄະນະຄຸ້ມຄອງໂຄງການຈະຮັບຜິດຊອບໃນການແຈ້ງກ່ຽວກັບກົນໄກການຮ້ອງທຸກໃຫ້ພາກສ່ວນທີ່ໄດ້ຮັບຜົນກະທົບຈາກໂຄງການ** ຂໍ້ມູນການຕິດຕໍ່ຂອງພະນັກງານທີ່ຮັບຜິດຊອບເລື່ອງກົນໄກການຮ້ອງທຸກໃນ ຄະນະຄຸ້ມຄອງໂຄງການ ຈະຖືກເປີດເຜີຍໃຫ້ສາທາລະນະ.

ກົນໄກການຮ້ອງທຸກຂອງອົງການ WWF GEF

ຊຸມຊົນທີ່ໄດ້ຮັບຜົນກະທົບຈາກໂຄງການ ແລະ ຜູ້ມີສ່ວນກ່ຽວຂ້ອງອື່ນໆ ສາມາດຮ້ອງທຸກໄດ້ທຸກເວລາຕໍ່ກັບອົງການ WWF GEF. ຂໍ້ມູນການຕິດຕໍ່ຂອງອົງການ WWF GEF ຈະຖືກເປີດເຜີຍຕໍ່ສາທາລະນະ.

ສາມາດຍື່ນຄຳຮ້ອງທຸກໄດ້ກັບເຈົ້າໜ້າທີ່ທີ່ຮັບເລື່ອງຮ້ອງຮຽນຂອງໂຄງການ (PCO), ສະມາຊິກຂອງ WWF ທີ່ເປັນເອກະລາດຢ່າງເຕັມສ່ວນຈາກອົງການ WWF GEF, ຜູ້ທີ່ຮັບຜິດຊອບກົນໄກການຮ້ອງຮຽນ ແລະ ການຮ້ອງທຸກຂອງ WWF ແລະ ຜູ້ທີ່ສາມາດຕິດຕໍ່ໄດ້ທີ່: Email: SafeguardsComplaint@wwfus.org .

ທີ່ຢູ່ທາງໄປສະນີ:

ເຈົ້າຫນ້າດ້ານກັບຄຸ້ມຄອງການຮ້ອງທຸກຂອງໂຄງການ,

ກອງທຶນສັດປ່າໂລກສາກົນ

1250 24th Street NW

ວໍຊິງຕັນ ດີຊີ 20037

ຄຳຮ້ອງທຸກສາມາດຍື່ນເປັນພາສາແມ່ຂອງຜູ້ທີ່ໄດ້ຮັບຜົນກະທົບ ແລະ ຄວນມີຂໍ້ມູນຕໍ່ໄປນີ້:

- ຊື່ຂອງຜູ້ຮ້ອງທຸກ ແລະຂໍ້ມູນຕິດຕໍ່;
- ຖ້າໄດ້ບໍ່ຍື່ນໂດຍກົງຈາກຜູ້ຮ້ອງຮຽນ, ຕ້ອງມີຫຼັກຖານທີ່ສະແດງ ວ່າຜູ້ຕາງຫນ້າຜູ້ໄດ້ຮັບຜົນກະທົບມີສິດອຳນາດທີ່ຈະຮ້ອງຮຽນ;
- ໂຄງການສະເພາະ ຫຼືໂປຼແກຼມທີ່ກ່ຽວຂ້ອງ;
- ຄວາມເສຍຫາຍທີ່ເປັນຫຼືອາດຈະເປັນຜົນມາຈາກໂຄງການ;
- ນະໂຍບາຍຫຼືຂໍ້ກຳນົດດ້ານການປົກປັກຮັກສາສິ່ງແວດລ້ອມແລະສັງຄົມທີ່ກ່ຽວຂ້ອງ (ຖ້າຮູ້);
- ຂໍ້ມູນ ຫຼືເອກະສານທີ່ກ່ຽວຂ້ອງອື່ນໆ;
- ການດຳເນີນການໃດໆທີ່ໄດ້ເຮັດໄປແລ້ວໃນການແກ້ໄຂບັນຫາ, ລວມທັງການຕິດຕໍ່ WWF;
- ວິທີແກ້ໄຂທີ່ຢາກສະເໜີ; ແລະ
- ຫາກມີການຮ້ອງຂໍໃຫ້ຮັກສາຄວາມລັບ (ລະບຸເຫດຜົນ).

PCO ທີ່ໄດ້ຮັບເລື່ອງຮ້ອງຮຽນ ຈະຕອບກັບພາຍໃນສິບວັນເຮັດວຽກຫຼັງຈາກໄດ້ຮັບຂໍ້ມູນ, ແລະ ການຮຽກຮ້ອງຈະຖືກຍື່ນແລະລວມເຂົ້າໃນການຕິດຕາມໂຄງການ.

ພາກສ່ວນກ່ຽວຂ້ອງອາດສາມາດສົ່ງຄຳຮ້ອງຮຽນອອນໄລນ໌ ຫຼືທາງໂທລະສັບຜ່ານຊ່ອງທາງຂອງພາກສ່ວນທີສາມທີ່ເປັນເອກະລາດ https://secure.ethicspoint.com/domain/media/en/gui/59041/index.html ຫຼື https://report.whistleb.com/en/wwf .

## 8. ການຕິດຕາມແລະການລາຍງານ

ຄວາມຄືບໜ້າຕໍ່ກັບການດຳເນີນຕາມແຜນການມີສ່ວນຮ່ວມຂອງພາກສ່ວນກ່ຽວຂ້ອງຈະຖືກຕິດຕາມ ແລະ ລາຍງານຕະຫຼອດການຈັດຕັ້ງປະຕິບັດ.

ຕໍ່ໄປນີ້ປະກອບດ້ວຍກິດຈະກຳການຕິດຕາມ ແລະ ການລາຍງານທີ່ຈະຕ້ອງດຳເນີນການກ່ຽວກັບການມີສ່ວນຮ່ວມຂອງຜູ້ມີສ່ວນກ່ຽວຂ້ອງ ໂດຍໜ່ວຍງານຄຸ້ມຄອງໂຄງການ **PMU** :

- ແຜນງານມີສ່ວນຮ່ວມຂອງພາກສ່ວນກ່ຽວຂ້ອງ (SEP) ຈະໄດ້ຮັບການທົບທວນ ແລະ ປັບປຸງເປັນໄລຍະຕາມຄວາມຈຳເປັນໃນກອງປະຊຸມການສະຫຼຸບປະຈຳປີ. ການທົບທວນຄືນຈະຮັບປະກັນວ່າລາຍຊື່ຂອງຜູ້ມີສ່ວນກ່ຽວຂ້ອງຂອງໂຄງການ ແລະ ວິທີການມີສ່ວນຮ່ວມຍັງຄົງເໝາະສົມ.
- ກິດຈະກຳທີ່ກ່ຽວຂ້ອງກັບການມີສ່ວນຮ່ວມຂອງຜູ້ມີສ່ວນກ່ຽວຂ້ອງຈະຖືກບັນທຶກແລະລາຍງານໂດຍ PMU ທຸກໆຫົກເດືອນໃນບົດລາຍງານຄວາມຄືບຫນ້າຂອງໂຄງການ (ເປັນສ່ວນຫນຶ່ງຂອງການລາຍງານປົກກະຕິ). ຂອບຜົນໄດ້ຮັບຂອງໂຄງການ, ແຜນວຽກປະຈຳປີ ແລະ ງົບປະມານຈະຕິດຕາມຜູ້ໄດ້ຮັບຜົນປະໂຫຍດຈາກໂຄງການ ແລະ ກິດຈະກຳທີ່ກ່ຽວຂ້ອງກັບແຜນການມີສ່ວນຮ່ວມຂອງຜູ້ມີສ່ວນກ່ຽວຂ້ອງ.
- ການເຄື່ອນໄຫວ ແລະ ຄວາມຄືບໜ້າຂອງການມີສ່ວນຮ່ວມຂອງຜູ້ມີສ່ວນກ່ຽວຂ້ອງຈະຖືກຕິດຕາມຜ່ານຕົວຊີ້ວັດຕໍ່ໄປນີ້:
    - GEF Core Indicator 11 : ຜູ້ທີ່ໄດ້ຮັບຜົນປະໂຫຍດຈາກການສະໜັບສະໜູນເງິນທຶນຂອງ GEF ແບ່ງຕາມເພດ (ຈຳນວນເງິນ), ໂດຍມີເປົ້າໝາຍສຸດທ້າຍຢູ່ທີ່ 56,200 ຄົນ (ຜູ້ຊາຍ 33,740 ຄົນ, ຍິງ 22,460 ຄົນ). ນີ້ປະກອບມີດັ່ງຕໍ່ໄປນີ້:

ພະນັກງານລັດຖະກອນລະດັບຊາດ 100 ຄົນ ແລະ ພະນັກງານລະດັບເມືອງ 300 ຄົນ (ຊາຍ 65%, ຍິງ 35%) ໄດ້ແຈ້ງຊາບ/ຝຶກອົບຮົມກ່ຽວກັບການປະຕິບັດນະໂຍບາຍທີ່ດີທີ່ສຸດກ່ຽວກັບການຫຼຸດຜ່ອນ *SUP* ແບບໝູນວຽນ; ແລະມີສ່ວນຮ່ວມໃນການພັດທະນານະໂຍບາຍ.

ຜູ້ຕາງຫນ້າ 500 ຄົນ (ຊາຍ 60%; ຍິງ 40%) ຈາກທຸລະກິດເຄື່ອງດື່ມ, ອາຫານ ແລະ ການບໂຮງແຮມແມ່ນໄດ້ຮັບຄຳປຶກສາຫາລືເຖິງນະໂຍບາຍ ແລະ ໃຫ້ຂໍ້ສະເໜີແນະໃນການພັດທະນານະໂຍບາຍ.

